| | **93201 ການບໍລິການດ້ານສັດຕະວະແພດສຳລັບສັດລ້ຽງໃນຄົວເຮືອນ**<br><br>ການບໍລິການໂຮງໝໍສຳລັບສັດ ແລະ ສັດຕະວະແພດ ແລະ ການປິ່ນປົວທີ່ບໍ່ແມ່ນໂຮງໝໍ, ການຜ່າຕັດ ແລະ ການບໍລິການທັນຕະກຳ ສະໜອງໃຫ້ແກ່ສັດລ້ຽງໃນຄົວເຮືອນ. ການບໍລິການແມ່ນແນໃສ່ການປິ່ນປົວ, ການຟື້ນຟູ ແລະ/ຫຼື ການຮັກສາສຸຂະພາບຂອງສັດ. ລວມເຖິງ ການບໍລິການໂຮງໝໍ, ຫ້ອງທົດລອງ ແລະ ການບໍລິການດ້ານວິຊາການ, ອາຫານ (ລວມທັງອາຫານສະເພາະສັດເຈັບປ່ວຍ), ແລະ ສິ່ງອຳນວຍຄວາມສະດວກ ແລະ ຊັບພະຍາກອນອື່ນໆ.<br><br>**93209 ການບໍລິການດ້ານສັດຕະວະແພດອື່ນໆ**<br><br>ການບໍລິການໂຮງໝໍສຳລັບສັດ ແລະ ສັດຕະວະແພດ ແລະ ການປິ່ນປົວທີ່ບໍ່ແມ່ນໂຮງໝໍ, ການຜ່າຕັດ ແລະ ການບໍລິການທັນຕະກຳ ສະໜອງໃຫ້ແກ່ສັດ ທີ່ບໍ່ແມ່ນລ້ຽງໃນຄົວເຮືອນ (ລວມ ສັດໃນສວນສັດ ແລະ ສັດທີ່ລ້ຽງສຳລັບເອົາຂົນ ຫຼື ຜະລິດຕະພັນອື່ນໆ). ການບໍລິການແມ່ນແນ່ໃສ່ການປິ່ນປົວ, ການຟື້ນຟູ ແລະ/ຫຼື ການຮັກສາສຸຂະພາບຂອງສັດ. ລວມເຖິງ ການບໍລິການໂຮງໝໍ, ຫ້ອງທົດລອງ ແລະ ການບໍລິການດ້ານວິຊາການ, ອາຫານ (ລວມທັງ ອາຫານສະເພາະສັດເຈັບປ່ວຍ), ແລະ ສິ່ງອຳນວຍຄວາມສະດວກ ແລະ ຊັບພະຍາກອນອື່ນໆ. |
| **10** | **ການສະໜອງການບໍລິການໂດຍ ແພດຜະດຸງຄັນ, ພະຍາບານ, ນັກກາຍະບຳບັດ ແລະ ແພດເຝິກສະເພາະ (CPC 93191)** |
| **93191** | **ການບໍລິການດ້ານການປະສູດ ແລະ ການບໍລິການທີ່ກ່ຽວຂ້ອງ, ການບໍລິການພະຍາບານ, ການບໍລິການດ້ານກາຍະບຳບັດ ແລະ ການແພດເຝິກແອບສະເພາະ.** |
| | ການບໍລິການ ເຊັ່ນ: ການເບິ່ງແຍງໃນຊ່ວງເວລາຖືພາ ແລະ ເກີດລູກ ແລະ ການເບິ່ງແຍງແມ່ພາຍຫຼັງເກີດລູກ.ການບໍລິການໃນຂົງເຂດການພະຍາບານເບິ່ງແຍງ (ໂດຍທີ່ບໍ່ຕ້ອງເຂົ້າໄປປິ່ນປົວຢູ່ໂຮງໝໍ), ການໃຫ້ຄຳແນະນຳ ແລະ ການປ້ອງກັນສຳລັບຄົນເຈັບຢູ່ເຮືອນ, ການເບິ່ງແຍ່ງການເກີດລູກ, ສຸຂະນາໄມຂອງເດັກນ້ອຍ, ອື່ນໆ. ການບໍລິການກາຍະພາບບຳບັດ ແລະ ການແພດເຝິກສະເພາະ ແມ່ນການບໍລິການໃນຂົງເຂດກາຍະພາບບຳບັດ, ການບຳບັດດ້ວຍກາຍະກິດຈະກຳ, ການປະເມີນ ແລະ ບຳບັດດ້ວຍກິດຈະວັດປະຈຳວັນ, ການບຳບັດດ້ານການເວົ້າ, ການບຳບັດດ້ວຍທຳມະຊາດບຳບັດ, ການຝັງເຂັມ, ຄຳແນະນຳດ້ານໂພສະນາການອື່ນໆ. |
| **11** | **ອື່ນໆ** |
| | |
| **B. ການບໍລິການຄອມພິວເຕີ ແລະ ການບໍລິການທີ່ກ່ຽວຂ້ອງ** | |
| **12** | **ການບໍລິການໃຫ້ຄຳປຶກສາກ່ຽວກັບການຕິດຕັ້ງຮາດແວຄອມພິວເຕີ (CPC 841)** |

**841 ການບໍລິການໃຫ້ຄຳປຶກສາກ່ຽວກັບການຕິດຕັ້ງຮາດແວຄອມພິວເຕີ**

**8410 84100 ການບໍລິການດ້ານການໃຫ້ຄຳປຶກສາກ່ຽວກັບການຕິດຕັ້ງຮາດແວຄອມພິວເຕີ**

ການບໍລິການຊ່ວຍເຫຼືອລູກຄ້າໃນການຕິດຕັ້ງຄອມຮາດແວພິວເຕີ (ຕົວຢ່າງ ອຸປະກອນທີ່ສາມາດຈັບຕ້ອງໄດ້) ແລະ ເຄືອຂ່າຍຄອມພິວເຕີ.

| 13 | ການບໍລິການດ້ານການນຳໃຊ້ໂປຣແກຣມຄອມພິວເຕີ (CPC 842) |
|---|---|

**842 ການບໍລິການດ້ານການນຳໃຊ້ຊອຟແວຄອມພິວເຕີ**

ທຸກການບໍລິການ ກ່ຽວຂ້ອງກັບການບໍລິການໃຫ້ຄຳປຶກສາ, ການພັດທະນາ ແລະ ການນຳໃຊ້ຊອຟແວຄອມພິວເຕີ. ຄຳສັບ "ໂປຣແກຣມຄອມພິວເຕີ" ອາດຈະໝາຍເຖິງ ຊຸດຂອງຄຳສັ່ງທີ່ຕ້ອງການ ເພື່ອເຮັດໃຫ້ຄອມພິວເຕີໃຊ້ງານ ແລະ ສື່ສານໄດ້. ຫຼາຍໂປຣແກຣມທີ່ແຕກຕ່າງກັນ ອາດຖືກພັດທະນາ ເພື່ອການນຳໃຊ້ສະເພາະ (ຊອຟແວການນຳໃຊ້), ແລະ ລູກຄ້າອາດຈະມີທາງເລືອກໃດໜຶ່ງໃນການນຳໃຊ້ໂປຣແກຣມທີ່ສຳເລັດພ້ອມໃຊ້ແລ້ວຈາກບ່ອນຂາຍ (ຊຸດຊອຟແວສຳເລັດຮູບ), ການພັດທະນາໂປຣແກຣມສະເພາະສຳລັບຄວາມຕ້ອງການສະເພາະ (ຊອຟແວຄອມພິວເຕີທີ່ສ້າງຂຶ້ນຕາມຄວາມຕ້ອງການຂອງລູກຄ້າ) ຫຼື ການໃຊ້ແບບປະສົມປະສານລະຫວ່າງສອງອັນທີ່ກ່າວມານັ້ນ.

**8421 84210 ການບໍລິການດ້ານການໃຫ້ຄຳປຶກສາລະບົບ ແລະ ຊອຟແວ**

ການບໍລິການທົ່ວໄປກ່ອນການພັດທະນາລະບົບ ແລະ ການນຳໃຊ້ປະມວນຜົນຂໍ້ມູນ. ການບໍລິການນີ້ ອາດແມ່ນການບໍລິການດ້ານການຄຸ້ມຄອງບໍລິຫານ, ການບໍລິການວາງແຜນໂຄງການ, ອື່ນໆ.

**8422 84220 ການບໍລິການດ້ານການວິເຄາະລະບົບ**

ການບໍລິການດ້ານການວິເຄາະ ລວມທັງ ການວິເຄາະຄວາມຕ້ອງການຂອງລູກຄ້າ, ການກຳນົດລາຍລະອຽດດ້ານໜ້າທີ່ການງານ, ແລະ ການສ້າງໜ່ວຍງານ. ພ້ອມນັ້ນ, ຍັງກ່ຽວຂ້ອງກັບການຄຸ້ມຄອງບໍລິຫານໂຄງການ, ການປະສານງານດ້ານເຕັກນິກ ແລະ ການເຊື່ອມໂຍງ ແລະ ການກຳນົດນິຍາມຂອງໂຄງສ້າງດ້ານສະຖາປັດຂອງລະບົບ.

**8423 84230 ການບໍລິການດ້ານການອອກແບບລະບົບ**

ການບໍລິການອອກແບບ ລວມທັງ ການແກ້ໄຂທາງດ້ານເຕັກນິກ, ຊຶ່ງກ່ຽວຂ້ອງກັບ ວິທີການ, ການຮັບປະກັນດ້ານຄຸນນະພາບ, ທາງເລືອກຂອງຊຸດອຸປະກອນຊອຟແວ ຫຼື ເຕັກໂນໂລຊີໃໝ່, ອື່ນໆ.

**8424 84240 ການບໍລິການດ້ານການຂຽນໂປຣແກຣມ**

ການບໍລິການຂຽນໂປຣແກຣມ ລວມທັງ ໄລຍະການນຳໃຊ້, ຕົວຢ່າງ ການຂຽນ, ການແກ້ໄຂບັນຫາຜິດພາດຂອງຮາດແວ ແລະ ຊອຟແວຂອງຄອມພິວເຕີ, ດຳເນີນການທົດສອບ, ແລະ ການກວດແກ້ເອກະສານ.

**8425 84250 ການບໍລິການດ້ານການບຳລຸງຮັກສາລະບົບ**

ການບໍລິການບຳລຸງຮັກສາ ລວມທັງ ການບໍລິການໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອດ້ານເຕັກນິກວິຊາການຂອງການນຳໃຊ້ຊອຟແວຄອມພິວເຕີທີ່ພວມນຳໃຊ້, ການຂຽນຄືນ ຫຼື ການປ່ຽນແປງໂປຣແກຣມ ຫຼື ລະບົບທີ່ມີຢູ່ໃນປະຈຸບັນ, ແລະ ບຳລຸງຮັກສາເອກະສານ ແລະ ຄູ່ມືຂອງຊອຟແວທີ່ໄດ້ປັບປຸງ. ພ້ອມນັ້ນ, ຍັງລວມເຖິງວຽກຂອງຊ່ຽວຊານສະເພາະ ຕົວຢ່າງ ການປັບປ່ຽນ.

| 14 | ການບໍລິການດ້ານການປະມວນຜົນຂໍ້ມູນ (CPC 843) |
|---|---|

**843 ການບໍລິການດ້ານການປະມວນຜົນຂໍ້ມູນ**

**8431 84310 ການບໍລິການດ້ານການກະກຽມຂໍ້ມູນປ້ອນເຂົ້າໃນຄອມພິວເຕີ**

ການບໍລິການບັນທຶກຂໍ້ມູນ ເຊັ່ນ ການພິມຂໍ້ມູນເຂົ້າຜ່ານຄີບອດ, ການສະແກນຜ່ານອຸປະກອນຄອມພິວເຕີ ຫຼື ວິທີການອື່ນໆສຳລັບການປ້ອນຂໍ້ມູນເຂົ້າ.

**8432 84320 ການບໍລິການດ້ານການປະມວນຜົນຂໍ້ມູນ ແລະ ຈັດຂໍ້ມູນໃຫ້ເປັນລະບຽບ**

ການບໍລິການ ເຊັ່ນ ການບໍລິການປະມວນຜົນຂໍ້ມູນ ແລະ ການຈັດຂໍ້ມູນໃຫ້ເປັນລະບຽບ, ການບໍລິການຄຳນວນທາງຄອມພິວເຕີ, ແລະ ການບໍລິການໃຫ້ເຊົ່າເວລາຂອງຄອມພິວເຕີ.

**8433 84330 ການບໍລິການດ້ານການແບ່ງປັນນຳໃຊ້ຄອມພິວເຕີໃນເວລາດຽວກັນ**

ການບໍລິການນີ້ ເບິ່ງຄືກັບປະເພດການບໍລິການທີ່ຄ້າຍຄືກັນໃນຂະແໜງການຍ່ອຍ 84320. ສະເພາະແຕ່ການເຊົ່າເວລາຂອງຄອມພິວເຕີແມ່ນໄດ້ຖືກຊື້ແລ້ວເທົ່ານັ້ນ. ຖ້າການເຊົ່າເວລາຂອງຄອມພິວເຕີໄດ້ຖືກຊື້ຈາກສະຖານທີ່ຂອງລູກຄ້າ, ການບໍລິການດ້ານໂທລະຄົມກໍແມ່ນໄດ້ຖືກຊື້ເຊັ່ນກັນ. ການບໍລິການປະມວນຜົນຂໍ້ມູນ ຫຼື ການຈັດຂໍ້ມູນ ຍັງອາດຖືກຊື້ຈາກສຳນັກງານບໍລິການ. ທັງສອງກໍລະນີ, ການບໍລິການອາດຈະແມ່ນການແບ່ງປັນໃຊ້ຄອມພິວເຕີທີ່ດຳເນີນການໃນເວລາດຽວກັນ. ສະນັ້ນ, ບໍ່ມີຄວາມແຕກຕ່າງຊັດເຈນລະຫວ່າງ 84320 ແລະ 84330.

**8439 84390 ການບໍລິການດ້ານການປະມວນຜົນຂໍ້ມູນອື່ນໆ**

ການບໍລິການ ຊຶ່ງຄຸ້ມຄອງຈັດການການປະຕິບັດງານ ຢ່າງເຕັມສ່ວນຂອງສິ່ງອຳນວຍຄວາມສະດວກຂອງລູກຄ້າພາຍໃຕ້ສັນຍາ: ການບໍລິການຄວບຄຸມຄຸນນະພາບສິ່ງແວດລ້ອມຂອງຫ້ອງຄອມພິວເຕີ; ການບໍລິການຄຸ້ມຄອງຈັດການສ່ວນປະກອບ/ອຸປະກອນຄອມພິວເຕີໃນສະຖານທີ່; ແລະ ການຄຸ້ມຄອງຈັດການໄຫຼວຽນຂອງວຽກຄອມພິວເຕີ ແລະ ການຈໍລະຈອນຂໍ້ມູນ.

| 15 | ການບໍລິການດ້ານຖານຂໍ້ມູນ (CPC 844) |
|---|---|

**844 ການບໍລິການດ້ານຖານຂໍ້ມູນ**

**8440 84400 <u>ການບໍລິການດ້ານຖານຂໍ້ມູນ</u>**

ທຸກການບໍລິການທີ່ສະໜອງໃຫ້ເລີ່ມຈາກຖານຂໍ້ມູນທີ່ເປັນໂຄງສ້າງເບື້ອງຕົ້ນຜ່ານລະບົບເຄືອຂ່າຍການສື່ສານ.

<u>ບໍ່ລວມ</u>: ການບໍລິການສົ່ງຜ່ານຂໍ້ຄວາມ ແລະ ຂໍ້ມູນ (ຕົວຢ່າງ ການບໍລິການດ້ານການປະຕິບັດງານເຄືອຂ່າຍ, ການບໍລິການດ້ານເຄືອຂ່າຍທີ່ເພີ່ມມູນຄ່າ) ຈັດໃນປະເພດລະຫັດ 7523 (ການບໍລິການສົ່ງຂໍ້ຄວາມ ແລະ ຂໍ້ມູນ).

ການບໍລິການດ້ານເອກະສານ ຊຶ່ງປະກອບດ້ວຍ ການກູ້ຂໍ້ມູນຈາກຖານຂໍ້ມູນ ແມ່ນຈັດໃນປະເພດຂະແໜງຍ່ອຍ 96311 (ການບໍລິການ ຫ້ອງສະໝຸດ).

| 16 | ອື່ນໆ (CPC 845+849) |
|---|---|

**845 ການບໍລິການດ້ານການບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ແລະ ອຸປະກອນໃຊ້ສຳລັບຫ້ອງການ ລວມທັງຄອມພິວເຕີ**

**8450 84500 <u>ການບໍລິການດ້ານການບາລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ແລະ ອຸປະກອນເຄື່ອງຈັກຮັບໃຊ້ໃນຫ້ອງການລວມທັງຄອມພິວເຕີ</u>**

ການບໍລິການດ້ານການສ້ອມແປງ ແລະ ບຳລຸງຮັກສາ ເຄື່ອງຈັກໃຊ້ສຳລັບຫ້ອງການ, ຄອມພິວເຕີ ແລະ ອຸປະກອນທີ່ກ່ຽວຂ້ອງ.

**849 ບໍລິການດ້ານຄອມພິວເຕີອື່ນໆ**

**8491 84910 <u>ການບໍລິການດ້ານການກະກຽມຂໍ້ມູນ</u>**

ການບໍລິການດ້ານການກະກຽມຂໍ້ມູນສາລັບລູກຄ້າບໍ່ລວມເອົາບໍລິການປະມວນຜົນຂໍ້ມູນ.

**8499 84990 <u>ການບໍລິການດ້ານຄອມພິວເຕີອື່ນ ທີ່ບໍ່ໄດ້ກາໜົດໄວ້ຢູ່ບ່ອນອື່ນ</u>**

ການບໍລິການອື່ນໆທີ່ກ່ຽວຂ້ອງກັບຄອມພິວເຕີ, ທີ່ບໍ່ໄດ້ຈັດຢູ່ບ່ອນອື່ນ, ຕົວຢ່າງ ການບໍລິການເຝິກອົບຮົມສຳລັບພະນັກງານ ຂອງລູກຄ້າ, ແລະ ການບໍລິການວິຊາຊີບດ້ານຄອມພິວເຕີອື່ນໆ.

**C. ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາ**

| 17 | ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາກ່ຽວກັບວິທະຍາສາດທຳມະຊາດ (CPC 851) |
|---|---|

**851 8510 ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດທຳມະຊາດ ແລະ ວິສະວະກຳມະສາດ**

**85101 <u>ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບຟີສິກສາດ</u>**

| | |
|---|---|
| | ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບຟີສິກສາດ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງຄວາມຮ້ອນ, ແສງ, ແມ່ເຫຼັກໄຟຟ້າ, ດາລາສາດ, ອື່ນໆ.<br><br>**85102 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງກ່ຽວກັບເຄມີສາດ ແລະ ຊີວະສາດ**<br><br>ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບເຄມີສາດ ແລະ ຊີວະສາດ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງດ້ານການເພີ່ມອັດຕາປະຕິກິລິຍາທາງເຄມີຈາກການເພີ່ມສານ (ຄາຕາໄລເຊີ້), ການໝັກ/ບົ່ມ, ກາຍະວິທະຍາ ແລະ ນິເວດວິທະຍາ ຂອງສັດ ແລະ ພືດ, ຈຸລະພືກ, ຈຸລະຊີບ, ອື່ນໆ.<br><br>**85103 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງກ່ຽວກັບວິສະວະກຳມະສາດ ແລະ ເຕັກໂນໂລຊີ**<br><br>ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິສະວະກຳມະສາດ ແລະ ເຕັກໂນໂລຊີ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງດ້ານວິທະຍາສາດປະຍຸກ ແລະ ເຕັກໂນໂລຊີ ສຳລັບການຫຼໍ່ຫຼອມເຫຼັກ, ໂລຫະ, ເຄື່ອງຈັກ, ໄຟຟ້າ, ການສື່ສານ, ເຮືອ, ເຮືອບິນ, ວິສະວະກຳໂຍທາ, ການກໍ່ສ້າງ, ຂໍ້ມູນ, ອື່ນໆ.<br><br>**85104 ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດກະສິກຳ**<br><br>ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດກະສິກຳ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບເຕັກນິກກະສິກຳ, ການປູກຕົ້ນໄມ້ກິນໝາກ, ປ່າໄມ້, ການລ້ຽງສັດ, ການປະມົງ, ອື່ນໆ.<br><br>**85105 ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດການແພດ ແລະ ການຢາ**<br><br>ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດການແພດ ແລະ ການຢາ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບການປິ່ນປົວພະຍາດຕ່າງໆ, ການປ້ອງກັນສຸຂະນາໄມ, ການຢາ, ອື່ນໆ.<br><br>**85109 ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດທຳມະຊາດອື່ນໆ**<br><br>ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດທຳມະຊາດອື່ນໆ. |
| **18** | **ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາກ່ຽວກັບວິທະຍາສາດສັງຄົມ ແລະ ມະນຸດສາດ (CPC 852)** |
| **852 8520 ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາກ່ຽວກັບວິທະຍາສາດສັງຄົມ ແລະ ມະນຸດສາດ**<br><br>**85201 ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວັດທະນະທາວິທະຍາ, ສັງຄົມວິທະຍາ ແລະ ຈິດຕະວິທະຍາ** | |

ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວັດທະນະທຳວິທະຍາ, ສັງຄົມວິທະຍາ ແລະ ຈິດຕະວິທະຍາ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວັນນະຄະດີ, ປັດຊະຍາ , ປະຫວັດສາດ, ສະຫວັດດີການ, ຈິດຕະວິທະຍາດ້ານການສຶກສາ, ອື່ນໆ.

85202 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງກ່ຽວກັບເສດຖະກິດ

ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບເສດຖະກິດ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບບັນດາທິດສະດີເສດຖະກິດ, ການຄຸ້ມຄອງບໍລິການທຸລະກິດ, ການເງິນ, ສະຖິຕິ, ອື່ນໆ.

85203 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງກ່ຽວກັບກົດໝາຍ

ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບກົດໝາຍ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບກົດໝາຍທົ່ວໄປ, ກົດໝາຍແພ່ງ, ອື່ນໆ.

85204 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງກ່ຽວກັບພາສາສາດ ແລະ ພາສາ

ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບພາສາສາດ ແລະ ພາສາ, ລວມທັງ ການບໍລິການການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບໂຄງສ້າງຂອງພາສາສາດ ແລະ ການເຜີຍແຜ່, ພາສາຕ່າງປະເທດ, ອື່ນໆ.

85209 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດສັງຄົມ ແລະ ມະນຸດສາດອື່ນໆ

ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດສັງຄົມ ແລະ ມະນຸດສາດອື່ນໆ.

| 19 | ການບໍລິການດ້ານການຄົ້ນຄວ້າວິໄຈ ແລະ ການພັດທະນາຊຶ່ງລວມສອງສາຂາຂຶ້ນໄປ (CPC 853) |
|---|---|

853 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງທີ່ລວມມີສອງສາຂາວິຊາຂຶ້ນໄປ

8530 ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງທີ່ລວມມີສອງສາຂາວິຊາຂຶ້ນໄປ

ການບໍລິການດ້ານການຄົ້ນຄວ້າ ແລະ ການພັດທະນາທົດລອງທີ່ລວມມີສອງສາຂາວິຊາຂຶ້ນໄປກ່ຽວກັບວິທະຍາສາດລວມມີສອງສາຂາວິຊາຂຶ້ນໄປ, ລວມທັງ ການບໍລິການຄົ້ນຄວ້າ ແລະ ການພັດທະນາທົດລອງກ່ຽວກັບວິທະຍາສາດສະພາບແວດລ້ອມ, ວິສະວະກຳສຶກສາ, ພູມີສາດມະນຸດສາດ, ອື່ນໆ.

**D. ການບໍລິການອະສັງຫາລິມະຊັບ**

| 20 | ກ່ຽວຂ້ອງກັບການເປັນເຈົ້າຂອງ ຫຼື ການໃຫ້ເຊົ່າອະສັງຫາລິມະຊັບ |
|---|---|

821 8210ການບໍລິການອະສັງຫາລິມະຊັບກ່ຽວຂ້ອງກັບການເປັນເຈົ້າຂອງ ຫຼື ການໃຫ້ເຊົ່າອະສັງຫາລິມະຊັບ

**82101 ການບໍລິການເຊົ່າ ຫຼື ໃຫ້ເຊົ່າ ກ່ຽວຂ້ອງກັບການເປັນເຈົ້າຂອງ ຫຼື ການໃຫ້ເຊົ່າອະສັງຫາລິມະຊັບສຳລັບທີ່ຢູ່ອາໄສ**

ການບໍລິການເຊົ່າ ຫຼື ໃຫ້ເຊົ່າ ອະສັງຫາລິມະຊັບທີ່ຢູ່ອາໄສ ໂດຍເຈົ້າຂອງ ຫຼື ຜູ້ເຊົ່າໃຫ້ແກ່ຄົນອື່ນ. ຕົວຢ່າງ ລວມມີເຮືອນ, ຫ້ອງເຊົ່າ, ຕຶກຫ້ອງເຊົ່າ, ອາຄານອາພາດເມັ້ນ, ອາຄານທີ່ນຳໃຊ້ໄດ້ຫຼາຍແບບ ຊຶ່ງຕົ້ນຕໍແມ່ນທີ່ຢູ່ອາໄສ ແລະ ສະຖານທີ່ຢູ່ອາໄສແບບເຄື່ອນທີ່.

ບໍ່ລວມ: ການສະໜອງການບໍລິການທີ່ພັກອາໄສ ໂດຍການດຳເນີນທຸລະກິດໂຮງແຮມ, ໂມເທລ, ເຮືອນຫ້ອງເຊົ່າ, ຫໍພັກ, ສະຖານທີ່ຕັ້ງຄ້າຍ ແລະ ສະຖານທີ່ພັກອື່ນໆ ດັ່ງທີ່ຈັດຢູ່ໃນກຸ່ມລະຫັດ 641 (ໂຮງແຮມ ແລະ ການບໍລິການທີ່ພັກອາໄສ)

**82102 ການບໍລິການເຊົ່າ ຫຼື ໃຫ້ເຊົ່າ ກ່ຽວຂ້ອງກັບການເປັນເຈົ້າຂອງ ຫຼື ການໃຫ້ເຊົ່າອະສັງຫາລິມະຊັບທີ່ບໍ່ແມ່ນທີ່ພັກອາໄສ**

ການບໍລິການເຊົ່າ ຫຼື ໃຫ້ເຊົ່າ ອາຄານອຸດສະຫະກາ, ການຄ້າ ຫຼື ອື່ນໆທີ່ບໍ່ແມ່ນທີ່ຢູ່ອາໄສ ຫຼື ອະສັງຫາລິມະຊັບ ໂດຍເຈົ້າຂອງ ຫຼື ຜູ້ເຊົ່າໃຫ້ຄົນອື່ນ. ຕົວຢ່າງ ລວມທັງ ໂຮງງານ, ອາຄານຫ້ອງການ, ສາງມ້ຽນເຄື່ອງ, ໂຮງຮູບເງົາ ແລະ ອາຄານທີ່ໃຊ້ໄດ້ຫຼາຍແບບ ທີ່ບໍ່ແມ່ນທີ່ພັກອາໄສເປັນຕົ້ນຕໍ, ລວມເຖິງ ທີ່ດິນເຮັດກະສິກຳ, ປ່າໄມ້ ແລະ ທີ່ດິນໃຊ້ຄ້າຍຄືກັນ, ແລະ ທີ່ດິນສຳລັບການຂຸດຄົ້ນແຮ່ທາດ ຫຼື ການຂຸດຄົ້ນນ້ຳມັນ.

**82103 ການຂາຍອາຄານທີ່ຢູ່ອາໄສ ແລະ ທີ່ດິນ**

ການຂາຍຕຶກອາຄານທີ່ຢູ່ອາໄສ ແລະ ທີ່ດິນຂອງຕົນເອງ ໃນກໍລະນີທີ່ການຂາຍໄດ້ຖືກຈັດໃນຮູບແບບຫົວໜ່ວຍເພື່ອຂາຍໂດຍຜູ້ຂາຍ, ແຕ່ບໍ່ແມ່ນການຂາຍອະສັງຫາລິມະຊັບ ທີ່ການຂາຍເປັນການກຳຈັດຊັບສິນຄົງທີ່ຂອງຫົວໜ່ວຍທີ່ຂາຍ. ຕົວຢ່າງຂອງອະສັງຫາລິມະຊັບທີ່ຢູ່ອາໄສ ລວມເຖິງ ເຮືອນພ້ອມທີ່ດິນ, ອາຄານຢູ່ອາໄສຫຼາຍຫຼັງ ພ້ອມດ້ວຍທີ່ດິນ ແລະ ຫົວໜ່ວຍຫ້ອງພັກແຕ່ລະຫ້ອງພາຍໃນອາຄານນັ້ນ, ເຊັ່ນວ່າ ແຕ່ລະອາພາດເມັ້ນ ຫຼື ຄອນໂດມິນຽມ. ອະສັງຫາລິມະຊັບດັ່ງກ່າວສາມາດເປັນໄດ້ທັງແບບຖືຄອງດ້ວຍການເຊົ່າ ຫຼື ຖືຄອງໂດຍບໍ່ໄດ້ຈ່າຍສ່ວຍສາອາກອນ. ພ້ອມນັ້ນ, ຍັງລວມທັງການຂາຍອາຄານທີ່ຢູ່ອາໄສພາຍໃຕ້ບັນຊີຕົນເອງ ທີ່ຖືກສ້າງຂຶ້ນພາຍໃຕ້ສັນຍາໂດຍໜ່ວຍງານກໍ່ສ້າງສຳລັບຫົວໜ່ວຍທີ່ຂາຍ ແລະ ການຂາຍໄດ້ຖືກຈັດໃນຮູບແບບຫົວໜ່ວຍເພື່ອຂາຍໂດຍຜູ້ຂາຍ

ບໍ່ລວມ: ການຂາຍອະສັງຫາລິມະຊັບທີ່ໄດ້ມີການກໍ່ສ້າງຢ່າງເປັນຮູບປະທຳ ໂດຍຫົວໜ່ວຍທີ່ຂາຍທີ່ຈັດຢູ່ໃນ ລະຫັດ 512 (ວຽກງານກໍ່ສ້າງສຳລັບອາຄານ).

**82104 ການຂາຍດິນວ່າງເປົ່າສຳລັບທີ່ຢູ່ອາໄສ**

ການຂາຍດິນວ່າງເປົ່າສຳລັບທີ່ຢູ່ອາໄສທີ່ເປັນຂອງຕົນເອງ ໃນກໍລະນີທີ່ການຂາຍໄດ້ຖືກຈັດໃນຮູບແບບຫົວໜ່ວຍການຂາຍໂດຍຜູ້ຂາຍ. ທີ່ດິນວ່າງເປົ່າສາມາດລວມເອົາ ດິນວ່າງເປົ່າທີ່ໄດ້ຖືກແບ່ງປັນຍ່ອຍ ແລະ ການຂາຍຍັງສາມາດລວມເຖິງຂາຍດິນເປົ່າວ່າງຍ່ອຍທີ່ໄດ້ຖືກແບ່ງເປັນຫົວໜ່ວຍຂາຍຕົວຈິງ.

**82105 ການຂາຍຕຶກອາຄານ ແລະ ທີ່ດິນທີ່ບໍ່ແມ່ນທີ່ຢູ່ອາໄສ ແລະ ທີ່ດິນ**

ການຂາຍຕຶກອາຄານ ແລະ ທີ່ດິນ ທີ່ບໍ່ແມ່ນທີ່ຢູ່ອາໄສ ພາຍໃຕ້ບັນຊີຂອງຕົນເອງ ໃນກໍລະນີການຂາຍໄດ້ຖືກຈັດໃນຮູບແບບການຂາຍສິ່ງທີ່ມີໄວ້ໂດຍຜູ້ຂາຍ, ແຕ່ບໍ່ແມ່ນການຂາຍອະສັງຫາລິມະຊັບ ທີ່ການຂາຍເປັນການກຳຈັດຊັບສິນຄົງທີ່ຂອງຫົວໜ່ວຍຂາຍ. ຕົວຢ່າງ ຂອງອະສັງຫາລິມະຊັບທີ່ບໍ່ແມ່ນທີ່ຢູ່ອາໄສລວມເອົາ ໂຮງງານ, ຕຶກອາຄານຫ້ອງການ, ສາງ

ເກັບເຄື່ອງ, ໂຮງຮູບເງົາ ແລະ ຕຶກອາຄານທີ່ໃຊ້ໄດ້ຫຼາຍແບບ ທີ່ບໍ່ແມ່ນທີ່ຢູ່ອາໄສເປັນຕົ້ນຕໍ ລວມເຖິງ ທີ່ດິນເພື່ອເຮັດກະສິກຳ, ປ່າໄມ້ ແລະ ອະສັງຫາລິມະຊັບທີ່ຄ້າຍກັນ, ແລະ ທີ່ດິນສຳລັບການຂຸດຄົ້ນບໍ່ແຮ່ ຫຼື ການຂຸດຄົ້ນນໍ້າມັນ. ອະສັງຫາລິມະຊັບດັ່ງກ່າວສາມາດເປັນໄດ້ທັງເຊົ່າ ຫຼື ເປັນເຈົ້າຂອງ. ລວມທັງການຂາຍຕຶກອາຄານທີ່ບໍ່ແມ່ນທີ່ຢູ່ອາໄສພາຍໃຕ້ບັນຊີຂອງຕົນເອງ ທີ່ຖືກສ້າງຂຶ້ນພາຍໃຕ້ສັນຍາໂດຍໜ່ວຍງານກໍ່ສ້າງເພື່ອຫົວໜ່ວຍຂາຍ ແລະ ຊຶ່ງປະຕິບັດຄືກັບຫົວໜ່ວຍຂາຍສິ່ງທີ່ມີໄວ້ໂດຍຜູ້ຂາຍ

<u>ບໍ່ລວມ:</u> ການຂາຍຂອງອະສັງຫາລິມະຊັບທີ່ມີການກໍ່ສ້າງທາງກາຍະພາບເປັນຫົວໜ່ວຍຂາຍ ແມ່ນຈັດຢູ່ໃນ ກຸ່ມລະຫັດ 512 (ວຽກງານການກໍ່ສ້າງສຳລັບຕຶກອາຄານ).

**82106 <u>ການຂາຍດິນວ່າງເປົ່າທີ່ບໍ່ແມ່ນທີ່ພັກອາໄສ</u>**

ການຂາຍດິນວ່າງເປົ່າທີ່ບໍ່ແມ່ນທີ່ຢູ່ອາໄສພາຍໃຕ້ບັນຊີຂອງຕົນເອງ ໃນກໍລະນີ ການຂາຍໄດ້ຖືກປະຕິບັດຄືກັບ ການຂາຍຮຸ້ນໂດຍຜູ້ຂາຍ. ດິນວ່າງເປົ່າຍັງສາມາດລວມເຖິງ ທີ່ດິນວ່າງເປົ່າທີ່ໄດ້ຖືກແບ່ງປັນຍ່ອຍ, ແລະ ການຂາຍຍັງສາມາດລວມເຖິງຂາຍດິນເປົ່າວ່າງທາງກາຍະພາບທີ່ໄດ້ຖືກແບ່ງຍ່ອຍເປັນຫົວໜ່ວຍຂາຍ.

| | |
|---|---|
| **21** | **ການບໍລິການບົນພື້ນຖານສັນຍາ ຫຼື ຄ່າທຳນຽມ (CPC 822)** |

**822 8220 ການບໍລິການອະສັງຫາລິມະຊັບບົນພື້ນຖານສັນຍາ ຫຼື ຄ່າທຳນຽມ**

**82201 ການບໍລິການດ້ານການຄຸ້ມຄອງຈັດການອະສັງຫາລິມະຊັບທີ່ຢູ່ອາໄສບົນພື້ນຖານສັນຍາ ຫຼື ຄ່າທຳນຽມ**

ການບໍລິການດ້ານການຄຸ້ມຄອງຈັດການ (ລວມທັງ ການເຊົ່າ ຫຼື ປະເມີນລາຄາ) ຂອງເຮືອນ ແລະ ທີ່ຢູ່ອາໄສອື່ນໆ, ບົນພື້ນຖານສັນຍາ ຫຼື ຄ່າທຳນຽມ. ການບໍລິການດ້ານການຄຸ້ມຄອງຈັດການສຳລັບອາຄານທີ່ມີຫົວໜ່ວຍອາພາດເມັ້ນຫຼາຍຫ້ອງ (ຫຼື ອາຄານສຳລັບການນຳໃຊ້ຫຼາຍທາງ ຊຶ່ງຕົ້ນຕໍ ແມ່ນທີ່ຢູ່ອາໄສ) ແລະ ລວມເຖິງສະຖານທີ່ສຳລັບເຮືອນແບບເຄື່ອນທີ່.

**82202 ການບໍລິການດ້ານການຄຸ້ມຄອງຈັດການອະສັງຫາລິມະຊັບທີ່ບໍ່ແມ່ນທີ່ຢູ່ອາໄສ ບົນພື້ນຖານສັນຍາ ຫຼື ຄ່າທຳນຽມ**

ການບໍລິການດ້ານການຄຸ້ມຄອງຈັດການ (ລວມທັງ ການເຊົ່າ ຫຼື ປະເມີນລາຄາ) ຂອງອະສັງຫາລິມະຊັບ/ທີ່ດິນສຳລັບອຸດສາຫະກຳ ແລະ ການຄ້າ, ໂຮງຮູບເງົາ, ຕຶກອາຄານສຳລັບການນຳໃຊ້ຫຼາຍແບບທີ່ບໍ່ແມ່ນທີ່ຢູ່ອາໄສເປັນຕົ້ນຕໍ, ອື່ນໆ, ບົນພື້ນຖານຄ່າທຳນຽມ ຫຼື ສັນຍາ. ການບໍລິການດ້ານການຄຸ້ມຄອງຈັດການກ່ຽວກັບ ອະສັງຫາລິມະຊັບ/ທີ່ດິນກະສິກຳ, ປ່າໄມ້ ແລະ ທີ່ຄ້າຍຄືກັນບົນພື້ນຖານຄ່າຕອບແທນ ຫຼື ສັນຍາ ແມ່ນ ລວມເຂົ້າໃນນີ້.

**82203 ການຂາຍຕຶກອາຄານທີ່ຢູ່ອາໄສ ແລະ ທີ່ດິນ ບົນພື້ນຖານຄ່າຕອບແທນ ຫຼື ສັນຍາ**

ການຂາຍເຮືອນ, ແຟຼດ (ຫ້ອງຊຸດ), ອາຄານອາພາດເມັ້ນ ແລະ ອະສັງຫາລິມມະຊັບທີ່ຢູ່ອາໄສອື່ນໆ ບົນພື້ນຖານຄ່າຕອບແທນ ແລະ ສັນຍາ.

**82204 ການຂາຍດິນວ່າງສຳລັບທີ່ຢູ່ອາໄສບົນພື້ນຖານຄ່າຕອບແທນ ຫຼື ສັນຍາ**

ການຂາຍດິນວ່າງສຳລັບທີ່ຢູ່ອາໄສບົນພື້ນຖານຄ່າຕອບແທນ ຫຼື ສັນຍາ.

**82205 ການຂາຍຕຶກອາຄານທີ່ບໍ່ແມ່ນທີ່ຢູ່ອາໄສ ແລະ ທີ່ດິນບົນພື້ນຖານຄ່າຕອບແທນ ຫຼື ສັນຍາ**

ການຂາຍຕຶກອາຄານທີ່ບໍ່ແມ່ນທີ່ຢູ່ອາໄສ ແລະ ທີ່ດິນ ເຊັ່ນ ຫ້ອງການ, ໂຮງງານ, ຮ້ານ, ອື່ນໆ ບົນພື້ນຖານຄ່າຕອບແທນ ຫຼື ສັນຍາ.

**82206 ການຂາຍດິນວ່າງເປົ່າທີ່ບໍ່ແມ່ນທີ່ຢູ່ອາໄສບົນພື້ນຖານຄ່າຕອບແທນ ຫຼື ສັນຍາ**

ການຂາຍດິນວ່າງທີ່ບໍ່ແມ່ນທີ່ຢູ່ອາໄສບົນພື້ນຖານຄ່າຕອບແທນ ຫຼື ສັນຍາ.

**E. ການບໍລິການໃຫ້ເຊົ່າ/ການເຊົ່າ ໂດຍບໍ່ລວມຄົນຂັບ**

| | |
|---|---|
| **22** | **ກ່ຽວຂ້ອງກັບເຮືອກຳປັ່ນ (CPC 83103)** |

**83103 ການບໍລິການໃຫ້ເຊົ່າ ຫຼື ການເຊົ່າ ກ່ຽວກັບເຮືອ ໂດຍບໍ່ລວມຄົນຂັບ**

ການບໍລິການໃຫ້ເຊົ່າ, ການຈ້າງ ຫຼື ການເຊົ່າ ກ່ຽວກັບເຮືອ, ກຳປັ່ນ ແລະ ເຮືອໄວ ໂດຍບໍ່ລວມຄົນຂັບ, ເປັນຕົ້ນ ແມ່ນຖືກອອກແບບສຳລັບການລຳລຽງຜູ້ໂດຍສານ ແລະ ຂົນສົ່ງ.

**ບໍ່ລວມ**: ການບໍລິການໃຫ້ເຊົ່າ, ການຈ້າງ ຫຼື ການເຊົ່າສຳລັບເຮືອແລ່ນທາງທະເລ ໂດຍບໍ່ລວມຄົນຂັບ ແມ່ນຈັດໄວ້ໃນຂະ

ແໜງຍ່ອຍ 72130 (ການບໍລິການໃຫ້ເຊົ່າເຮືອແລ່ນທາງທະເລ ທີ່ມີຜູ້ດຳເນີນງານ).

ການບໍລິການໃຫ້ເຊົ່າ, ການຈ້າງ ຫຼື ການເຊົ່າກ່ຽວກັບເຮືອທີ່ບໍ່ແລ່ນທາງທະເລ ໂດຍລວມມີຄົນຂັບ ແມ່ນຈັດໄວ້ໃນຂະ

ແໜງຍ່ອຍ 72230 (ການບໍລິການໃຫ້ເຊົ່າເຮືອບໍ່ແລ່ນທາງທະເລ ທີ່ລວມຜູ້ຂັບ)

ການບໍລິການໃຫ້ເຊົ່າ, ການຈ້າງ ຫຼື ການເຊົ່າກ່ຽວຂ້ອງກັບເຮືອເພື່ອຄວາມບັນເທີງ 83204 (ການໃຫ້ເຊົ່າ ຫຼື ບໍລິການເຊົ່າກ່ຽວກັບໃຫ້ຄວາມສຳລານ ແລະ ອຸປະກອນເພື່ອຄວາມບັນເທີງ ແມ່ນຈັດໄວ້ໃນຂະແໜງຍ່ອຍ 83204 (ການບໍລິການໃຫ້ເຊົ່າ ຫຼື ການເຊົ່າກ່ຽວກັບອຸປະກອນເພື່ອຄວາມບັນເທີງ ແລະ ພັກຜ່ອນ).

| | |
|---|---|
| **23** | **ກ່ຽວກັບອຸປະກອນການຂົນສົ່ງອື່ນໆ (CPC 83101+830102+83105)** |

**83101 ການບໍລິການໃຫ້ເຊົ່າ ຫຼື ເຊົ່າ ລົດໃຫຍ່ສ່ວນບຸກຄົນ ທີ່ບໍ່ລວມຄົນຂັບ**

ການບໍລິການໃຫ້ເຊົ່າ, ການຈ້າງ ຫຼື ເຊົ່າລົດໃຫຍ່ສ່ວນບຸກຄົນ ທີ່ລວມຄົນຂັບ ແລະ ລົດເກັງໂດຍສານ(ສະເຕເຊິນ ເວກອນ) ທີ່ບໍ່ມີຜູ້ປະຕິບັດງານ (ຄົນຂັບ), ຕົ້ນຕໍ ແມ່ນອອກແບບສຳລັບຂົນສົ່ງຜູ້ໂດຍສານ.

ບໍ່ລວມ: ການບໍລິການໃຫ້ເຊົ່າ ຫຼື ເຊົ່າລົດໃຫຍ່ສ່ວນບຸກຄົນທີ່ມີຄົນຂັບ ດັ່ງທີ່ໄດ້ຈັດໄວ້ໃນລະຫັດຍ່ອຍ 71222 (ການບໍລິການເຊົ່າລົດໂດຍສານທີ່ມີຄົນຂັບ).

**83102 ການບໍລິການໃຫ້ເຊົ່າ ຫຼື ເຊົ່າພາຫະນະຂົນສົ່ງສິນຄ້າ ທີ່ບໍ່ລວມຄົນຂັບ**

ການບໍລິການເຊົ່າ, ຈ້າງ ຫຼື ໃຫ້ເຊົ່າ ພາຫະນະລົດໃຫຍ່ ທີ່ບໍ່ລວມຄົນຂັບ, ຕົ້ນຕໍແມ່ນອອກແບບສຳລັບຂົນສົ່ງສິນຄ້າ (ຕົວຢ່າງ: ລົດພ່ວງຂະໜາດນ້ອຍ, ລົດບັນທຸກ, ລົດບັນທຸກຂະໜາດໃຫຍ່, ລົດຕູ້ຂົນສົ່ງສິນຄ້າ ແລະ ສິ່ງອຳນວຍຄວາມສະດວກ).

ບໍ່ລວມ: ການບໍລິການໃຫ້ເຊົ່າ ຫຼື ຈ້າງພາຫະນະຂົນສົ່ງສິນຄ້າທີ່ມີຄົນຂັບ ດັ່ງທີ່ໄດ້ຈັດໄວ້ໃນລະຫັດຍ່ອຍ 71240 (ການ

ເຊົ່າພາຫະນະຂົນສົ່ງທາງການຄ້າທີ່ມີຄົນຂັບ).

**83105 ການບໍລິການໃຫ້ເຊົ່າ ຫຼື ເຊົ່າອຸປະກອນຂົນສົ່ງທາງບົກອື່ນໆ ທີ່ບໍ່ລວມຄົນຂັບ**

ການບໍລິການໃຫ້ເຊົ່າ, ຈ້າງ ຫຼື ເຊົ່າອຸປະກອນຂົນສົ່ງທາງບົກອື່ນໆ ທີ່ບໍ່ລວມຄົນຂັບ. ລວມທັງການບໍລິການເຊົ່າພາຫະນະໃຊ້ກັບທາງລົດໄຟ, ພາຫະນະເຄື່ອນທີ່ເທິງຫິມະ, ພາຫະນະສຳລັບຂົນສົ່ງຜູ້ໂດຍສານສາທາລະນະ (ຕົວຢ່າງ: ລົດເມ), ລົດຈັກ, ລົດຂະບວນຄາລາວານ ແລະ ລົດຕັ້ງແຄມເຄື່ອນທີ່.

<u>ບໍ່ລວມ</u>: ການບໍລິການໃຫ້ເຊົ່າ ຫຼື ຈ້າງພາຫະນະສຳລັບຂົນສົ່ງຜູ້ໂດຍສານສາທາລະນະ ທີ່ລວມມີຄົນຂັບ ດັ່ງທີ່ໄດ້ຈັດໄວ້ໃນລະຫັດຍ່ອຍ 71223 (ການບໍລິການໃຫ້ເຊົ່າລົດເມ ແລະ ລົດໂດຍສານທີ່ລວມທັງຄົນຂັບ).

| **24** | **ກ່ຽວກັບເຄື່ອງຈັກແລະ ອຸປະກອນອື່ນໆ (CPC 83106-83109)** |
|---|---|

**83106 <u>ການບໍລິການໃຫ້ເຊົ່າ ຫຼື ເຊົ່າ ກ່ຽວກັບ ເຄື່ອງຈັກ ແລະ ອຸປະກອນກະສິກຳ ບໍ່ລວມຜູ້ບັງຄັບ</u>**

ການບໍລິການໃຫ້ເຊົ່າ, ການຈ້າງ ຫຼື ເຊົ່າເຄື່ອງຈັກ ແລະ ອຸປະກອນກະສິກຳ ບໍ່ລວມຜູ້ບັງຄັບ. ລວມມີ ການບໍລິການເຊົ່າລົດແທກເຕີກະສິກຳ ແລະ ສິ່ງນຳໃຊ້, ເຄື່ອງປູກເມັດ ແລະ ກ້າຕົ້ນໄມ້, ຈັກເກັບກ່ຽວ, ປູກ ແລະ ຈັກແຍກປະເພດ ແລະ ອື່ນໆ.

**<u>ບໍ່ລວມ</u>:** ການບໍລິການໃຫ້ເຊົ່າ ຫຼື ການຈ້າງ ເຄື່ອງຈັກແລະ ອຸປະກອນກະສິກຳ ທີ່ລວມມີຜູ້ບັງຄັບ/ຄົນຂັບ ຊຶ່ງໄດ້ກຳນົດໃນຂະແໜງຍ່ອຍ 88110 (ການບໍລິການປະກອບໃຫ້ແກ່ກະສິກຳ).

83107 **<u>ການເຊົ່າ ຫລື ບໍລິການເຊົ່າ ກ່ຽວກັບ ເຄື່ອງຈັກກໍ່ສ້າງ ແລະ ອຸປະກອນ ບໍ່ຜ່ານຜູ້ເຮັດທຸລະກິດ</u>**

ການເຊົ່າ, ການຈ້າງ ຫລື ການບໍລິການເຊົ່າເຄື່ອງຈັກກໍ່ສ້າງ ແລະ ອຸປະກອນ ບໍ່ຜ່ານຜູ້ເຮັດທຸລະກິດ. ລວມມີ ການບໍລິການເຊົ່າລົດແທກເຕີສຳລັບກໍ່ສ້າງ ແລະ ຈຸດປະສົງການຍ້າຍຫີນ, ຈັກເກດຖະໜົນ, ຈັກບົດຖະໜົນ, ລົດດັນດິນ, ເຄື່ອງເຈາະດິນ, ລົດຕັກດິນ ແລະ ອື່ນໆ.

**<u>ຍົກເວັ້ນ</u>:** ການເຊົ່າ ຫຼື ບໍລິການເຊົ່າເຄື່ອງຈັກກໍ່ສ້າງ ແລະ ອຸປະກອນກໍ້ສ້າງ ຜ່ານຜູ້ເຮັດທຸລະກິດ ທີ່ໄດ້ກຳນົດໃນຂະແໜງຍ່ອຍ 51800.

83108 **<u>ການເຊົ່າ ຫລື ບໍລິການເຊົ່າ ກ່ຽວກັບ ເຄື່ອງຈັກ ແລະ ອຸປະກອນ ຫ້ອງການ (ລວມທັງ ຄອມພິວເຕີ) ບໍ່ຜ່ານຜູ້ເຮັດທຸລະກິດ</u>**

ການເຊົ່າ, ການຈ້າງ ຫລື ການບໍລິການເຊົ່າເຄື່ອງຈັກ ແລະ ອຸປະກອນຫ້ອງການ (ລວມທັງ ຄອມພິວເຕີ) ບໍ່ຜ່ານຜູ້ເຮັດທຸລະກິດ. ລວມມີ ການບໍລິການເຊົ່າທຸກປະເພດເຄື່ອງຈັກ ແລະ ອຸປະກອນຫ້ອງການ, ເຊັ່ນ: ເຄື່ອງສ້າງສຳເນົາ, ພິມດີດ ແລະ ຈັກທີ່ໃຊ້ໃນການສ້າງຄຳເວົ້າ; ເຄື່ອງຈັກ ແລະ ອຸປະກອນການບັນຊີ, ເຊັ່ນ: ຈັກຄິດໄລ່ອີເລັກໂຕນິກ, ເຄື່ອງຈັກຄິດໄລ່ເງິນສົດ ແລະ ຈັກອື່ນໆ ທີ່ມີອຸປະກອນການຄິດໄລ່; ແລະ ເຄື່ອງຈັກ ແລະ ອຸປະກອນຄອມພິວເຕີ, ເຊັ່ນ: ເຄື່ອງຈັກປະມວນຜົນຂໍ້ມູນອັດຕະໂນມັດ, ໜ່ວຍປະມວນຜົນສູນກາງ, ໜ່ວຍຕໍ່ພ່ວງ, ເຄື່ອງຈັກທີ່ອ່ານດ້ວຍແມ່ເຫຼັກ ຫຼື ທາງ

ສາຍຕາ .

**ຍົກເວັ້ນ:** ການເຊົ່າ ຫຼື ບໍລິການເຊົ່າເຄື່ອງຄອມພິວເຕີ ຫຼື ອຸປະກອນຄອມພິວເຕີ ຜ່ານຜູ້ເຮັດທຸລະກິດ ຫຼື ການບໍລິຫານ ທີ່ໄດ້ກໍານົດໃນຂະແໜງຍ່ອຍ 843 (ການບໍລິການປະມວນຜົນຂໍ້ມູນ).

ການບໍລິການເຊົ່າເວລານໍາໃຊ້ຄອມພິວເຕີໂດຍອີງຕາມຊົ່ວໂມງຫຼືນໍາໃຊ້ເວລາຮ່ວມກັນ ທີ່ໄດ້ກໍານົດໃນຂະແໜງຍ່ອຍ 84330 (ການບໍລິການນໍາໃຊ້ເວລາຮ່ວມກັນ).

83109 ການບໍລິການໃຫ້ເຊົ່າ ຫຼື ເຊົ່າເຄື່ອງຈັກ ແລະ ອຸປະກອນອື່ນໆ ບໍ່ລວມຜູ້ບັງຄັບ

ການບໍລິການໃຫ້ເຊົ່າ, ຈ້າງ ຫຼື ເຊົ່າ ເຄື່ອງຈັກ ແລະ ອຸປະກອນອື່ນໆ ທີ່ບໍ່ລວມຜູ້ບັງຄັບ. ລວມມີ ການບໍລິການເຊົ່າເຄື່ອງຈັກທຸກປະເພດ, ໃຊ້ໄຟຟ້າ ຫຼື ບໍ່ກໍຕາມ, ຊຶ່ງໂດຍທົ່ວໄປທີ່ໃຊ້ ເປັນສິນຄ້າລົງທຶນໂດຍອຸດສາຫະກໍາ, ເຊັ່ນ ເຄື່ອງຈັກ ແລະ ຈັກເທີບິນ (ຈັກທີ່ມີໃບພັດ), ເຄື່ອງມືກົນຈັກ, ອຸປະກອນໃຊ້ໃນພາກສະໜາມບໍ່ແຮ່ ແລະ ຂຸດເຈາະນໍ້າມັນ; ອຸປະກອນການສື່ສານ ແລະ ໂທລະພາບ, ອຸປະກອນກະຈາຍສຽງໃນທາງທຸລະກິດ; ເຄື່ອງມືອຸປະກອນທາງດ້ານວິຊາຊີບ, ການວັດແທກທາງດ້ານວິທະຍາສາດ ແລະ ເຄື່ອງມືຄວບຄຸມ; ແລະ ເຄື່ອງຈັກທາງດ້ານທຸລະກິດ ແລະ ອຸດສາຫະກໍາ ອື່ນໆ.

| 25 | ອື່ນໆ (CPC 832) |
|---|---|
| | |

832 8320 ການບໍລິການໃຫ້ເຊົ່າ ຫຼື ເຊົ່າສິນຄ້າໃຊ້ໃນຄົວເຮືອນ ແລະ ໃຊ້ສ່ວນບຸກຄົນ

83201 ການບໍລິການໃຫ້ເຊົ່າ ຫຼື ເຊົ່າ ກ່ຽວກັບໂທລະທັດ, ວິທະຍຸ, ເຄື່ອງອັດກາແຊັດວີດີໂອ ແລະ ອຸປະກອນ ແລະ ເຄື່ອງມືທີ່ກ່ຽວຂ້ອງ

ການບໍລິການໃຫ້ເຊົ່າ ຫຼື ຈ້າງ ອຸປະກອນບັນເທີງຢູ່ເຮືອນທີ່ເປັນເຄື່ອງໄຟຟ້າ ແລະ ເຄື່ອງອີເລັກໂທຣນິກ ທຸກປະເພດ ເຊັ່ນ: ລະບົບເຄື່ອງສຽງ, ເຄື່ອງຫຼິ້ນເທັບອີເລັກໂທຣນິກ, ໂທລະທັດ, ວິທະຍຸ, ແລະ ເຄື່ອງອັດກາແຊັດວີດີໂອ, ແລະ ອຸປະກອນທີ່ຄ້າຍຄືກັນ. ພ້ອມນີ້, ຍັງລວມການບໍລິການໃຫ້ເຊົ່າ ການອັດທີ່ໄດ້ອັດໄວ້ລ່ວງໜ້າ, ກະແຊັດສຽງ, ຄອມແພັກດິສ, ແລະ ອຸປະກອນເສີມຕ່າງໆທີ່ຄ້າຍຄືກັນ.

83202 ການບໍລິການໃຫ້ເຊົ່າ ຫຼື ເຊົ່າ ເຄື່ອງວີດີໂອເທັບ

ການບໍລິການໃຫ້ເຊົ່າ ຫຼື ຈ້າງ ກາແຊັດວີດີໂອທີ່ໄດ້ອັດໄວ້ລ່ວງໜ້າສໍາລັບໃຊ້ໃນອຸປະກອນບັນເທີງພາຍໃນເຮືອນ, ຕົ້ນຕໍແມ່ນເພື່ອຄວາມບັນເທີງພາຍໃນເຮືອນ.

83203 ການບໍລິການໃຫ້ເຊົ່າ ຫຼື ເຊົ່າ ເຄື່ອງຟີນີເຈີ ແລະ ເຄື່ອງໃຊ້ໃນຄົວເຮືອນອື່ນໆ

ການບໍລິການໃຫ້ເຊົ່າ ຫຼື ຈ້າງ ເຄື່ອງຟີນີເຈີ (ລວມເອົາ ເສື່ອ ແລະ ເສື່ອເສີມ), ແລະ ເຄື່ອງໃຊ້ໃນຄົວເຮືອນ, ທີ່ໃຊ້ໄຟຟ້າ ຫຼື ບໍ່ ກໍຕາມ, ເຊັ່ນ: ຕູ້ເຢັນ, ເຄື່ອງຊັກຜ້າ, ເຄື່ອງປັບອາກາດໃນຫ້ອງ, ພັດລົມ, ເຄື່ອງປີ້ງເຂົ້າຈີ່ແຜ່ນ, ເຄື່ອງປະສົມ, ເຮືອນຄົວ ແລະ ເຄື່ອງໃຊ້ຮັບປະທານອາຫານ ແລະ ອື່ນໆ.

83204 ການບໍລິການໃຫ້ເຊົ່າ ຫຼື ເຊົ່າ ເຄື່ອງອຸປະກອນເພື່ອຄວາມສໍາລານໃຈ ແລະ ພັກຜ່ອນ

ການບໍລິການໃຫ້ເຊົ່າ ຫຼື ຈ້າງ ເຄື່ອງອຸປະກອນເພື່ອຄວາມສໍາລານໃຈ ແລະ ພັກຜ່ອນ, ເຊັ່ນ: ລົດຖີບ, ເຄື່ອງຫຼິ້ນສະກີ, ບອນລູນ, ເຮືອບິນແບບບອນລູນ, ເຄື່ອງບິນຮ່ອນແບບບໍ່ມີຈັກ, ເຮືອບິນຮ່ອນແບບບໍ່ມີຈັກທີ່ຄົນໃຊ້ບິນຫຼິ້ນເປັນກິລາ, ເຄື່ອງອຸປະກອນກິລາທາງນໍ້າ (ຕົວຢ່າງ: ແຜ່ນກະດານສໍາລັບຂີ່ໂຕ້ຄື້ນທະເລ, ເຮືອສໍາລານ, ສະກີນໍ້າ), ເຄື່ອງອຸປະກອນກິລາອື່ນໆ (ຕົວຢ່າງ: ໄມ້ກ໋ອບ, ເຄື່ອງອຸປະກອນໃຊ້ຫຼິ້ນເກມໃນສະໜາມ, ໄມ້ຕີສໍາລັບເກມ, ອື່ນໆ, ສະເກັດເທິງນໍ້າກ້ອນ), ອານມ້າ ແລະ ອື່ນໆ.

**<u>83209 ການບໍລິການໃຫ້ເຊົ່າ ຫຼື ເຊົ່າສິນຄ້າອື່ນໆໃຊ້ໃນຄົວເຮືອນ ແລະ ໃຊ້ສ່ວນບຸກຄົນ</u>**

ການບໍລິການໃຫ້ເຊົ່າ ຫຼື ຈ້າງສິນຄ້າອື່ນໆທີ່ໃຊ້ໃນຄົວເຮືອນ ແລະ ໃຊ້ສ່ວນຕົວ ເຊັ່ນ: ເຄື່ອງນຸ່ງຫົ່ມ ແລະ ເກີບ; ກ້ອງ, ກ້ອງສ່ອງ ແລະ ເຄື່ອງໃຊ້ທາງສາຍຕາ; ໂມງ ແລະ ໂມງແຂວນຝາ; ເຄື່ອງປະດັບ ແລະ ເຄື່ອງປະກອບອື່ນໆທີ່ກ່ຽວຂ້ອງ; ເຄື່ອງຫຼິ້ນດົນຕີ; ອື່ນໆ.

## F. ການບໍລິການທຸລະກິດອື່ນໆ

| 26 | ການບໍລິການດ້ານການໂຄສະນາ (CPC 871) |
|---|---|

**871 ການບໍລິການດ້ານການໂຄສະນາ**

**8711 87110 <u>ການບໍລິການດ້ານການຂາຍ ຫຼື ການເຊົ່າ ພື້ນທີ່ ຫຼື ເວລາໂຄສະນາ</u>**

ການບໍລິການທີ່ສະໜອງພື້ນທີ່ ຫຼື ເວລາໂຄສະນາ ສໍາລັບໜັງສືພິມ, ວາລະສານອື່ນໆ ແລະ ສະຖານີໂທລະພາບ.

**8712 87120 <u>ການບໍລິການດ້ານການວາງແຜນ, ການປະດິດ ແລະ ການຈັດວາງການໂຄສະນາ</u>**

ການບໍລິການດ້ານການວາງແຜນ, ການປະດິດ ແລະ ການຈັດວາງການໂຄສະນາ ເພື່ອສະແດງໃຫ້ເຫັນຜ່ານສື່ໂຄສະນາ.

**8719 87190 <u>ການບໍລິການດ້ານການໂຄສະນາອື່ນໆ</u>**

ການບໍລິການດ້ານການໂຄສະນາອື່ນໆ ທີ່ບໍ່ໄດ້ກໍານົດຢູ່ບ່ອນອື່ນ, ລວມທັງ ການບໍລິການໂຄສະນາກາງແຈ້ງ ແລະ ທາງອາກາດ ແລະ ການບໍລິການສິ່ງຕົວຢ່າງ ແລະ ວັດສະດຸ/ວັດຖຸເຄື່ອງໂຄສະນາອື່ນໆ.

| 27 | ການບໍລິການດ້ານການຄົ້ນຄວ້າວິໄຈຕະຫຼາດ ແລະ ສໍາຫຼວດຄວາມຄິດເຫັນຂອງຄົນທົ່ວໄປ (CPC 864) |
|---|---|

**864 8640 ການບໍລິການຄົ້ນຄວ້າວິໄຈຕະຫຼາດ ແລະ ສໍາຫຼວດຄວາມຄິດເຫັນຂອງຄົນທົ່ວໄປ**

**86401 <u>ການບໍລິການດ້ານການຄົ້ນຄວ້າວິໄຈຕະຫຼາດ</u>**

ການບໍລິການດ້ານການຄົ້ນຄວ້າສືບສວນ ຊຶ່ງອອກແບບເພື່ອໃຫ້ໄດ້ມາຊຶ່ງຂໍ້ມູນກ່ຽວກັບທ່າອ່ຽງ ແລະ ຜົນການດໍາເນີນງານຂອງສິນຄ້າຂອງອົງການ (ບໍລິສັດ)ໃນຕະຫຼາດ. ໃນນີ້ ລວມມີ ການວິເຄາະຕະຫຼາດ (ຂະໜາດ ແລະ ຄຸນລັກສະນະສະເພາະອື່ນໆຂອງຕະຫຼາດ) ແລະ ການວິເຄາະທັດສະນະຄະຕິ ແລະ ຄວາມຕ້ອງການຂອງຜູ້ຊົມໃຊ້, ຊຶ່ງອາດນໍາໃຊ້ການ

ສຳພາດບຸກຄົນ, ໂທລະສັບ, ແລະ ສຳຫຼວດຜ່ານທາງຈົດໝາຍ, ຂໍ້ມູນຜ່ານມາ, ແລະ ອື່ນໆ.

ການບໍລິການດ້ານການສືບສວນທາງດ້ານເສດຖະກິດ ແລະ ສັງຄົມທີ່ບໍ່ກ່ຽວຂ້ອງກັບສິນຄ້າທີ່ຄ້າຂາຍ, ເຊັ່ນ: ການວິເຄາະອຸດສາຫະກຳ, ການສ້າງແບບຈຳລອງທາງອີໂຄໂນແມັດທຣິກ, ການວິເຄາະປະຊາກອນສາດ ແລະ ອື່ນໆ ແມ່ນລວມໃນນີ້ນຳ.

<u>**ບໍ່ລວມ:**</u> ການບໍລິການດ້ານການສາຫຼວດຄວາມຄິດເຫັນຂອງຄົນທົ່ວໄປ ຊຶ່ງໄດ້ກາມົດຢູ່ຂະແໜງຍ່ອຍ 86402.

**86402 <u>ການບໍລິການດ້ານການສາຫຼວດຄວາມຄິດເຫັນຂອງຄົນທົ່ວໄປ</u>**

ການບໍລິການໃນການສຳຫຼວດ ທີ່ອອກແບບເພື່ອຮັກສາຂໍ້ມູນຕໍ່ກັບຄິດເຫັນຂອງສາທາລະນະຊົນກ່ຽວກັບບັນຫາສັງຄົມ, ເສດຖະກິດ, ການເມືອງ ແລະ ບັນຫາອື່ນໆ. ການສຳຫຼວດຄວາມຄິດເຫັນຂອງຄົນທົ່ວໄປ ໂດຍສ່ວນໃຫຍ່ ແມ່ນດຳເນີນການຜ່ານການສຳພາດທາງໂທລະສັບ, ແຕ່ອາດຍັງນຳໃຊ້ການສຳພາດບຸກຄົນ ແລະ ສຳຫຼວດຜ່ານທາງຈົດໝາຍ.

<u>ບໍ່ລວມ:</u> ການບໍລິການດ້ານການຄົ້ນຄວ້າສືບສວນທີ່ຄ້າຍຄືກັນທີ່ອອກແບບເພື່ອເກັບກຳສັງລວມຂໍ້ມູນສະເພາະກ່ຽວກັບທັດສະນະຄະຕິ ແລະ ຄວາມຕ້ອງການຂອງລູກຄ້າ ແມ່ນໄດ້ກຳນົດຢູ່ໃນຂະແໜງຍ່ອຍ 86401 (ການບໍລິການຄົ້ນຄວ້າວິໄຈຕະຫຼາດ).

| 28 | **ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງຈັດການ (CPC 865)** |
|---|---|

**865 8650 ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງຈັດການ**

**86501 ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງຈັດການທົ່ວໄປ**

ການບໍລິການຊ່ວຍໃຫ້ຄຳແນະນຳ, ໃຫ້ທິດທາງ ແລະ ການປະຕິບັດງານກ່ຽວກັບນະໂຍບາຍ ແລະ ຍຸດທະສາດ ແລະ ການວາງແຜນໂດຍລວມຂອງທຸລະກິດ, ໂຄງສ້າງການຈັດຕັ້ງ ແລະ ການຄວບຄຸມຂອງອົງການ (ບໍລິສັດ). ໂດຍສະເພາະເຈາະຈົງ ກໍຄື ໜ້າວຽກການໃຫ້ຄຳປຶກສາດ້ານການຄຸ້ມຄອງຈັດການທົ່ວໄປ ອາດກ່ຽວຂ້ອງກັບໜຶ່ງ ຫຼື ການລວມກັນຂອງວຽກຕໍ່ໄປນີ້: ການສ້າງນະໂຍບາຍ, ການກຳນົດໂຄງສ້າງການຈັດຕັ້ງຂອງອົງການ (ລະບົບການຕັດສິນໃຈ) ຊຶ່ງຈະໄດ້ຕາມຈຸດປະສົງຂອງອົງການຢ່າງມີປະສິດທິຜົນທີ່ສຸດ, ການຈັດຕັ້ງທາງດ້ານນິຕິກຳ, ແຜນທຸລະກິດທີ່ເປັນຍຸດທະສາດ, ການກຳນົດລະບົບຂໍ້ມູນດ້ານການຄຸ້ມຄອງຈັດການ, ການສ້າງບົດລາຍງານ ແລະ ການຄວບຄຸມດ້ານການຄຸ້ມຄອງຈັດການ, ແຜນຮອບວຽນທຸລະກິດ, ການກວດສອບທາງດ້ານການຄຸ້ມຄອງຈັດການ, ການພັດທະນາ ແຜນງານການປັບປຸງກຳໄລ ແລະ ບັນຫາອື່ນໆ ຊຶ່ງເປັນຜົນປະໂຫຍດສະເພາະຂອງການຄຸ້ມຄອງບໍລິຫານຂັ້ນສູງຂອງອົງການ.

**86502 <u>ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງບໍລິຫານການເງິນ (ຍົກເວັ້ນ ດ້ານອາກອນຂອງທຸລະກິດ)</u>**

ການບໍລິການຊ່ວຍໃຫ້ຄຳແນະນຳ, ໃຫ້ທິດທາງ ແລະ ການປະຕິບັດງານກ່ຽວກັບຂົງເຂດການຕັດສິນໃຈ ຊຶ່ງແມ່ນດ້ານການເງິນໂດຍທົ່ວໄປ, ເຊັ່ນ ການຄຸ້ມຄອງບໍລິຫານເງິນທຶນໝູນວຽນ ແລະ ສະພາບຄ່ອງທາງການເງິນ,ການ ກຳນົດໂຄງສ້າງເງິນທຶນໝູນວຽນທີ່ເໝາະສົມ, ການວິເຄາະບົດສະເໜີການລົງທຶນໃສ່ສິນຄ້າທຶນ, ການພັດທະນາລະບົບບັນຊີ ແລະ ການຄວບ

ຄຸມງົບປະມານ, ການປະເມີນທຸລະກິດກ່ອນການລວມເຂົ້າກັນ ແລະ/ຫຼື ການຄວບລວມຂອງທຸລະກິດ ແລະ ອື່ນໆ, ແຕ່ບໍ່ລວມເອົາ ການບໍລິການໃຫ້ຄໍາແນະນໍາດ້ານການຄຸ້ມຄອງບໍລິຫານຫຼັກຊັບຕ່າງໆທີ່ເປັນການລົງທຶນໄລຍະສັ້ນ ຊຶ່ງປົກກະຕິສະຖາບັນການເງິນທີ່ເປັນຕົວກາງສະໜອງການບໍລິການນີ້.

**86503 ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງບໍລິຫານການຕະຫຼາດ**

ການບໍລິການຊ່ວຍໃຫ້ຄໍາແນະນໍາ, ໃຫ້ທິດທາງ ແລະ ການປະຕິບັດງານກ່ຽວກັບຍຸດທະສາດການຕະຫຼາດ ແລະ ການປະຕິບັດງານດ້ານການຕະຫຼາດຂອງອົງການ/ບໍລິສັດໃດໜຶ່ງ. ວຽກງານດ້ານທີ່ປຶກສາການຕະຫຼາດອາດກ່ຽວຂ້ອງກັບໜຶ່ງ ຫຼື ລວມກັນຂອງວຽກຕໍ່ໄປນີ້: ການວິເຄາະ ແລະ ການສ້າງຍຸດທະສາດການຕະຫຼາດ, ການສ້າງນະໂຍບາຍການບໍລິການລູກຄ້າ ແລະ ການກໍານົດລາຄາ, ການຄຸ້ມຄອງບໍລິຫານການຂາຍ ແລະ ການເຝິກອົບຮົມພະນັກງານ, ການຈັດຕັ້ງຊ່ອງທາງການຈັດຈໍາໜ່າຍ (ຂາຍໃຫ້ຜູ້ຂາຍຍົກ ຫຼື ຂາຍໂດຍກົງໃຫ້ຜູ້ຂາຍຍ່ອຍ, ສິ່ງກົງທາງໄປສະນີ, ແຟຣນຊາຍ ແລະ ອື່ນໆ.), ການຈັດຕັ້ງຂັ້ນຕອນການຈັດຈໍາໜ່າຍ, ການອອກແບບການຫຸ້ມຫໍ່ ແລະ ບັນຫາອື່ນໆທີ່ພົວພັນເຖິງຍຸດທະສາດການຫຼາດ ແລະ ການປະຕິບັດງານດ້ານການຕະຫຼາດຂອງອົງການ/ບໍລິສັດ.

**86504 ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງຊັບພະຍາກອນມະນຸດ**

ການບໍລິການຊ່ວຍໃຫ້ຄໍາແນະນໍາ, ໃຫ້ທິດທາງ ແລະ ການປະຕິບັດງານກ່ຽວກັບການຄຸ້ມຄອງບໍລິການດ້ານຊັບພະຍາກອນມະນຸດ (ບຸກຄະລາກອນ) ຂອງອົງກອນ/ບໍລິສັດ. ວຽກງານທີ່ປຶກສາດ້ານຊັບພະຍາກອນມະນຸດອາດກ່ຽວຂ້ອງກັບໜຶ່ງ ຫຼື ລວມກັນຂອງວຽກຕໍ່ໄປນີ້: ການກວດສອບໜ້າທີ່ຂອງບຸກຄະລາກອນ, ການພັດທະນານະໂຍບາຍສໍາລັບບຸກຄະລາກອນ, ການວາງແຜນບຸກຄະລາກອນ, ຂັ້ນຕອນການຈັດຈ້າງພະນັກງານ, ຍຸດທະສາດສິ່ງຈູງໃຈ ແລະ ຄ່າຈ້າງຜົນຕອບແທນ, ການພັດທະນາຊັບພະຍາກອນມະນຸດ, ສາຍພົວພັນລະຫວ່າງ ຝ່າຍຄຸ້ມຄອງບໍລິຫານກັບແຮງງານ, ການຄວບຄຸມການຂາດວຽກ, ການປະເມີນຜົນງານການເຮັດວຽກ ແລະ ບັນຫາອື່ນໆ ທີ່ຕິດພັນກັບໜ້າທີ່ການຄຸ້ມຄອງບໍລິຫານບຸກຄະລາກອນຂອງອົງການ/ບໍລິສັດ.

**86505 ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງບໍລິຫານການຜະລິດ**

ການບໍລິການຊ່ວຍໃຫ້ຄໍາແນະນໍາ, ໃຫ້ທິດທາງ ແລະ ການປະຕິບັດງານກ່ຽວກັບວິທີການ ເພື່ອປັບປຸງຜະລິດຕະພາບການຜະລິດ, ຫຼຸດຕົ້ນທຶນການຜະລິດ ແລະ ການປັບປຸງຄຸນນະພາບການຜະລິດ. ວຽກງານທີ່ປຶກສາດ້ານການ ຜະລິດອາດກ່ຽວຂ້ອງກັບ ໜຶ່ງ ຫຼື ລວມກັນຂອງວຽກຕໍ່ໄປນີ້: ການນໍາໃຊ້ວັດຖຸດິບໃນຂັ້ນຕອນການຜະລິດຢ່າງມີປະສິດທິຜົນ, ການຄຸ້ມຄອງບໍລິຫານ ແລະ ຄວບຄຸມບັນຊີຄ້າງສາງ, ມາດຕະຖານການຄວບຄຸມຄຸນະພາບ, ການສຶກສາກ່ຽວກັບ ເວລາ ແລະ ການເຄື່ອນໄຫວໃນການຜະລິດ, ແບບແຜນວິທີການເຮັດວຽກ ແລະ ໜ້າວຽກ, ມາດຕະຖານການດໍາເນີນງານ, ມາດຕະຖານຄວາມປອດໄພ, ການຄຸ້ມຄອງບໍລິຫານຫ້ອງການ, ການວາງແຜນ ແລະ ອອກແບບ ແລະ ບັນຫາອື່ນໆທີ່ຕິດພັນກັບການຄຸ້ມຄອງບໍລິຫານການຜະລິດ, ແຕ່ບໍ່ລວມເອົາການໃຫ້ຄໍາແນະນໍາ ແລະ ອອກແບບ ສໍາລັບແຜນຜັງຂອງໂຮງງານ ແລະ ຂັ້ນຕອນອຸດສາຫະກໍາ ຊຶ່ງປົກກະຕິ ແມ່ນຖືກສະໜອງໃຫ້ໂດຍ ການບໍລິການທີ່ປຶກສາດ້ານການສ້າງຕັ້ງວິສະວະກໍາ.

**86506 ການບໍລິການດ້ານປະຊາສຳພັນ**

ການບໍລິການຊ່ວຍໃຫ້ຄຳແນະນຳ, ໃຫ້ທິດທາງ ແລະ ການປະຕິບັດງານກ່ຽວກັບ ວິທີການ ເພື່ອປັບປຸງພາບພົດ ແລະ ສາຍພົວພັນຂອງອົງການ/ບໍລິສັດ ຫຼື ສ່ວນບຸກຄົນ ກັບສາທາລະນະທົ່ວໄປ, ກັບລັດຖະບານ, ກັບຜູ້ລົງຄະແນນສຽງເລືອກຕັ້ງ, ກັບຜູ້ຖືຮຸ້ນ ແລະ ອື່ນໆ.

**86509 ການບໍລິການດ້ານທີ່ປຶກສາດ້ານການຄຸ້ມຄອງບໍລິຫານອື່ນໆ**

ການບໍລິການຊ່ວຍໃຫ້ຄຳແນະນຳ, ໃຫ້ທິດທາງ ແລະ ການປະຕິບັດງານກ່ຽວກັບເລື່ອງອື່ນໆ. ການບໍລິການເຫຼົ່ານີ້ ລວມມີ ການບໍລິການທີ່ປຶກສາດ້ານການພັດທະນາອຸດສາຫະກຳ, ການບໍລິການທີ່ຄຳປຶກສາດ້ານການທ່ອງທ່ຽວ, ອື່ນໆ.

| ໑29 | ການບໍລິການກ່ຽວຂ້ອງກັບທີ່ປຶກສາດ້ານການຄຸ້ມຄອງບໍລິຫານ (CPC 866) |
|---|---|

**866 8660 ການບໍລິການກ່ຽວຂ້ອງກັບທີ່ປຶກສາດ້ານການຄຸ້ມຄອງບໍລິຫານ**

**86601 ການບໍລິການດ້ານການຄຸ້ມຄອງບໍລິຫານໂຄງການ ທີ່ບໍ່ແມ່ນສຳລັບການກໍ່ສ້າງ**

ການບໍລິການດ້ານການປະສານງານ ແລະ ຊີ້ນຳຄຸ້ມຄອງຊັບພະຍາກອນທີ່ໃຊ້ໃນການກະກຽມ, ການດຳເນີນງານ ແລະ ການສຳເລັດໂຄງການ ໃນນາມຂອງລູກຄ້າ. ການບໍລິການດ້ານການຄຸ້ມຄອງບໍລິຫານໂຄງການ ສາມາດກ່ຽວຂ້ອງກັບການຂຶ້ນແຜນງົບປະມານ, ການຄວບຄຸມຕົ້ນທຶນຄ່າໃຊ້ຈ່າຍ ແລະ ການບັນຊີ, ການຈັດຊື້-ຈັດຈ້າງ, ການວາງແຜນຂອງໄລຍະເວລາ ແລະ ເງື່ອນໄຂການປະຕິບັດງານອື່ນໆ, ການປະສານງານກັບຜູ້ຮັບເໝົາວຽກຍ່ອຍ, ການກວດກາ ແລະ ຄວບຄຸມຄຸນນະພາບ, ອື່ນໆ. ການບໍລິການເຫຼົ່ານີ້ກວມເອົາພຽງແຕ່ການບໍລິການດ້ານການຄຸ້ມຄອງບໍລິຫານເທົ່ານັ້ນ; ບໍ່ກວມເອົາການບໍລິການດ້ານການປະຕິບັດງານຂອງພະນັກງານ.

<u>ບໍ່ລວມ</u>: ການບໍລິການດ້ານການຄຸ້ມຄອງບໍລິຫານໂຄງການກໍ່ສ້າງ ແມ່ນຈັດໄວ້ໃນລະຫັດ 8671 (ການບໍລິການດ້ານສະຖາປານິກ), 8672 (ການບໍລິການດ້ານວິສະວະກຳ) ແລະ, ສຳລັບໂຄງການມອບເໝົາຄົບວົງຈອນ, 8673 (ການບໍລິການວິສະວະກຳລວມກັນຄົບວົງຈອນ).

**86602 ການບໍລິການດ້ານການໄກ່ເກ່ຍຂໍ້ຂັດແຍ່ງ**

ການບໍລິການຊ່ວຍຜ່ານການເປັນຄົນກາງຕັດສິນ ຫຼື ຜູ້ໄກ່ເກ່ຍສຳລັບການແກ້ໄຂຂໍ້ຂັດແຍ່ງ ລະຫວ່າງແຮງງານ ແລະ ຝ່າຍຄຸ້ມຄອງບໍລິຫານ, ລະຫວ່າງທຸລະກິດດ້ວຍກັນ ແລະ ລະຫວ່າງບຸກຄົນດ້ວຍກັນ.

<u>ບໍ່ລວມ</u>: ການບໍລິການດ້ານການເປັນຜູ້ຕາງໜ້າໃຫ້ແກ່ຝ່າຍໃດໜຶ່ງໃນຄະດີຂໍ້ຂັດແຍ່ງ ແລະ ການບໍລິການດ້ານທີ່ປຶກສາໃນຂົງເຂດດ້ານສາຍພົວພັນແຮງງານ ແມ່ນຈັດໄວ້ໃນລະຫັດຍ່ອຍ 86190 (ການບໍລິການດ້ານທີ່ປຶກສາທາງກົດໝາຍ ແລະ ຂໍ້ມູນອື່ນໆ), 95110 (ການບໍລິການທີ່ສ້າງຂຶ້ນໂດຍທຸລະກິດ ແລະ ອົງການຂອງຜູ້ໃຊ້ແຮງງານ) ແລະ 95200 (ການບໍລິການທີ່ຈັດຂຶ້ນໃຫ້ໂດຍສະຫະພັນກຳມະບານ), ຕາມລຳດັບ.

**86609 ການບໍລິການດ້ານການຄຸ້ມຄອງບໍລິຫານອື່ນໆທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ**

ການບໍລິການດ້ານການຄຸ້ມຄອງບໍລິຫານອື່ນໆທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ.

| 30 | ການບໍລິການດ້ານການທົດສອບເຕັກນິກ ແລະ ການວິເຄາະ (CPC 8676) |
|---|---|

**8676 ການບໍລິການດ້ານການທົດສອບເຕັກນິກ ແລະ ການວິເຄາະ**

**86761 ການບໍລິການດ້ານ ການທົດສອບຫາສ່ວນປະກອບ ແລະ ຄວາມບໍລິສຸດ ແລະ ການວິເຄາະ**

ການບໍລິການດ້ານການທົດສອບ ແລະ ການວິເຄາະ ຄຸນສົມບັດ/ອົງປະກອບທາງດ້ານເຄມີ ແລະ ຊີວະວິທະຍາຂອງວັດຖຸ ເຊັ່ນ ອາກາດ, ນໍ້າ, ສິ່ງເສດເຫຼືອ (ຈາກເທດສະບານ ແລະ ອຸດສາຫະກຳ), ນໍ້າມັນ, ໂລຫະ, ດິນ, ແຮ່ທາດ, ອາຫານ ແລະ ທາດເຄມີ. ລວມທັງການບໍລິການດ້ານການທົດສອບ ແລະ ການວິເຄາະ ທີ່ກ່ຽວຂ້ອງກັບຂົງເຂດວິທະຍາສາດ ເຊັ່ນ ຈຸລະຊີບວິທະຍາ, ເຄມີວິທະຍາ, ເຊື້ອຈຸລິນຊີວິທະຍາ, ອື່ນໆ. ບໍ່ລວມເອົາ ການບໍລິການທົດສອບທາງການແພດ ແລະ ທັນຕະແພດ.

**86762 ການບໍລິການດ້ານການທົດສອບ ແລະ ການວິເຄາະຄຸນສົມບັດ/ອົງປະກອບທາງຟີສິກ**

ການບໍລິການດ້ານການທົດສອບ ແລະ ການວິເຄາະ ຄຸນສົມບັດ/ອົງປະກອບທາງຟີຊິກ ເຊັ່ນ ຄວາມແຂງແກ່ນ, ຄວາມອ່ອນ, ສະພາວະຊັກນຳໄຟຟ້າ ແລະ ສະພາວະກຳມັນຕະພາບລັງສີຂອງວັດຖຸ ເຊັ່ນ ໂລຫະ, ປາສະຕິກ, ແຜ່ນແພ, ໄມ້, ແກ້ວ, ຊີມັງ ແລະ ວັດຖຸອື່ນໆ. ລວມທັງການທົດສອບຄວາມເຄັ່ງ, ຄວາມຫຍາບ, ຄວາມຕ້ານທານແຮງປະທະ, ຄວາມຕ້ານທານຄວາມອ່ອນລ້າຂອງວັດຖຸ, ແລະ ຜົນກະທົບຈາກອຸນຫະພູມສູງ.

**86763 ການບໍລິການດ້ານການທົດສອບ ແລະ ການວິເຄາະກ່ຽວກັບລະບົບກົນຈັກ ແລະ ໄຟຟ້າຄົບວົງຈອນ**

ການບໍລິການດ້ານທົດສອບ ແລະ ການວິເຄາະ ກ່ຽວກັບ ຄຸນລັກສະນະທາງດ້ານກົນຈັກ ແລະ ໄຟຟ້າຂອງເຄື່ອງຈັກ, ຈັກມໍເຕີ້, ລົດຍົນ, ເຄື່ອງມື, ອຸປະກອນເຄື່ອງໃຊ້, ອຸປະກອນສື່ສານ ແລະ ອຸປະກອນອື່ນໆ ຊຶ່ງໄດ້ລວມເອົາສ່ວນປະກອບທາງດ້ານກົນຈັກ ແລະ ໄຟຟ້າເຂົ້ານຳ. ໂດຍທົ່ວໄປແລ້ວ, ຜົນຂອງການທົດສອບ ແລະ ການວິເຄາະ ເປັນຮູບແບບຂອງການປະເມີນຜົນການປະຕິບັດງານ ແລະ ຄຸນລັກສະນະພຶດຕິກຳຂອງວັດຖຸທີ່ຖືກທົດສອບ. ການທົດສອບ ອາດດຳເນີນການໂດຍການໃຊ້ຕົວແບບ ຫຼື ຫຸ່ນຈຳລອງຂອງກຳປັ່ນ, ເຮືອບິນ, ເຂື່ອນ ແລະ ອື່ນໆ.

**86764 ການບໍລິການດ້ານການກວດກາເຕັກນິກ**

ການບໍລິການດ້ານການທົດສອບ ແລະ ການວິເຄາະກ່ຽວກັບທຳມະຊາດ/ລັກສະນະທາງດ້ານເຕັກນິກ ຫຼື ທາງດ້ານວິທະຍາສາດ ຊຶ່ງບໍ່ດັດແກ້ ຫຼື ບໍ່ກະທົບຕໍ່ວັດຖຸທີ່ຖືກທົດລອງ. ລວມທັງການທົດສອບດ້ວຍການຖ່າຍພາບລັງສີ, ການທົດສອບດ້ວຍແມ່ເຫຼັກ, ແລະ ດ້ວຍຄື້ນສຽງ ຂອງຊິ້ນສ່ວນ/ອາໄຫຼ່ ແລະ ໂຄງສ້າງທີ່ດຳເນີນການ ເພື່ອລະບຸ ຄວາມບົກຜ່ອງ. ການທົດສອບເຫຼົ່ານີ້ໂດຍທົ່ວໄປແມ່ນດຳເນີນການໃນພາກສະໜາມ. ບໍ່ລວມເອົາ ການບໍລິການກວດກາກ່ຽວກັບ ທຳມະຊາດ/ລັກສະນະບໍ່ແມ່ນທາງດ້ານເຕັກນິກ ຫຼື ທາງດ້ານວິທະຍາສາດ ເຊັ່ນ ການກວດກາຕຶກອາຄານ, ເຄື່ອງຈັກ ແລະ ອື່ນໆ ດ້ວຍສາຍຕາ.

**86769 ການບໍລິການດ້ານການທົດສອບເຕັກນິກ ແລະ ການວິເຄາະອື່ນໆ**

ການບໍລິການດ້ານການທົດສອບທາງເຕັກນິກ ແລະ ການວິເຄາະອື່ນໆທັງໝົດ ທີ່ບໍ່ໄດ້ກຳນົດຢູ່ບ່ອນອື່ນ.

| 31 | **ການບໍລິການທີ່ປິ່ນອ້ອມການແຈກຈ່າຍພະລັງງານ (CPC 887)** |
|---|---|

**ການບໍລິການທີ່ປິ່ນອ້ອມການແຈກຈ່າຍພະລັງງານ:**

ການບໍລິການດ້ານການສົ່ງຜ່ານ ແລະ ແຈກຈ່າຍໄຟຟ້າ, ເຊື້ອໄຟອາຍແກັສ ແລະ ອາຍນ້ຳ ແລະ ນ້ຳຮ້ອນໃຫ້ແກ່ຄົວເຮືອນ, ອຸດສາຫະກຳ, ທຸລະກິດ ແລະ ຜູ້ໃຊ້ອື່ນໆ ໂດຍອີງຕາມຄ່າຕອບແທນ ຫຼື ສັນຍາເປັນພື້ນຖານ.

ບໍ່ລວມ: ການບໍລິການດ້ານການຂົນສົ່ງນ້ຳມັນດິບ ແລະ ອາຍແກັສທຳມະຊາດຜ່ານທໍ່ ໂດຍອີງຕາມຄ່າຕອບແທນ ຫຼື ສັນຍາເປັນພື້ນຖານ ແມ່ນຈັດໄວ້ໃນລະຫັດຍ່ອຍ 71310.

| 32 | **ການບໍລິການດ້ານການຈັດວາງຕຳແໜ່ງງານ ແລະ ການສະໜອງບຸກຄະລາກອນ (CPC 872)** |
|---|---|

**872 8720 ການບໍລິການດ້ານການຈັດວາງຕຳແໜ່ງງານ ແລະ ການສະໜອງບຸກຄະລາກອນ**

**87201 ການບໍລິການດ້ານການຊອກຫາຜູ້ບໍລິຫານ**

ການບໍລິການນີ້ ແມ່ນກວມເອົາການຊອກຫາ, ການຄັດເລືອກ ແລະ ການຢັ້ງຢືນບຸກຄະລາກອນທີ່ເປັນຜູ້ບໍລິຫານສຳລັບການຈ້າງງານໂດຍຄົນອື່ນ. ໝວດນີ້ ກວມເອົາການບໍລິການທີ່ສະໜອງໃຫ້ໂດຍຜູ້ບໍລິຫານ ແລະ ຜູ້ຈັດການອາວຸໂສ ຊຶ່ງໂດຍທົ່ວໄປແລ້ວ ເປັນຜູ້ທີ່ມີໜ້າທີ່ ລວມທັງ ບັນດາກິດຈະກຳການວາງແຜນ, ການຈັດຕັ້ງ, ການຊີ້ນຳ ແລະ ການຄວບຄຸມຂອງທຸລະກິດສ່ວນບຸກຄົນ ແລະ ບໍລິສັດມະຫາຊົນ ຜ່ານຜູ້ບໍລິຫານຂັ້ນລຸ່ມ. ການບໍລິການອາດສະໜອງໃຫ້ແກ່ຜູ້ຈ້າງງານທີ່ມີທ່າແຮງ ຫຼື ໃຫ້ແກ່ຜູ້ທີ່ຈະເປັນພະນັກງານໃນອະນາຄົດ ແລະ ອາດລວມເອົາ ການກຳນົດໜ້າວຽກຮັບຜິດຊອບຂອງຕຳແໜ່ງງານ, ການຄັດເລືອກ ແລະ ການທົດສອບ ຜູ້ສະໝັກ, ການກວດສອບຜູ້ຢັ້ງຢືນວຽກ ແລະ ກາຄົ້ນຄວ້າຂໍ້ມູນອື່ນໆ.

**87202 ການບໍລິການດ້ານການຈັດວາງບຸກຄະລາກອນຊ່ວຍວຽກຫ້ອງການ ແລະ ບຸກຄະລາກອນອື່ນໆ**

ການບໍລິການກວມເອົາການຄັດເລືອກ, ການຢັ້ງຢືນ ແລະ ການຈັດວາງຕຳແໜ່ງງານຂອງຜູ້ສະໝັກໃນການຈ້າງງານແບບໄລຍະຍາວ ຫຼື ຊົ່ວຄາວໂດຍຄົນອື່ນ, ຍົກເວັ້ນການບໍລິການດ້ານການຊອກຫາຜູ້ບໍລິຫານ. ການບໍລິການນີ້ອາດສະໜອງໃຫ້ແກ່ຜູ້ຈ້າງງານທີ່ມີທ່າແຮງ ຫຼື ໃຫ້ແກ່ຜູ້ທີ່ຈະເປັນພະນັກງານໃນອະນາຄົດ ແລະ ອາດລວມເອົາ ການກຳນົດໜ້າວຽກຮັບຜິດຊອບຂອງຕຳແໜ່ງງານ, ການຄັດເລືອກ ແລະ ການທົດສອບຜູ້ສະໝັກ, ການກວດສອບຜູ້ຢັ້ງຢືນວຽກ ແລະ ການຄົ້ນຄວ້າຂໍ້ມູນອື່ນໆ. ລວມເຖິງ ການຈັດວາງຕຳແໜ່ງງານເລຂານຸການ, ສະໝຽນ, ພະນັກງານຕ້ອນຮັບ, ນາຍບັນຊີ, ຜູ້ປ້ອນຂໍ້ມູນ, ນັກພິມດີດ, ພະນັກງານໃຊ້ຄອມພິວເຕີເວີດໂປແຊສເຊີ, ພະຍາບານ, ນາງ/ນາຍແບບ, ຄົນຮັບໃຊ້ໃນເຮືອນ, ລູກເຮືອ ແລະ ອື່ນໆ.

**87203 ການບໍລິການດ້ານການສະໜອງບຸກຄະລາກອນຊ່ວຍວຽກຫ້ອງການ**

ການບໍລິການບົນພື້ນຖານຄ່າຕອບແທນ ຫຼື ສັນຍາໃຫ້ແກ່ລູກຄ້າ ກວມເອົາການສະໜອງບຸກຄະລາກອນຊ່ວຍວຽກຫ້ອງການ ແບບໄລຍະຍາວ ຫຼື ຊົ່ວຄາວ ທີ່ຈ້າງໂດຍຜູ້ສະໜອງທີ່ຈ່າຍເງິນຄ່າຕອບແທນໃຫ້ແກ່ພວກເຂົາ ເປັນພື້ນຖານ. ລວມເຖິງ ການສະໜອງບຸກຄະລາກອນ ເຊັ່ນ ເລຂານຸການ, ສະໝຽນ, ພະນັກງານຕ້ອນຮັບ, ນາຍບັນຊີ, ຜູ້ປ້ອນຂໍ້ມູນ, ນັກພິມດີດ, ພະນັກງານໃຊ້ຄອມພິວເຕີເວີດໂປແຊສເຊີ.

**87204 ການບໍລິການດ້ານການສະໜອງບຸກຄະລາກອນຊ່ວຍວຽກພາຍໃນເຮືອນ**

ການບໍລິການ ບົນພື້ນຖານຄ່າຕອບແທນ ຫຼື ສັນຍາໃຫ້ແກ່ລູກຄ້າ ກວມເອົາການສະໜອງບຸກຄະລາກອນຊ່ວຍວຽກພາຍໃນເຮືອນ/ບໍລິສັດ ແບບໄລຍະຍາວ ຫຼື ຊົ່ວຄາວ ທີ່ຈ້າງໂດຍຜູ້ສະໜອງທີ່ຈ່າຍເງິນຄ່າຕອບແທນໃຫ້ແກ່ພວກເຂົາ. ລວມເຖິງ ການສະໜອງຄົນຮັບໃຊ້, ຜູ້ເບິ່ງແຍງເດັກນ້ອຍ, ແມ່ບ້ານ, ຄົນຢູ່ນຳ ແລະ ອື່ນໆ.

ບໍ່ລວມ: ການບໍລິການດ້ານການສະໜອງການບໍລິການພາຍໃນເຮືອນທີ່ຊຳນານສະເພາະ ໂດຍຜ່ານການເປັນຜູ້ຮັບຈ້າງຈາກການຈ່າຍເງິນຄ່າແຮງຂອງຜູ້ສະໜອງ ແມ່ນໄດ້ຈັດແບ່ງຕາມການສະໜອງບໍລິການທີ່ປະຕິບັດ, ຕ.ຢ. ການບໍລິການທຳຄວາມສະອາດ, ລະຫັດ 8740, ຫຼື ການບໍລິການບຳລຸງຮັກສາເດີ່ນຫຍ້າ, ລະຫັດຍ່ອຍ 88110 (ການບໍລິການປົ່ນອ້ອມການກະສິກຳ).

**87205 ການບໍລິການດ້ານການສະໜອງກຳມະກອນ/ແຮງງານໃຫ້ແກ່ທຸລະກິດ ຫຼື ອຸດສາຫະກຳອື່ນໆ**

ການບໍລິການ ບົນພື້ນຖານຄ່າຕອບແທນ ຫຼື ສັນຍາໃຫ້ແກ່ລູກຄ້າ ກວມເອົາການສະໜອງກຳມະກອນ/ແຮງງານເພື່ອເຮັດວຽກໃນອຸດສາຫະກຳ ແບບໄລຍະຍາວ ຫຼື ຊົ່ວຄາວ ທີ່ຈ້າງໂດຍຜູ້ສະໜອງທີ່ຈ່າຍເງິນເດືອນໃຫ້ແກ່ພວກເຂົາເປັນພື້ນຖານ. ລວມເຖິງການບໍລິການສະໜອງກຳມະກອນກໍ່ສ້າງ, ຜູ້ບຳລຸງຮັກສາເຄື່ອງຈັກ, ຄົນຂັບລົດ, ຊ່າງປະກອບເຄື່ອງຈັກ, ຊ່າງບັງຄັບເຄື່ອງຈັກທີ່ໃຊ້ໃນວຽກງານໂລຫະ, ຜູ້ອອກແຮງງານ, ກຳມະກອນຍ້າຍເຄື່ອງ, ຜູ້ສົ່ງເຄື່ອງ ແລະ ອື່ນໆ.

**87206 ການບໍລິການດ້ານການສະໜອງບຸກຄະລາກອນພະຍາບານ**

ການບໍລິການບົນພື້ນຖານຄ່າຕອບແທນ ຫຼື ສັນຍາໃຫ້ແກ່ລູກຄ້າ ກວມເອົາການສະໜອງບຸກຄະລາກອນພະຍາບານ ແບບໄລຍະຍາວ ຫຼື ຊົ່ວຄາວ ທີ່ຈ້າງໂດຍຜູ້ສະໜອງທີ່ຈ່າຍເງິນເດືອນໃຫ້ແກ່ພວກເຂົາເປັນພື້ນຖານ. ລວມເຖິງການບໍລິການດ້ານການສະໜອງພະຍາບານ, ຜູ້ຊ່ວຍພະຍາບານ ແລະ ການຊ່ວຍເຫຼືອເບິ່ງແຍງສຸຂະພາບອື່ນໆ.

**87209 ການບໍລິການດ້ານການສະໜອງບຸກຄະລາກອນອື່ນໆ**

ການບໍລິການດ້ານການສະໜອງບຸກຄະລາກອນອື່ນໆ ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ.

**33 ການບໍລິການດ້ານການສືບສວນ-ສອບສວນ ແລະ ຮັກສາຄວາມປອດໄພ (CPC 873)**

**873 8730 ການບໍລິການດ້ານການສືບສວນ-ສອບສວນ ແລະ ຮັກສາຄວາມປອດໄພ**

**87301 ການບໍລິການດ້ານການສືບສວນ-ສອບສວນ**

ການບໍລິການ ຊຶ່ງປະກອບດ້ວຍການສອບສວນຄະດີທີ່ໄດ້ສັ່ງໃຫ້ໂດຍລູກຄ້າ, ທີ່ກ່ຽວຂ້ອງກັບອາຊະຍາກຳ, ການລັກຂະໂມຍ, ການສໍ້ໂກງ, ການລັກເຄື່ອງພາຍໃນຮ້ານຄ້າ, ຄວາມບໍ່ຊື່ສັດ, ການຫາຍໄປຂອງບຸກຄົນ, ສາຍພົວພັນພາຍໃນຄອບຄົວ ແລະ ການປະຕິບັດອື່ນໆທີ່ຜິດກົດໝາຍ ຫຼື ຖືກກົດໝາຍ. ລວມເຖິງ ການສອບສວນພາຍໃນ ແລະ ການສອບສວນນອກເຄື່ອງແບບ ແລະ ການບໍລິການປ້ອງກັນການລັກເຄື່ອງພາຍໃນຮ້ານຄ້າ.

**87302 ການບໍລິການທີ່ປຶກສາດ້ານຄວາມປອດໄພ**

ການບໍລິການ ປະກອບດ້ວຍການກຳນົດຄວາມຕ້ອງການຂອງລູກຄ້າ ແລະ ການໃຫ້ຄຳປຶກສາ ແລະ ຂໍ້ແນະນຳ ກ່ຽວກັບປະເພດການຮັກສາຄວາມໄພທີ່ເໝາະສົມທີ່ສຸດສຳລັບລູກຄ້າ ຫຼື ເພື່ອການປັບປຸງລະບົບທີ່ມີຢູ່ແລ້ວ.

**87303 ການບໍລິການດ້ານການຕິດຕາມລະບົບເຕືອນໄພ**

ການບໍລິການ ກວມເອົາການຕິດຕາມ ແລະ ບໍາລຸງຮັກສາອຸປະກອນລະບົບຮັກສາຄວາມປອດໄພ ເຊັ່ນ: ເຄື່ອງເຕືອນຂີ້ລັກ ແລະ ໄຟໄໝ້, ໂດຍການຮັບສັນຍານເຕືອນໄພ, ການຢັ້ງຢືນ ຫຼື ກວດກາ ວ່າທຸກລະບົບແມ່ນຍັງເຮັດວຽກໄດ້ດີ ແລະ ການສົ່ງສັນຍານຫາເຈົ້າໜ້າທີ່ຕໍາຫຼວດ, ກົມດັບເພີງ ຫຼື ຜູ້ໄດ້ຮັບມອບໝາຍທີ່ກ່ຽວຂ້ອງອື່ນໆ.

**87304 ການບໍລິການລົດຫຸ້ມເກາະ**

ການບໍລິການ ກວມເອົາການສະໜອງລົດຫຸ້ມເກາະ ເພື່ອຮັບ ແລະ ສົ່ງເງິນ, ໃບຮັບເງິນ ຫຼື ສິ່ງມີຄ່າອື່ນໆ, ໂດຍບຸກຄະລາກອນທີ່ຖືກຈ້າງ ເພື່ອປົກປ້ອງຊັບສິນທີ່ກໍາລັງເຄື່ອນຍ້າຍໂດຍກົງ. ໂດຍທົ່ວໄປແລ້ວ, ການບໍລິການ ຍັງມີຄວາມໝາຍເຖິງການບໍລິການເກັບເອົາເງິນ ແລະ ການຝາກເງິນຂອງທະນາຄານ, ການເຄື່ອນຍ້າຍຫຼັກຊັບ ແລະ ອື່ນໆ.

**87305 ການບໍລິການດ້ານການປ້ອງກັນ**

ການບໍລິການ ປະກອບດ້ວຍການສະໜອງບໍລິການປ້ອງກັນຜ່ານບຸກຄະລາກອນທີ່ຖືກຈ້າງ ເພື່ອຮັບປະກັນຄວາມປອດໄພຂອງບຸກຄົນ ຫຼື ຊັບສິນຂອງບຸກຄົນ, ອຸດສາຫະກໍາ ແລະ ຂອງທຸລະກິດ ໂດຍປ້ອງກັນຈາກໄຟໄໝ້, ການລັກຂະໂມຍ, ການທໍາລາຍ ຫຼື ການເຂົ້າໄປໂດຍຜິດກົດໝາຍ. ລວມເຖິງ ການບໍລິການລາດຕະເວນ ແລະ ການສອບສວນ, ການບໍລິການຍາມປ້ອງກັນຄວາມປອດໄພ, ການບໍລິການປ້ອງກັນ, ການບໍລິການເຝົ້າຍາມ, ການບໍລິການຄວບຄຸມການຈອດລົດ ແລະ ການຄວບຄຸມການເຂົ້າເຖິງ.

**87309 ການບໍລິການດ້ານການຮັກສາຄວາມປອດໄພອື່ນໆ**

ການບໍລິການດ້ານການຮັກສາຄວາມປອດໄພ ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ.

| 34 | **ການບໍລິການທີ່ປຶກສາທີ່ກ່ຽວຂ້ອງກັບວິທະຍາສາດ ແລະ ເຕັກນິກ (CPC 8675)** |
|---|---|

**8675 ການບໍລິການທີ່ປຶກສາທີ່ກ່ຽວຂ້ອງກັບວິທະຍາສາດ ແລະ ເຕັກນິກ**

**86751 ການບໍລິການດ້ານການສໍາຫຼວດຫາທ່າອ່ຽງທາງດ້ານທໍລະນີສາດ, ທໍລະນີຟີສິກ ແລະ ທາງດ້ານວິທະຍາສາດອື່ນໆ**

ການບໍລິການທີ່ປຶກສາທາງດ້ານທໍລະນີສາດ, ທໍລະນີຟີສິກ ແລະ ທາງວິທະຍາສາດອື່ນໆ ເນື່ອງຈາກ ການບໍລິການເຫຼົ່ານີ້ກ່ຽວຂ້ອງກັບສະຖານທີ່ຕັ້ງຂອງການມີບໍ່ແຮ່, ນໍ້າມັນ, ແລະ ແກັສ ແລະ ນໍ້າລອດພື້ນ ໂດຍການສຶກສາເຖິງ ຄຸນສົມບັດຂອງພື້ນໂລກ, ການປະກອບເປັນຮູບຮ່າງຂອງຫີນ ແລະ ໂຄງສ້າງຂອງຊັ້ນຫີນ. ໃນນີ້, ລວມທັງ ການບໍລິການດ້ານການວິເຄາະຜົນຂອງການສໍາຫຼວດໃຕ້ໜ້າດິນ, ການສຶກສາຕົວຢ່າງພື້ນດິນ ແລະ ໃຈກາງ ແລະ ການຊ່ວຍ ແລະ ໃຫ້ຄໍາແນະນໍາກ່ຽວກັບການພັດທະນາ ແລະ ຂຸດຄົ້ນເອົາຊັບພະຍາກອນແຮ່ທາດ.

**86752 ການບໍລິການດ້ານການສໍາຫຼວດໃຕ້ໜ້າດິນ**

ການບໍລິການ ສັງລວມຂໍ້ມູນກ່ຽວກັບຮູບແບບໂຄງສ້າງໃຕ້ໜ້າດິນ ໂດຍວິທີການຕ່າງໆ, ລວມທັງເຄື່ອງມືວັດແທກການສັ່ນສະເທືອນ, ຄວາມໜາແໜ້ນ ແລະ ວິທີການສໍາຫຼວດໃຕ້ໜ້າດິນອື່ນໆ.

**86753 ການບໍລິການດ້ານການສາຫຼວດໜ້າດິນ**

ການບໍລິການສັງລວມຂໍ້ມູນກ່ຽວກັບຮູບຮ່າງ, ຕໍາແໜ່ງ ແລະ/ຫຼື ຂອບເຂດຂອງສັດສ່ວນຂອງໜ້າດິນຂອງໂລກ ໂດຍວິທີການຕ່າງໆ, ລວມທັງ ການສໍາຫຼວດທາງຜ່ານ, ດ້ານການຖ່າຍພາບ ແລະ ດ້ານອຸທົກກະສາດ/ນໍ້າ, ເພື່ອຈຸດປະສົງຂອງການກະກຽມແຕ້ມແຜນທີ່.

**86754 ການບໍລິການດ້ານການແຕ້ມແຜນທີ່**

ການບໍລິການດ້ານການແຕ້ມແຜນທີ່ປະກອບດ້ວຍການກະກຽມ ແລະ ທົບທວນຄືນແຜນທີ່ທຸກປະເພດ (ຕົວຢ່າງ: ເສັ້ນທາງ, ການວັດແທກດິນ, ແຜນທີ່ອະທິບາຍພູມມີສັນຖານ, ການວັດລະດັບດິນ, ການວັດແທກນໍ້າ) ຊຶ່ງນໍາໃຊ້ຜົນຂອງກິດຈະກໍາການສໍາຫຼວດຕ່າງໆ, ແຜນທີ່ອື່ນໆ, ແລະ ແຫຼ່ງຂໍ້ມູນອື່ນໆ.

| | |
|---|---|
| 35 | **ການບໍລິການດ້ານການບໍາລຸງຮັກສາ ແລະ ສ້ອມແປງອຸປະກອນ (ບໍ່ລວມເຮືອດໍານໍ້າ, ເຄື່ອງບິນ ຫຼື ອຸປະກອນຂົນສົ່ງອື່ນໆ) (CPC 633+8861-8866)** |

**633 ການບໍລິການດ້ານການສ້ອມແປງເຄື່ອງໃຊ້ສ່ວນບຸກຄົນ ແລະ ເຄື່ອງໃຊ້ໃນຄົວເຮືອນ**

ບໍ່ລວມ: ການບໍລິການສ້ອມແປງລົດໃຫຍ່ ແມ່ນໄດ້ກໍານົດຢູ່ໃນຂະແໜງຍ່ອຍ 61120 (ການບໍລິການດ້ານການບໍາລຸງຮັກສາ ແລະ ສ້ອມແປງພາຫະນະລົດໃຫຍ່ທີ່ໃຊ້ຈັກມໍເຕີ້) ແລະ 61220 (ການບໍລິການ ດ້ານການບໍາລຸງຮັກສາ ແລະ ການສ້ອມແປງລົດຈັກ ແລະ ລົດຂີ່ເທິງຫິມະ).

ການບໍລິການດ້ານການບໍາລຸງຮັກສາ ແລະ ສ້ອມແປງ ເຄື່ອງຈັກ ແລະ ອຸປະກອນເຄື່ອງຈັກຮັບໃຊ້ໃນຫ້ອງການ ແມ່ນໄດ້ກໍານົດຢູ່ໃນຂະແໜງຍ່ອຍລະຫັດ 84500.

**6330 ການບໍລິການດ້ານການສ້ອມແປງເຄື່ອງໃຊ້ສ່ວນບຸກຄົນ ແລະ ເຄື່ອງໃຊ້ໃນຄົວເຮືອນ**

**63301 ການບໍລິການດ້ານການສ້ອມແປງເຄື່ອງໜັງ ແລະ ເກີບ**

ການບໍລິການສ້ອມແປງສະເພາະ ຜະລິດຕະພັນເກີບທຸກປະເພດ, ຫີບໃສ່ເຄື່ອງເດີນທາງ, ກະເປົ໋າຖື ແລະ ເຄື່ອງໜັງອື່ນໆ. (ເຄື່ອງໃຊ້/ຜະລິດຕະພັນ ແມ່ນຖືກການົດໄວ້ໃນ CPC/292-296)

**63302 ການບໍລິການດ້ານການສ້ອມແປງອຸປະກອນເຄື່ອງໃຊ້ໄຟຟ້າໃນຄົວເຮືອນ**

ການບໍລິການສ້ອມແປງສະເພາະ ອຸປະກອນເຄື່ອງໃຊ້ໄຟຟ້າໃນຄົວເຮືອນ, ຕົວຢ່າງ /ຕູ້ເຢັນ ແລະ ຕູ້ແຊ່ເຢັນ, ເຄື່ອງຈັກລ້າງຖ້ວຍ, ເຄື່ອງຈັກຊັກຜ້າ ແລະ ເຄື່ອງຈັກອົບແຫ້ງ ທີ່ໃຊ້ໃນຄົວເຮືອນ, ອຸປະກອນເຄື່ອງຄົວກິນໃນເຮືອນ ແລະ ອຸປະກອນທໍາຄວາມຮ້ອນ, ຈັກດູດຝຸ່ນ, ແລະ ເຄື່ອງໃຊ້ຂະໜາດນ້ອຍອື່ນໆໃນເຮືອນ. (ຜະລິດຕະພັນ ແມ່ນຖືກກໍານົດໄວ້ໃນ CPC 448)

**63303 ການບໍລິການດ້ານການສ້ອມແປງ ໂມງ, ໂມງຕັ້ງ/ແຂວນ ແລະ ເຄື່ອງປະດັບອັນຍະມະນີ**

ການບໍລິການສ້ອມແປງສະເພາະ ໂມງ, ໂມງຕັ້ງ/ແຂວນ ແລະ ເຄື່ອງປະດັບອັນຍະມະນີ (ຜະລິດຕະພັນດັ່ງກ່າວ ແມ່ນຖືກກໍານົດໄວ້ໃນ CPC 163, 484)

**63304 ການບໍລິການດ້ານການສ້ອມແປງ ເຄື່ອງນຸ່ງຫົ່ມ ແລະ ແຜ່ນແພໃຊ້ໃນຄົວເຮືອນ**

ການບໍລິການສ້ອມແປງສະເພາະ ເຄື່ອງນຸ່ງຫົ່ມ ແລະ ຜ້າ/ແຜ່ນແພໃຊ້ໃນຄົວເຮືອນ. (ຜະລິດຕະພັນດັ່ງກ່າວ ແມ່ນຖືກກໍານົດໄວ້ໃນ CPC 26-28)

**63309 ການບໍລິການສ້ອມແປງເຄື່ອງໃຊ້ສ່ວນບຸກຄົນ ແລະ ເຄື່ອງໃຊ້ໃນຄົວເຮືອນ ທີ່ບໍ່ໄດ້ກໍານົດຢູ່ບ່ອນອື່ນ**

ການບໍລິການສ້ອມແປງສະເພາະ ອຸປະກອນ ແລະ ເຄື່ອງໃຊ້ໃນຄົວເຮືອນ, ທີ່ບໍ່ໄດ້ກໍານົດຢູ່ບ່ອນອື່ນ, ຕົວຢ່າງ ເຟີນີເຈີໃນເຮືອນ, ວິທະຍຸ ແລະ ໂທລະທັດ, ອຸປະກອນສໍາລັບແສງໄຟ ແລະ ເຄື່ອງໃຊ້ສ່ວນບຸກຄົນ ແລະ ເຄື່ອງໃຊ້ໃນຄົວເຮືອນອື່ນໆ. (ຜະລິດຕະພັນດັ່ງກ່າວ ແມ່ນຖືກກໍານົດໄວ້ໃນ CPC 314-319, 3226, 3719, 372, 3811, 3813-3816, 383, 429, 465, 47)

| 36 | **ການບໍລິການດ້ານການທໍາຄວາມສະອາດອາຄານ (CPC 874)** |
|---|---|

**874 8740 ການບໍລິການດ້ານການທໍາຄວາມສະອາດອາຄານ**

**87401 ການບໍລິການດ້ານການຂ້າເຊື້ອ ແລະ ກໍາຈັດສັດ/ແມງໄມ້**

ການບໍລິການນີ້ ປະກອບດ້ວຍການທໍາຄວາມສະອາດທີ່ພັກອາໄສ ແລະ ອາຄານອື່ນໆ ແລະ ກໍາຈັດແມງໄມ້, ໜູ ແລະ ແມງລົບກວນອື່ນໆ. ລວມທັງ ການບໍລິການຣົມຄວັນຂ້າພະຍາດ ແລະ ການບໍລິການຄວບຄຸມແມງລົບກວນ.

**87402 ການບໍລິການດ້ານການທໍາຄວາມສະອາດປະຕູປ່ອງຢ້ຽມ**

ການບໍລິການນີ້ ປະກອບດ້ວຍການທໍາຄວາມສະອາດປ່ອງຢ້ຽມທີ່ຢູ່ອາໄສ ແລະ ອາຄານຕ່າງໆ. ໃນນີ້ລວມທັງ ການບໍລິການທໍາຄວາມສະອາດປະຕູປ່ອງຢ້ຽມຂ້າງນອກໂດຍການໃຊ້ບັນໄດແຂວນຍ່ອນຂຶ້ນລົງ.

**87403 ການບໍລິການດ້ານການເບິ່ງແຍງທໍາຄວາມສະອາດ**

ການບໍລິການນີ້ ປະກອບດ້ວຍ ການທໍາຄວາມສະອາດ ແລະ ການບໍາລຸງຮັກສາທີ່ຢູ່ອາໄສ ແລະ ອາຄານອື່ນໆ. ໃນນີ້ລວມທັງ ການທໍາຄວາມສະອາດພື້ນ ແລະ ເຄືອບເງົາ, ການທໍາຄວາມສະອາດຝາເຮືອນ/ອາຄານດ້ານໃນ, ການຂັດເງົາເຄື່ອງເຟີນີເຈີ ແລະ ການບໍລິການເບິ່ງແຍງທໍາຄວາມສະອາດ ແລະ ການບໍາລຸງຮັກສາອື່ນໆ.

**87409 ການບໍລິການດ້ານການທໍາຄວາມສະອາດອາຄານອື່ນໆ**

ການບໍລິການອະນາໄມອາຄານທີ່ບໍ່ໄດ້ກຳນົດຢູ່ບ່ອນອື່ນ. ລວມມີ ການອະນາໄມ ເຕົາຫຼໍ່ ແລະ ເຄມີ.

**ຍົກເວັ້ນ**: ບໍລິການອະນາໄມຂ້າງນອກອາຄານ ແມ່ນກຳນົດຢູ່ຂະແໜງຍ່ອຍ 51790 (ວຽກອະນາໄມສຳເລັດທັງອາຄານ ແລະ ຂັ້ນຕອນສຸດທ້າຍ ອື່ນໆ). ບໍລິການບຳລຸງຮັກສາເດີ່ນຫຍ້າແມ່ນກຳນົດຢູ່ຂະແໜງຍ່ອຍ 88110 (ບໍລິການ ເສີມດ້ານກະສິກຳ)

| 37 | **ການບໍລິການດ້ານການຖ່າຍພາບ (CPC 875)** |
|---|---|

**875 8750 ການບໍລິການດ້ານການຖ່າຍພາບ**

**87501 ການບໍລິການດ້ານການຖ່າຍພາບຄົນ**

ບໍລິການລວມມີການຖ່າຍພາບຄົນ ແລະ ສິ່ງຂອງອື່ນໆຢູ່ບ່ອນຖ່າຍທຳ ຫຼື ສະຖານທີ່ອື່ນໆ ເຊັ່ນ ຢູ່ຫ້ອງການ ຫຼື ບ້ານຂອງລູກຄ້າ. ຮູບທີ່ຖ່າຍຈະຕ້ອງເປັນຮູບທີ່ງາມຕາມແບບທຳມະຊາດ ແລະ ລັກສະນະສະເພາະ. ໂດຍທົ່ວໄປແລ້ວ ການບໍລິການລວມມີ ການລ້າງຮູບ ແລະ ການພິມຕາມຄວາມຕ້ອງການຂອງລູກຄ້າ. ລວມທັງ ການຖ່າຍ ຮູບຕິດໜັງສືເດີນທາງ ຫຼື ບັດປະຈຳຕົວ, ເດັກອ່ອນ ແລະ ເດັກນ້ອຍ, ຄອບຄົວ ຫຼື ຮູບທະຫານ, ຖ່າຍຮູບແຟຊັ່ນ, ແລະ ຮູບເປັນກຸ່ມ.

**87502 ການບໍລິການດ້ານການໂຄສະນາ ແລະ ຕິດພັນກັບການຖ່າຍຮູບ**

ບໍລິການລວມມີການຖ່າຍຮູບສິນຄ້າ, ຜະລິດຕະພັນອຸດສາຫະກຳ, ເສື້ອຜ້າແຟຊັ່ນ ແລະ ເຄື່ອງນຸ່ງອື່ນໆ, ເຄື່ອງຈັກ, ອາຄານ, ຄົນ ແລະ ສິ່ງອື່ນໆ ສຳລັບໃຊ້ໃນການປະຊາສຳພັນ, ຮູພາບໂຄສະນາ ຫຼື ວັນນະຄະດີ, ເຊັ່ນ ປົດລາຍງານປະຈຳປີ, ໃບໂຄສະນາສິນຄ້າ, ໂຄສະນາໜັງສືພິມ, ປື້ມລາຍການສິ່ງຂອງ ຫຼື ແບບອາຫານ ແລະ ເຄື່ອງດື່ມ. ໂດຍທົ່ວໄປການບໍລິການເຫຼົ່ານີ້ລວມມີ ການລ້າງຮູບ ແລະ ພິມ ຮູບຕ່າງໆຕາມຈຸດປະສົງຂອງລູກຄ້າ.

**87503 ການບໍລິການດ້ານການຖ່າຍຮູບເຄື່ອນໄຫວ**

ບໍລິການລວມມີການຖ່າຍຮູບ ກິດຈະກຳ ສົດ, ເຊັ່ນ ການແຕ່ງງານ, ສຳເລັດການສຶກສາ, ການປະຊຸມ, ງານລ້ຽງ, ລະແດງແຟຊັ່ນ, ກິລາ ແລະ ກິດຈະກຳຂ່າວ, ແລະ ກິດຈະກຳອື່ນໆທີ່ເປັນໜ້າສົນໃຈໃນປະຈຸບັນ. ໂດຍທົ່ວໄປການບໍລິ ການເຫຼົ່ານີ້ລວມມີ ການລ້າງຮູບ ແລະ ພິມ ຮູບຕ່າງໆຕາມຈຸດປະສົງຂອງລູກຄ້າ.

**87504 ການບໍລິການດ້ານການຖ່າຍຮູບພິເສດ**

ບໍລິການລວມມີການຖ່າຍຮູບ ຄົນ, ສິ່ງຂອງ ຫຼື ການໃຊ້ທິວທັດ ແລະ ເຕັກນິກທີ່ພິເສດ. ໂດຍທີ່ໄປແລ້ວການ ບໍລິ ການເຫຼົ່ານີ້ຍັງລວມເຖິງ ການພັດທະນາ ແລະ ການພິມຮູບ. ຕົວຢ່າງ ການບໍລິການຮູບຖ່າຍຈາກເຮືອບິນ, ພື້ນນ້ຳ, ການແພດ ແລະ ຊີວະວິທະຍາ ແລະ ການຖ່າຍຮູບສິ່ງນ້ອຍໆ.

**87505 ການບໍລິການດ້ານການຕົບແຕ່ງຮູບພາບ**

ການບໍລິການນີ້ ຕົ້ນຕໍ ແມ່ນປະກອບດ້ວຍ ການລ້າງຟິມຮູບ ແລະ ພິມຮູບອື່ນໆສໍາລັບຜູ້ອື່ນ ອີງຕາມຄວາມຕ້ອງການສະເພາະຂອງລູກຄ້າ. ການບໍລິການເຫຼົ່ານີ້ອາດລວມເຖິງການຂະຫຍາຍຟິມ ຫຼື ຟິມສະໄລ, ຕົບແຕ່ງຮູບ ຂາວ ແລະ ດໍາ, ພິມສີ, ສໍາເນົາຟິມສະໄລ ແລະ ລ້າງຟິມ, ພິມຄືນໃໝ່ ແລະ ອື່ນໆ. ພ້ອມນັ້ນ, ຍັງລວມທັງການບໍລິການດ້ານການກະກຽມຮູບຟິມສະໄລ.

**87506 <u>ການບໍລິການດ້ານການຕົບແຕ່ງຮູບພາບເຄື່ອນໄຫວທີ່ບໍ່ກ່ຽວຂ້ອງກັບອຸດສາຫະກໍາຮູບເງົາ ແລະ ໂທລະພາບ</u>**

ການບໍລິການນີ້ ປະກອບດ້ວຍ ການລ້າງຟິມຮູບເຄື່ອນໄຫວ ຂອງທັງນັກຖ່າຍຮູບສະໝັກຫຼິ້ນ ແລະ ລູກຄ້າໃນທາງທຸລະກິດ.

**<u>ບໍ່ລວມ:</u>** ການບໍລິການດ້ານການຕົບແຕ່ງຮູບເຄື່ອນໄຫວທີ່ກ່ຽວຂ້ອງກັບອຸດສາຫະກໍາຮູບເງົາ ແລະ ໂທລະພາບ ຖືກກໍານົດຢູ່ໃນຂະແໜງຍ່ອຍ 96112 (ການບໍລິການດ້ານການຜະລິດຮູບເງົາ ຫຼື ວີດີໂອ).

**87507 <u>ການບໍລິການດ້ານການກູ້ຄືນ, ການສໍາເນົາ ແລະ ເສີມແຕ່ງຮູບພາບ</u>**

ການບໍລິການນີ້ ປະກອບດ້ວຍການກູ້ຄືນຮູບພາບເກົ່າ, ການສໍາເນົາຈາກຮູບ, ການເສີມແຕ່ງ ແລະ ວິທີການພິເສດອື່ນໆທີ່ເຮັດໃຫ້ເກີດຜົນຕໍ່ຮູບພາບ.

**87509 <u>ການບໍລິການດ້ານຮູບພາບອື່ນໆ</u>**

ການບໍລິການດ້ານຮູບພາບອື່ນໆທີ່ບໍ່ໄດ້ກໍານົດຢູ່ບ່ອນອື່ນ.

| | |
|---|---|
| **38** | **ການບໍລິການດ້ານການຫຸ້ມຫໍ່ (CPC 876)** |

**876 8760 87600 <u>ການບໍລິການດ້ານການຫຸ້ມຫໍ່</u>**

ການບໍລິການນີ້ ປະກອບດ້ວຍ ການຫຸ້ມຫໍ່ສິນຄ້າ ສໍາລັບຜູ້ອື່ນ ບົນພື້ນຖານຄ່າຕອບແທນ ຫຼື ສັນຍາ, ເຊັ່ນ ຜະລິດຕະພັນອາຫານ, ຢາ, ນໍ້າຢາທໍາຄວາມສະອາດເຮືອນ, ເຄື່ອງໃຊ້ໃນຫ້ອງນໍ້າ ແລະ ເຄື່ອງໃຊ້ຮາດແວຕ່າງໆ ໂດຍນໍາໃຊ້ເຕັກນິກຕ່າງໆທີ່ຫຼາກຫຼາຍໃນການຫຸ້ມຫໍ່ ແບບໃຊ້ເຄື່ອງຈັກອັດຕະໂນມັດ ຫຼື ໃຊ້ມື ລວມທັງ ການເຮັດເປັນຮູບແບບຟອງອາກາດ ແລະ ການຫຸ້ມຫໍ່ດ້ວຍຟອງອາກາດ, ການຫໍ່ແບບພັນຫຸ້ມເຄື່ອງດ້ວຍຢາງປາສະຕິກ ຫຼື ແບບພັນ, ຫໍ່ຕາມຮູບແບບ ແລະ ຕິດແໜ້ນ, ແບບໃສ່ຖົງ, ການຫຸ້ມຫໍ່ໃສ່ຂວດແກ້ວ/ກະປ໋ອງ ແລະ ອັດແໜ້ນສະເປ (ແອໂຣໂຊນ). ການຫຸ້ມຫໍ່ເຄື່ອງຂອງ ແລະ ການຫໍ່ຂອງຂວັນ ຍັງລວມເຂົ້າໃນນີ້. ການບໍລິການເຫຼົ່ານີ້ຍັງອາດລວມທັງການຕິດກາໝາຍ ຫຼື ປະທັບຕາໃສ່ການຫຸ້ມຫໍ່.

**<u>ບໍ່ລວມ:</u>** ຖ້າການບໍລິການທີ່ສະໜອງໃຫ້ປະກອບດ້ວຍຂໍ້ມູນການພິມໃສ່ວັດສະດຸຫຸ້ມຫໍ່ເທົ່ານັ້ນ ບໍລິການແຕ່ເລື່ອງດຽວຂອງຂໍ້ມູນການພິມ ກ່ຽວກັບການຫຸ້ມຫໍ່ວັດຖຸຕ່າງໆ, ມັນໄດ້ກໍານົດຢູ່ໃນຂະແໜງຍ່ອຍທີ່ເໝາະສົມຂອງກຸ່ມ 325 ຫຼື 326, ຕົວຢ່າງ ກ່ຽວກັບການພິມ ຫຼື ສິ່ງຂອງ ທີ່ເປັນເຈ້ຍ ຫຼື ແຜ່ນເຈ້ຍ.

| | |
|---|---|
| | ການບໍລິການທີ່ປິ່ນອ້ອມການບໍລິການຫຸ້ມຫໍ່ ແລະ ການບໍລິການລັງໄມ້ໃສ່ເຄື່ອງໃນການຂົນ ແມ່ນໄດ້ກຳນົດໃນໝວດ 74 (ການບໍລິການສະໜັບສະໜູນ ແລະ ຊ່ວຍການຂົນສົ່ງ).<br><br>ການບໍລິການດ້ານການອອກແບບຫຸ້ມຫໍ່ ແມ່ນໄດ້ກຳນົດຢູ່ໃນຂະແໜງຍ່ອຍ 87907 (ການບໍລິການອອກແບບພິເສດສະເພາະ).<br><br>ຖ້າແມ່ນການບໍລິການຫຸ້ມຫໍ່ ຍັງລວມເອົາ ຂັ້ນຕອນການຫຸ້ມຫໍ່ວັດຖຸດິບທີ່ລູກຄ້າເປັນເຈົ້າຂອງເຂົ້າໃນຜະລິດຕະພັນຕ່າງໆ (ຕົວຢ່າງ ການປະສົມນ້ຳ ແລະ ນ້ຳຫົວເຂັ້ມຂຸ້ນ ເພື່ອຜະລິດເຄື່ອງດື່ມນ້ຳອັດລົມ, ການເຮັດໃຫ້ປາສຸກ ກ່ອນໃສ່ກະປ໋ອງ, ການປົນຄຣີມ ແລະ ການປົນສີໃສ່ໃນເຄື່ອງສຳອາງ), ມັນໄດ້ຖືກກຳນົດຢູ່ໃນ ຂະແໜງຍ່ອຍທີ່ເໝາະສົມຂອງ ກຸ່ມ 884 ຫຼື 885 (ການບໍລິການທີ່ປິ່ນອ້ອມການຜະລິດ). |
| **39** | **ການພິມ ແລະ ການຈັດພິມຈຳໜ່າຍ (CPC 88442)** |

ການບໍລິການປິ່ນອ້ອມການຜະລິດ

ການບໍລິການເຫຼົ່ານີ້ລວມມີ ການຜະລິດບົນພື້ນຖານຄ່າຕອບແທນ ຫຼື ສັນຍາ, ຕົວຢ່າງ ການບໍລິການດ້ານການຜະລິດທີ່ສະໜອງໃຫ້ຜູ້ອື່ນໆ ໃນກໍລະນີທີ່ໂຮງງານຜູ້ຜະລິດບໍ່ໄດ້ເປັນເຈົ້າຂອງວັດຖຸດິບທີ່ປຸງແຕ່ງ, ຖືກປະຕິບັດການ ຫຼື ສິນຄ້າສຳເລັດແລ້ວ. ການປະກອບ, ການຕິດຕັ້ງ ທີ່ບໍ່ແມ່ນວຽກກໍ່ສ້າງ, ການຕິດຕັ້ງອຸປະກອນໃຫ້ເຂົ້າກັນ, ການບໍລິການດ້ານການບຳລຸງຮັກສາ ແລະ ສ້ອມແປງ ກໍໄດ້ຖືກກຳນົດໃນຂະແໜງນີ້

ການບໍລິການດ້ານການຜະລິດລວມມີຕາມຕົວຢ່າງດັ່ງນີ້:

- ໃຫ້ການບໍລິການກ່ຽວກັບຄ່າທຳນຽມ ຫຼື ສັນຍາເບື້ອງຕົ້ນ ຕິດພັນກັບຂັ້ນຕອນ ແລະ ການຮັກສາ ຊີ້ນ, ປາ, ໝາກໄມ້, ຜັກ, ຜະລິດຕະພັນນົມ ແລະ ຜະລິດຕະພັນເຂົ້າໜົມ ບໍ່ໃຫ້ບູດເນົ່າ.
- ໃຫ້ການບໍລິການກ່ຽວກັບຄ່າທຳນຽມ ຫຼື ສັນຍາເບື້ອງຕົ້ນ ຕິດພັນກັບ ສຸດທ້າຍຂອງ ຜ້າແພ ແລະ ອຸສາຫະກຳກ່ຽວກັບການຕົບແຕ່ງຜະລິດຕະພັນຜ້າແພ. (ລວມມີ ບໍລິການກ່ຽວກັບໜ້າທີ່ຂອງບໍລິສັດ, ຕົວຢ່າງ ການອອກ ແບບ ແລະ ການກະກຽມແບບຢ່າງ); ບໍລິການທີ່ຕິດພັນກັບການຟອກໜັງ. ແລະ ການນຸ່ງ ເຄື່ອງໜັງ ແລະ ອຸດສາ ຫະກຳຜະລິດເຄື່ອງໜັງ ແລະ ຜະລິດຕະພັນໃສ່ຕີນ.
- ການພິມ ກ່ຽວກັບ ຄ່ານຽມ ຫຼື ສັນຍາເບື້ອງຕົ້ນ ແລະ ບໍລິການທີ່ຕິດພັນກັບການພິມ, ຕົວຢ່າງ ບໍລການ ຫຸ້ມປົກໜັງສື.
- ບໍລິການຫຼໍ່ ຫຼື ຫຼອມໂລຫະ ແລະ ບໍລິການຫຸ້ມຫໍ່ໂລຫະ, ບໍລິການເຕັກນິກວິສະວະກອນໂດຍທົ່ວໄປ ກ່ຽວກັບຄ່າທຳນຽມ ແລະ ສັນຍາເບື້ອງຕົ້ນ; ບໍລິການສ້ອມແປງເສີມ ໃຫ້ກັບຜະລິດຕະພັນໂລຫະ, ກົນຈັກ ແລະ ອຸປະກອນ.

**ບໍ່ລວມ:** ວຽກສຳລັບການຕິດຕັງ ສຳລັບການກໍ່ສ້າງ ໄດ້ກຳນົດຢູ່ກຸ່ມ 516. ບໍລິການສ້ອມແປງ ລົດໂອໂຕ, ລົດ ຈັກ, ແລະ ເຄື່ອງໃຊ້ໃນບ້ານ, ອຸປະກອນ, ເຄື່ອງແຕ່ງບ້ານ ແລະ ອຸປະກອນເຄື່ອງໃຊ້ອື່ນໆທີ່ກຳນົດຢູ່ ຂະແໜງຍ່ອຍ 61220 ແລະ ໃນກຸ່ມ 633 (ບໍລິການສ້ອມແປງໃຫ້ສ່ວນບຸກຄົນ ແລະ ເຄື່ອງໃຊ້ໃນເຮືອນ). ບໍລິການທີ່ລວມມີໃນ ແກ້ວ ແລະ ເຄື່ອງໝາຍເຫຼົ້າ, ເຫຼົ້າວາຍ ແລະ ນ້ຳ ແມ່ນໄດ້ກຳນົດຢູ່ຂະແນງຍ່ອຍ 62226 (ບໍລິການຂາຍຍົກ ເຄື່ອງດື່ມ), ຖ້າວ່າ

| | |
|---|---|
| | ມີລັກສະນະສະແດງອອກເຖິງການຊື້ ແລະ ການຂາຍ ໃນການຂາຍຍົກ, ແລະ ໃນຂະແໜງຍ່ອຍ 87600 (ບໍລິການຫຸ້ມຫໍ່), ຖ້າວ່າມີລັກສະນະສະແດງອອກເຖິງ ຄ່າທຳນຽມແລະ ສັນຍາເບື້ອງຕົ້ນ. ການບໍລິການດ້ານການບຳລຸງຮັກສາ ແລະ ສ້ອມແປງ ເຄື່ອງຈັກ ແລະ ອຸປະກອນເຄື່ອງຈັກຮັບໃຊ້ໃນຫ້ອງການ ແມ່ນໄດ້ກຳນົດຢູ່ໃນຂະແໜງຍ່ອຍລະຫັດ 84500. |
| **40** | **ການບໍລິການດ້ານທີ່ປະຊຸມ (CPC 87909*)** |

**87909 <u>ການບໍລິການທຸລະກິດອື່ນໆ ທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ</u>**

ການບໍລິການທີ່ໂດຍທົ່ວໄປສະໜອງໃຫ້ທຸລະກິດທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ. ລວມເຖິງ ການບໍລິການທຸລະກິດນາຍໜ້າ, ການບໍລິການປະເມີນລາຄາອື່ນໆ ທີ່ບໍ່ແມ່ນສຳລັບອະສັງຫາລິມະຊັບ, ການບໍລິການເລຂາທິການ, ການບໍລິການສະແດງ ແລະ ງານວາງສະແດງ, ອື່ນໆ.

| | |
|---|---|
| **41** | **ອື່ນໆ (CPC 8790)** |

**879 8790 ການບໍລິການທຸລະກິດອື່ນໆ**

**87901 <u>ການບໍລິການລາຍງານຄວາມເຊື່ອໝັ້ນ</u>**

ການບໍລິການ ປະກອບດ້ວຍ ການລາຍງານການຈັດລຳດັບຄວາມເຊື່ອຖືຂອງບຸກຄົນ ແລະ ທຸລະກິດ. ໃນນີ້, ລວມມີ ການປະເມີນສະຖານະທາງການເງິນ ແລະ ປະສົບການດ້ານຄວາມໜ້າເຊື່ອຖືຂອງຜູ້ຈະເປັນລູກຄ້າໃນອະນາຄົດ, ໃບສະເໜີຂໍກູ້ເງິນ ແລະ ອື່ນໆ.

**87902 <u>ການບໍລິການດ້ານການຮັບເອົາ</u>**

ການບໍລິການນີ້ ປະກອບດ້ວຍ ການຮັບເອົາບັນຊີ, ເຊັກທະນາຄານ, ສັນຍາ ຫຼື ເອກະສານ, ແລະ ເງິນໂອນຈາກຕ່າງປະເທດໃຫ້ກັບລູກຄ້າ ບົນພື້ນຖານຄ່າຕອບແທນ ຫຼື ສັນຍາ.ໃນນີ້ ລວມທັງ ການເກັບກຳຮັບເອົາບັນຊີປົກກະຕິ (ຕົວຢ່າງ ໃບບິນຄ່ານ້ຳ, ຄ່າໄຟຟ້າ) ແລະ ການທວງໜີ້. ພ້ອມນັ້ນ, ຍັງລວມເອົາ ການຊື້ທັງໝົດຂອງບັນຊີທວງໜີ້ ແລະ ໜີ້ສິນ ແລະ ການທວງໜີ້ສິ້ນຫຼັງຈາກນັ້ນ.

**87903 <u>ການບໍລິການດ້ານການຮັບໂທລະສັບ</u>**

ການບໍລິການນີ້ ປະກອບດ້ວຍ ການສະໜອງການຕອບຮັບໂທລະສັບ. ລວມທັງ ການບໍລິການຕໍ່ສາຍໂທລະສັບ (ບໍ່ລວມການບໍລິການສົ່ງຂໍ້ຄວາມ), ແລະ ການບໍລິການປຸກທາງໂທລະສັບ.

**87904 <u>ການບໍລິການດ້ານການລອກແບບ</u>**

ການບໍລິການນີ້ ປະກອບດ້ວຍ ການສະໜອງການບໍລິການລອກແບບ. ໃນນີ້, ລວມທັງ ການພິມຂຽວ, ການສຳເນົາເອກະສານ, ການພິມດ້ວຍຈັກພິມໂຣນຽວ, ເຄື່ອງຖ່າຍເອກະສານ, ແລະ ການບໍລິການລອກແບບອື່ນໆ ທີ່ບໍ່ແມ່ນການພິມ.

**87905 ການບໍລິການດ້ານການແປພາສາດ້ວຍການຂຽນ ແລະ ດ້ວຍການເວົ້າ**

ການບໍລິການນີ້ ປະກອບດ້ວຍ ການສະໜອງການແປພາສາດ້ວຍການຂຽນ ແລະ ດ້ວຍການເວົ້າ. ໂດຍທົ່ວໄປແລ້ວ, ການບໍລິການດ້ານການແປພາສາດ້ວຍການຂຽນ ກ່ຽວຂ້ອງກັບການຂຽນຄືນເນື້ອໃນຈາກພາສາໜຶ່ງ ໄປຍັງພາສາອື່ນ; ໃນຂະນະທີ່ ການບໍລິການແປພາສາດ້ວຍການເວົ້າ ໂດຍທົ່ວໄປ ແມ່ນກ່ຽວກັບການແປຈາກພາສາໜຶ່ງທີ່ໄດ້ເວົ້າໄປເປັນອີກພາສາອື່ນດ້ວຍການເວົ້າ.

**87906 ການບໍລິການດ້ານການຮຽບຮຽງລາຍຊື່ທີ່ຢູ່ທາງໄປສະນີ ແລະ ການສົ່ງທາງໄປສະນີ**

ການບໍລິການນີ້ ປະກອບດ້ວຍ ການຮຽບຮຽງ ແລະ ຂາຍ ລາຍຊື່ ແລະ ທີ່ຢູ່ຈາກຂໍ້ມູນທາງໂທລະສັບ ແລະ ແຫຼ່ງອື່ນໆ, ຫຼື ໃນການສົ່ງວັດສະດຸ (ຕົວຢ່າງ ອຸປະກອນໂຄສະນາ, ວັດສະດຸຂໍ້ມູນຂ່າວສານ) ໂດຍທີ່ຢູ່ຈ່າໜ້າຊອງຈົດໝາຍ, ການບັນຈຸ, ການປິດຜະນຶກ, ການວັດແທກ ແລະ ການສົ່ງທາງໄປສະນີ.

**87907 ການບໍລິການດ້ານການອອກແບບພິເສດສະເພາະ**

ການບໍລິການນີ້ ປະກອບດ້ວຍ ການປະດິດການອອກແບບ ແລະ ການກະກຽມແບບ ສໍາລັບຜະລິດຕະພັນທີ່ຫຼາກຫຼາຍໂດຍການປະສົມປະສານດ້ານຄວາມງາມ ພ້ອມທັງຂໍ້ກໍານົດດ້ານເຕັກນິກ ແລະ ຄວາມຕ້ອງການອື່ນໆ. ໃນນີ້, ລວມທັງການອອກແບບເຄື່ອງເຟີນິເຈີ, ການອອກແບບ ແລະ ຕົບແຕ່ງພາຍໃນ ແລະ ການອອກແບບຄວາມງາມສໍາລັບຜະລິດຕະພັນອຸປະໂພກອື່ນໆທີ່ຫຼາກຫຼາຍໃຫ້ກັບລູກຄ້າ. ການບໍລິການດ້ານການອອກແບບສໍາລັບຜະລິດຕະພັນອຸດສາຫະກໍາ ແມ່ນໄດ້ກໍານົດຢູ່ໃນຂະແໜງຍ່ອຍ 86726 (ການບໍລິການອອກແບບວິສະວະກໍາທີ່ບໍ່ໄດ້ກໍານົດຢູ່ບ່ອນອື່ນ.)

**ບໍ່ລວມ**: ການບໍລິການດ້ານການອອກແບບກຣາຟຟິກ ແມ່ນໄດ້ການົດຢູ່ໃນກຸ່ມ 871 (ການບໍລິການດ້ານການໂຄສະນາ)

**ການບໍລິການດ້ານການສື່ສານ**

| 42 | A. ການບໍລິການດ້ານໄປສະນີ (CPC 7511) |
|---|---|

**7511 ການບໍລິການດ້ານໄປສະນີ**

**75111 ການບໍລິການດ້ານໄປສະນີທີ່ກ່ຽວກັບຈົດໝາຍ**

ການບໍລິການ ປະກອບດ້ວຍ ການບໍລິການຮັບ, ການຂົນສົ່ງ ແລະ ການຈັດສົ່ງຈົດໝາຍ, ໜັງສືພິມ, ວາລະສານ, ນິຕະຍາສານ, ແຜ່ນພັບ, ໃບປິວ ແລະ ສິ່ງພິມອື່ນທີ່ຄ້າຍຄືກັນ, ບໍ່ວ່າຈະເປັນຈຸດໝາຍພາຍໃນ ຫຼື ຕ່າງປະເທດ ຄືກັບ ການບໍລິການທີ່ສະໜອງໃຫ້ໂດຍອີງການໄປສະນີແຫ່ງຊາດ.

**75112 ການບໍລິການໄປສະນີທີ່ກ່ຽວກັບຫໍ່ເຄື່ອງ**

ການບໍລິການ ປະກອບດ້ວຍ ການບໍລິການຮັບ, ການຂົນສົ່ງ ແລະ ການຈັດສົ່ງຫໍ່ເຄື່ອງບໍ່ວ່າຈະເປັນຈຸດໝາຍພາຍໃນ ຫຼື ຕ່າງປະເທດ ຄືກັບ ການບໍລິການທີ່ສະໜອງໃຫ້ໂດຍອີງການໄປສະນີແຫ່ງຊາດ.

**75113 ການບໍລິການທີ່ໂຕະສໍານັກງານໄປສະນີ**

ການບໍລິການທີ່ສະໜອງໃຫ້ ທີ່ໂຕະສໍານັກງານໄປສະນີ, ເຊັ່ນ ການຂາຍສະແຕມໄປສະນີ, ການຈັດການຫໍ່ເຄື່ອງ ແລະ ຈົດໝາຍ ທີ່ໄດ້ຮັບການຮັບຮອງ ຫຼື ລົງທະບຽນແລ້ວ, ແລະ ການບໍລິການໂຕະສໍານັກງານໄປສະນີອື່ນໆ.

**75119 ການບໍລິການໄປສະນີອື່ນໆ**

ການບໍລິການໃຫ້ເຊົ່າຕູ້ຈົດໝາຍ, ການບໍລິການ “poste restante”, ແລະ ການບໍລິການໄປສະນີທີ່ບໍ່ໄດ້ຈັດແບ່ງປະເພດໄວ້ໃນບ່ອນອື່ນ.

ບໍ່ລວມ: ການບໍລິການທີ່ກ່ຽວກັບ ໄປສະນີ “giro” ແລະ ບັນຊີເງິນຝາກປະຢັດໄປສະນີແມ່ນຖືກຈັດແບ່ງປະເພດໄວ້ໃນ 8111 (ການບໍລິການຂອງຄົນກາງທາງການເງິນ).

| 43 | B. ການບໍລິການຮັບ-ສົ່ງທາງໄປສະນີ (CPC 7512) |
|---|---|

**7512 ການບໍລິການຮັບ-ສົ່ງທາງໄປສະນີ**

**75121 ການບໍລິການຮັບ-ສົ່ງທາງໄປສະນີຫຼາຍຮູບແບບ**

ການບໍລິການທີ່ປະກອບດ້ວຍ ການບໍລິການຮັບ, ການຂົນສົ່ງ ແລະ ການຈັດສົ່ງຈົດໝາຍ, ຫໍ່ວັດສະດຸ ແລະ ຫໍ່ເຄື່ອງ ບໍ່ວ່າຈະເປັນຈຸດໝາຍພາຍໃນ ຫຼື ຕ່າງປະເທດ ທີ່ສະໜອງໃຫ້ໂດຍຜູ້ຮັບ-ສົ່ງ ແລະ ນຳໃຊ້ການຂົນສົ່ງດ້ວຍໜຶ່ງ ຫຼື ຫຼາຍຮູບແບບ, ນອກເໜືອໄປຈາກການບໍລິຫານຂອງອົງການໄປສະນີແຫ່ງຊາດ. ການບໍລິການເຫຼົ່ານີ້ສາມາດຖືກສະໜອງໃຫ້ໄດ້ໂດຍນຳໃຊ້ຊ່ອງທາງຂົນສົ່ງຂອງຜູ້ຂົນສົ່ງເອງ ຫຼື ຊ່ອງທາງຂົນສົ່ງສາທາລະນະ.

ບໍ່ລວມ: ການບໍລິການຮັບ-ສົ່ງທາງໄປສະນີທາງອາກາດແມ່ນຖືກຈັດໄວ້ໃນປະເພດຍ່ອຍ/73210 (ການຂົນສົ່ງໄປສະນີທາງອາກາດ).

**75129 ການບໍລິການຮັບ-ສົ່ງທາງໄປສະນີອື່ນໆ**

ການບໍລິການຮັບ-ສົ່ງທາງໄປສະນີອື່ນໆ ສຳລັບສິນຄ້າ, ເຊັ່ນ: ການບໍລິການຂົນສົ່ງ ແລະ ການຍົກຍ້າຍທາງລົດບັນທຸກໂດຍບໍ່ມີສາງ, ສຳລັບການຂົນສົ່ງສິນຄ້າ, ຊຶ່ງບໍ່ໄດ້ຈັດໄວ້ຢູ່ບ່ອນອື່ນ.

**C. ການບໍລິການດ້ານໂທລະຄົມສື່ສານ**

| 44 | ການບໍລິການໂທລະສັບດ້ວຍສຽງ (CPC 7521) |
|---|---|

**7521 ການບໍລິການໂທລະສັບສາທາລະນະ**

**75211 ການບໍລິການໂທລະສັບສາທາລະນະໃນທ້ອງຖິ່ນ**

ການບໍລິການສົ່ງຜ່ານ ແລະ ບໍລິການສະຫຼັບ ທີ່ຈຳເປັນເພື່ອສ້າງ ແລະ ຮັກສາໄວ້ຊຶ່ການຕິດຕໍ່ສື່ສານການໂທພາຍໃນພື້ນທີ່ທ້ອງຖິ່ນ. ການບໍລິການນີ້ ຕົ້ນຕໍ ແມ່ນຖືກອອກແບບ (ໃຊ້) ເພື່ອສ້າງການສື່ສານທາງສຽງ, ແຕ່ອາດຖືກໝູນໃຊ້ໃນການສື່ສານແບບອື່ນເຊັ່ນ ການສື່ສານທາງຂໍ້ຄວາມ (ແຟັກ ຫຼື ໂທລະສານ) ແລະ ໂດຍທົ່ວໄປແລ້ວ ແມ່ນຖືກສະໜອງໃຫ້ໃນລາຄາເໝົາຈ່າຍລາຍເດືອນຢ່າງເປັນອິດສະຫຼະກັບຈຳນວນຄັ້ງທີ່ໂທຂອງຜູ້ສະໝັກຮັບບໍລິການ.

ບໍ່ລວມ: ການບໍລິການສາຍສ່ວນຕົວ ແລະ ການບໍລິການໃຫ້ເຊົ່າອຸປະກອນປາຍທາງແມ່ນຖືກຈັດແບ່ງຢູ່ໃນປະເພດ 7522 (ການບໍລິການເຄືອຂ່າຍທຸລະກິດ) ແລະ 7541 (ການບໍລິການໃຫ້ເຊົ່າອຸປະກອນ) ຕາມລຳດັບ.

**75212 ການບໍລິການໂທລະສັບທາງໄກສາທາລະນະ**

ການບໍລິການສົ່ງຜ່ານ ແລະ ບໍລິການສະຫຼັບ ທີ່ຈຳເປັນເພື່ອສ້າງ ແລະ ຮັກສາໄວ້ຊຶ່ງການຕິດຕໍ່ສື່ສານການໂທລະຫວ່າງພື້ນທີ່ທ້ອງຖິ່ນດ້ວຍກັນ. ການບໍລິການນີ້ ຕົ້ນຕໍ ແມ່ນຖືກອອກແບບ (ໃຊ້) ເພື່ອສ້າງການສື່ສານທາງສຽງ, ແຕ່ອາດຖືກໝູນໃຊ້ໃນການສື່ສານແບບອື່ນເຊັ່ນ ການສື່ສານທາງຂໍ້ຄວາມ (ແຟັກ ຫຼື ໂທລະສານ) ແລະ ອາດຈະຖືກສະໜອງໃຫ້ບົນພື້ນຖານອັດຕາເໝົາຈ່າຍ ຫຼື ອັດຕາການໂທແຕ່ລະຄັ້ງ. ການບໍລິການນີ້ ສະໜອງໃຫ້ກັບລູກຄ້າໃນການເຂົ້າເຖິງເຄືອຂ່າຍໂທລະສັບທັງໝົດຂອງຜູ້ສະໜອງບໍລິການ ແລະ ຂອງຜູ້ສະໜອງການເຊື່ອມຕໍ່, ຫຼື ໃນບາງກໍລະນີ, ໃນການເຂົ້າເຖິງຈຳ

ນອນຈຳກັດຂອງບາງເຂດພື້ນທີ່ແລກປ່ຽນກັນ (ການບໍລິການໂທລະສັບໃນເຂດກວ້າງຂວາງ ຫຼື WATS).

**75213 ການບໍລິການໂທລະສັບມືຖື**

ການບໍລິການໂທລະສັບວິທະຍຸ ດ້ວຍອຸປະກອນທີ່ເຄື່ອນຍ້າຍໄດ້ ຊຶ່ງເຂົ້າເຖິງແບບສອງທາງຫາເຄືອຂ່າຍໂທລະສັບສາທາລະນະ ຫຼື ໂທລະສັບມືຖືອື່ນ. ໃນບາງຮູບແບບຂອງການບໍລິການນີ້, ຫາກມີອຸປະກອນປາຍທາງທີ່ເໝາະສົມ ອາດຖືກນຳໃຊ້ສົ່ງໂທລະສານເຊັ່ນດຽວກັນກັບການສື່ສານທາງສຽງ.

ບໍ່ລວມ: ການບໍລິການການສື່ສານເຄື່ອນທີ່ທາງທະເລ ແລະ ການສື່ສານອາກາດສູ່ພື້ນດິນ ແມ່ນຖືກຈັດແບ່ງປະເພດຢູ່ໃນລະຫັດຍ່ອຍ 75299 (ການບໍລິການໂທລະຄົມອື່ນໆ).

**45 ການບໍລິການດ້ານການສົ່ງຜ່ານຂໍ້ມູນແບບສະຫຼັບດ້ວຍອຸປະກອນ (CPC 7523**)**

**7523 ການບໍລິການດ້ານການສົ່ງຜ່ານຂໍ້ມູນ ແລະ ຂໍ້ຄວາມ**

**75231 ການບໍລິການເຄືອຂ່າຍຂໍ້ມູນ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນຊຶ່ງນຳໃຊ້ໂປຣໂຕໂກນດຽວກັນ ຫຼື ແຕກຕ່າງກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).

**75232 ການບໍລິການ ຂໍ້ມູນ ແລະ ຂໍ້ຄວາມອີເລັກໂທຣນິກ**

ການບໍລິການເຄືອຂ່າຍ ແລະ ທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງ ແລະ ຮັບຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະ ໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ).

**46 ການບໍລິການສົ່ງຜ່ານຂໍ້ມູນແບບສະຫຼັບດ້ວຍວົງຈອນໄຟຟ້າ (CPC 7523**)**

**7523 ການບໍລິການສົ່ງຜ່ານຂໍ້ມູນ ແລະ ຂໍ້ຄວາມ**

**75231 ການບໍລິການເຄືອຂ່າຍຂໍ້ມູນ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂຕໂກນດຽວກັນ ຫຼື ແຕກຕ່າງ ກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).

**75232 ການບໍລິການຂໍ້ມູນແລະຂໍ້ຄວາມອີເລັກໂທຣນິກ**

ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງແລະຮັບຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ).

**47 ການບໍລິການໂທລະເລກ (CPC 7523**)**

**7523 ການບໍລິການສົ່ງຜ່ານຂໍ້ມູນແລະຂໍ້ຄວາມ**

**75231 ການບໍລິການເຄືອຂ່າຍຂໍ້ມູນ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂຕໂກນດຽວກັນ ຫຼື ແຕກຕ່າງກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).

**75232 ການບໍລິການຂໍ້ມູນ ແລະ ຂໍ້ຄວາມອີເລັກໂທຣນິກ**

| | |
|---|---|
| | ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈໍາເປັນເພື່ອສົ່ງແລະຮັບຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ). |
| **48** | **ການບໍລິການໂທລະພິມ (CPC 7522)** |

**7522 ການບໍລິການເຄືອຂ່າຍທຸລະກິດ**

**75221 ການບໍລິການເຄືອຂ່າຍທີ່ໃຊ້ຮ່ວມກັນ**

ການບໍລິການເຄືອຂ່າຍທີ່ຈໍາເປັນເພື່ອສ້າງການສື່ສານທາງໂທລະສັບລະຫວ່າງສະຖານທີ່(ເທີມີນາລ) ທີ່ຖືກເລືອກ (ຈາກຈຸດເຖິງຈຸດ ຫຼື ຫຼາຍຈຸດ) ຜ່ານເຄືອຂ່າຍສາທາລະນະ (ທີ່ໃຊ້ຮ່ວມກັນ). ການບໍລິການປະເພດນີ້ ຕົ້ນຕໍ ແມ່ນຖືກໃຊ້ເພື່ອສ້າງການສື່ສານທາງສຽງໄລຍະໄກ ແຕ່ບາງຮູບແບບກໍ່ສາມາດອໍານວຍຄວາມສະດວກໃຫ້ການສົ່ງຜ່ານຂໍ້ມູນ ແລະ ໂທລະສານ. ການບໍລິການນີ້ຖືກສະໜອງໃຫ້ບົນພື້ນຖານການຈ່າຍເງິນຕາມການໃຊ້ງານ ໃນລາຄາຫຼຸດລົງຈາກຄ່າບໍລິການໂທລະສັບໄລຍະໄກແບບປົກກະຕິ.

**75222 ການບໍລິການເຄືອຂ່າຍທີ່ໃຊ້ສະເພາະ**

ການບໍລິການເຄືອຂ່າຍທີ່ຈໍາເປັນເພື່ອສ້າງການສື່ສານທາງໂທລະສັບລະຫວ່າງສະຖານທີ່(ເທີມີນາລ) ທີ່ຖືກເລືອກ (ຈາກຈຸດເຖິງຈຸດ ຫຼື ຫຼາຍຈຸດ) ຜ່ານສາຍເອກະຊົນ. ການບໍລິການປະເພດນີ້ ຕົ້ນຕໍ ແມ່ນຖືກໃຊ້ເພື່ອສ້າງການສື່ສານທາງສຽງລະຫວ່າງ PBX (private branch exchange) (ສາຍໂທລະສັບ) ໄລຍະໄກ, ລະຫວ່າງ ສະຖານທີ່ໄລຍະໄກ ແລະ PBX (ສ່ວນຂະຫຍາຍນອກສະຖານທີ່), ລະຫວ່າງ PBX ແລະ ພື້ນທີ່ແລກປ່ຽນໄລຍະໄກ (ຟໍຣິນ ເອັກເຊນ) ຫຼື ລະຫວ່າງຊຸດໂທລະສັບທີ່ໃຊ້ສະເພາະ, ແຕ່ອາດອໍານວຍຄວາມສະດວກໃຫ້ການສົ່ງຜ່ານຂໍ້ມູນ. ການບໍລິການນີ້ຖືກສະໜອງບົນພື້ນຖານການເຊົ່າ.

| | |
|---|---|
| **49** | **ການບໍລິການໂທລະສານ (ແຟັກ) (CPC7521**+7529**)** |

**7521 ການບໍລິການໂທລະສັບສາທາລະນະ**

**75211 ການບໍລິການໂທລະສັບສາທາລະນະໃນທ້ອງຖິ່ນ**

ບໍລິການສົ່ງຜ່ານ ແລະ ບໍລິການສະຫຼັບ ທີ່ຈໍາເປັນເພື່ອສ້າງ ແລະ ຮັກສາ ການສື່ສານໃນພື້ນທີ່ທ້ອງຖິ່ນ. ການບໍລິການນີ້ໂດຍຫຼັກແລ້ວແມ່ນຖືກອອກແບບ ເພື່ອສ້າງການສື່ສານທາງສຽງ, ແຕ່ອາດຖືກໝູນໃຊ້ໃນການສື່ສານແບບອື່ນເຊັ່ນ ການສື່ສານທາງຂໍ້ຄວາມ (ແຟັກ ຫຼື ໂທລະສານ) ແລະ ໂດຍທົ່ວໄປແລ້ວແມ່ນຖືກສະໜອງໃນລາຄາເໝົາຈ່າຍລາຍເດືອນອິດສະຫຼະຈາກຈໍານວນການໂທຂອງຜູ້ຮັບບໍລິການທີ່ໄດ້ຂຶ້ນທະບຽນແລ້ວ.

<u>ບໍ່ລວມ</u>: ການບໍລິການສາຍສ່ວນຕົວແລະການບໍລິການໃຫ້ເຊົ່າອຸປະກອນປາຍທາງແມ່ນຖືກຈັດແບ່ງປະເພດຢູ່ໃນ 7522 (ການບໍລິການເຄືອຂ່າຍທຸລະກິດ) ແລະ 7541 (ການບໍລິການໃຫ້ເຊົ່າອຸປະກອນ) ຕາມລໍາດັບ.

**75212 ການບໍລິການໂທລະສັບສາທາລະນະທາງໄກ**

ບໍລິການສົ່ງຜ່ານ ແລະ ບໍລິການສະຫຼັບ ທີ່ຈໍາເປັນເພື່ອ ສ້າງ ແລະ ຮັກສາ ການສື່ສານໃນພື້ນທີ່ທ້ອງຖິ່ນ. ການບໍລິການນີ້ໂດຍຫຼັກແລ້ວແມ່ນຖືກອອກແບບ ເພື່ອສ້າງການສື່ສານທາງສຽງ, ແຕ່ອາດຖືກໝູນໃຊ້ໃນການສື່ສານແບບອື່ນເຊັ່ນ ການສື່ສານທາງຂໍ້ຄວາມ (ແຟັກ ຫຼື ໂທລະສານ) ແລະ ແຕ່ອາດຈະຖືກສະໜອງໃຫ້ບົນພື້ນຖານອັດຕາເໝົາຈ່າຍ ຫຼື ອັດຕາທາງໄກຕາມປາຍທາງແລະໄລຍະເວລາ. ການບໍລິການນີ້ສະໜອງການເຂົ້າເຖິງເຄືອຂ່າຍໂທລະສັບທັງໝົດ ຂອງຜູ້ສະໜອງບໍລິການແລະຂອງບໍລິສັດໂທລະຄົມທີ່ເຮັດການເຊື່ອມຕໍ່ ໃຫ້ກັບລູກຄ້າ, ຫຼື ໃນບາງກໍລະນີ ສະໜອງການເຂົ້າເຖິງ ພື້ນທີ່

ສູນກາງຄູ່ສາຍໂທລະສັບທີ່ຈຳກັດຈຳນວນ (ການບໍລິການ wide-area telephone service).

**75213 ການບໍລິການໂທລະສັບເຄື່ອນທີ່ (ມືຖື)**

ການບໍລິການໂທລະສັບວິທະຍຸດ້ວຍອຸປະກອນທີ່ເຄື່ອນຍ້າຍໄດ້, ໃຫ້ເຂົ້າເຖິງແບບສອງທາງຫາເຄືອຂ່າຍໂທລະສັບສາທາລະນະ ຫຼື ໂທລະສັບເຄື່ອນທີ່ອື່ນ. ໃນບາງຮູບແບບຂອງການບໍລິການນີ້, ຖ້າຫາກມີອຸປະກອນປາຍທາງ ທີ່ເໝາະສົມ ອາດຖືກນຳໃຊ້ສົ່ງໂທລະສານເຊັ່ນດຽວກັນກັບການສື່ສານທາງສຽງ.
ບໍ່ລວມ: ການບໍລິການການສື່ສານເຄື່ອນທີ່ທາງທະເລ ແລະ ການສື່ສານອາກາດສູ່ພື້ນດິນ ແມ່ນຖືກຈັດແບ່ງປະເພດຢູ່ໃນລະຫັດຍ່ອຍ 75299 (ການບໍລິການໂທລະຄົມມະນາຄົມອື່ນ).

**7529 ການບໍລິການດ້ານໂທລະຄົມສື່ສານອື່ນ**

**75291 ການບໍລິການສົ່ງຂໍ້ຄວາມ**
ການຮຽກຕົວບຸກຄົນທີ່ຈະໂທລະສັບຜ່ານການໃຊ້ເຄື່ອງເພດເຈີອີເລັກໂທຣນິກ. ການບໍລິການນີ້ລວມທັງ ການບໍລິການເພດເຈີ ສຽງ, ສຽງເວົ້າ ແລະ ການສະແດງຜົນແບບດິຈິຕອນ.
**75292 ການບໍລິການປະຊຸມທາງໄກ**

ການບໍລິການເຄືອຂ່າຍ ແລະ ການບໍລິການກ່ຽວຂ້ອງກັບເຄືອຂ່າຍ ທີ່ຈຳເປັນເພື່ອຈັດການປະຊຸມທາງວິດີໂອແບບທາງດຽວ ຫຼື ສອງທາງຕອບໂຕ້ຢ່າງເຕັມສ່ວນ.
**75299 ການບໍລິການໂທລະຄົມສື່ສານອື່ນທີ່ບໍ່ໄດ້ຈັດໄວ້ຢູ່ບ່ອນອື່ນ.**

ການບໍລິການໂທລະຄົມສື່ສານທີ່ບໍ່ໄດ້ຈັດໄວ້ໃນລະຫັດອື່ນ. ໃນລະຫັດນີ້ປະກອບມີ ການບໍລິການສື່ສານໂທລະສັບເຄື່ອນທີ່ທາງທະເລ ແລະ ທາງອາກາດສູ່ພື້ນ.

| 50 | ການບໍລິການໃຫ້ເຊົ່າວົງຈອນເອກະຊົນ (CPC 7522**+7523**) |
|---|---|

**7522 ການບໍລິການເຄືອຂ່າຍທຸລະກິດ**

**75221 ການບໍລິການເຄືອຂ່າຍທີ່ໃຊ້ຮ່ວມກັນ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສ້າງການສື່ສານທາງໂທລະສັບລະຫວ່າງສະຖານທີ່(ເທີມິນອລ) ທີ່ຖືກເລືອກ (ຈາກຈຸດໜຶ່ງເຖິງຈຸດໜຶ່ງ ຫຼື ຫຼາຍຈຸດ) ຜ່ານເຄືອຂ່າຍສາທາລະນະ (ທີ່ໃຊ້ຮ່ວມກັນ). ການບໍລິການປະເພດນີ້ໂດຍຫຼັກແລ້ວແມ່ນຖືກໃຊ້ເພື່ອສ້າງການສື່ສານທາງສຽງທາງໄກ ແຕ່ບາງຮູບແບບກໍສາມາດອຳນວຍຄວາມສະດວກໃຫ້ການສົ່ງຜ່ານຂໍ້ມູນ ແລະ ແຟັກ. ການບໍລິການນີ້ຖືກສະໜອງບົນພື້ນຖານຈ່າຍຕາມການໃຊ້ງານ ໃນລາຄາພິເສດຈາກຄ່າບໍລິການໂທລະສັບໄລຍະໄກປົກກະຕິ.

**75222 ການບໍລິການເຄືອຂ່າຍທີ່ຈັດສັນສະເພາະ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສ້າງການສື່ສານທາງໂທລະສັບລະຫວ່າງສະຖານທີ່(ສະຖານີປາຍທາງ) ທີ່ຖືກເລືອກ (ຈາກຈຸດໜຶ່ງເຖິງຈຸດໜຶ່ງ ຫຼື ຫຼາຍຈຸດ) ຜ່ານສາຍສ່ວນຕົວ. ການບໍລິການປະເພດນີ້ໂດຍຫຼັກແລ້ວແມ່ນຖືກໃຊ້ເພື່ອສ້າງການສື່ສານທາງສຽງ ລະຫວ່າງ PBX (private branch exchange) (ສາຍໂທລະສັບ) ໄລຍະໄກ, ລະຫວ່າງ

ສະຖານທີ່ໄລຍະໄກ ແລະ PBX (ສ່ວນຂະຫຍາຍນອກສະຖານທີ່), ລະຫວ່າງ PBX ແລະ ພື້ນທີ່ສູນກາງຄູ່ສາຍໂທລະສັບໄລຍະໄກ (ສູນກາງຄູ່ສາຍໂທລະສັບຢູ່ຕ່າງປະເທດ) ຫຼື ລະຫວ່າງຊຸດໂທລະສັບທີ່ໃຊ້ສະເພາະ, ແຕ່ອາດອຳນວຍຄວາມສະດວກໃຫ້ການສົ່ງຜ່ານຂໍ້ມູນ. ການບໍລິການນີ້ຖືກສະໜອງບົນພື້ນຖານການເຊົ່າ.

**7523 ການບໍລິການສົ່ງຜ່ານຂໍ້ມູນ ແລະ ຂໍ້ຄວາມ**

**75231 ການບໍລິການເຄືອຂ່າຍຂໍ້ມູນ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂກມດຽວກັນ ຫຼື ແຕກຕ່າງກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).

**75232 ການບໍລິການຂໍ້ມູນ ແລະ ຂໍ້ຄວາມອີເລັກໂທຣນິກ**

ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາວແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງແລະຮັບຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະ ໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ).

| 51 | **ຈົດໝາຍອີເລັກໂທຣນິກ (CPC 7523**)** |
|---|---|

**7523 ການບໍລິການສົ່ງຜ່ານຂໍ້ມູນແລະຂໍ້ຄວາມ**

**75231 ການບໍລິການເຄືອຂ່າຍຂໍ້ມູນ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂຕໂກມດຽວກັນ ຫຼື ແຕກຕ່າງກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).

**75232 ການບໍລິການຂໍ້ມູນແລະຂໍ້ຄວາມອີເລັກໂທຣນິກ**

ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງແລະຮັບຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ).

| 52 | **ການບໍລິການຝາກຂໍ້ຄວາມສຽງ (CPC 7523**)** |
|---|---|

**7523 ການບໍລິການສົ່ງຜ່ານຂໍ້ມູນ ແລະ ຂໍ້ຄວາມ**

**75231 ການບໍລິການເຄືອຂ່າຍຂໍ້ມູນ**

ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂຕໂກມທີ່ແຕກຕ່າງ ຫຼື ຄືກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຕ.ຢ. ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).

**75232 ການບໍລິການຂໍ້ມູນ ແລະ ຂໍ້ຄວາມອີເລັກໂທຣນິກ**

ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງແລະຮັບ

| | |
|---|---|
| | ຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ). |
| **53** | **ການຮຽກຖາມຂໍ້ມູນ ແລະ ຂໍ້ມູນອອນລາຍ (CPC 7523**)** |
| **7523** | **ການບໍລິການສົ່ງຜ່ານຂໍ້ມູນແລະຂໍ້ຄວາມ**<br><br>**75231 <u>ການບໍລິການເຄືອຂ່າຍຂໍ້ມູນ</u>**<br>ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂຕໂກນດຽວກັນ ຫຼື ແຕກຕ່າງກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).<br><br>**75232 <u>ການບໍລິການຂໍ້ມູນແລະຂໍ້ຄວາມອີເລັກໂທຣນິກ</u>**<br>ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງແລະຮັບຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ). |
| **54** | **ການແລກປ່ຽນຂໍ້ມູນທາງອີເລັກໂຕຣນິກ (EDI)(CPC 7523**) (EDI)(CPC 7523**)** |
| **7523** | **ການບໍລິການສົ່ງຜ່ານຂໍ້ມູນແລະຂໍ້ຄວາມ**<br>**75231 <u>ການບໍລິການເຄືອຂ່າຍຂໍ້ມູນ</u>**<br><br>ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂຕໂກນດຽວກັນ ຫຼື ແຕກຕ່າງກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).<br><br>**75232 <u>ການບໍລິການຂໍ້ມູນແລະຂໍ້ຄວາມອີເລັກໂທຣນິກ</u>**<br><br>ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງແລະຮັບຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ). |
| **55** | **ການບໍລິການໂທລະສານມູນຄ່າເພີ່ມ ລວມທັງ ການເກັບຮັກສາ ແລະນຳສົ່ງຕໍ່, ການຮັກສາ ແລະ ຮຽກຂໍ້ມູນ(CPC 7523**)** |
| **7523** | **ການບໍລິການສົ່ງຜ່ານຂໍ້ມູນແລະຂໍ້ຄວາມ**<br>**75231 <u>ການບໍລິການເຄືອຂ່າຍຂໍ້ມູນ</u>**<br>ການບໍລິການເຄືອຂ່າຍທີ່ຈຳເປັນເພື່ອສົ່ງຜ່ານຂໍ້ມູນລະຫວ່າງອຸປະກອນນຳໃຊ້ໂປຣໂຕໂກນດຽວກັນ ຫຼື ແຕກຕ່າງກັນ. ການບໍລິການນີ້ສາມາດຖືກສະໜອງໃຫ້ໄດ້ໂດຍຜ່ານເຄືອຂ່າຍຂໍ້ມູນສາທາລະນະ ຫຼື ເຄືອຂ່າຍຂໍ້ມູນທີ່ຈັດສັນສະເພາະ (ຜ່ານເຄືອຂ່າຍທີ່ຈັດສັນສະເພາະການໃຊ້ງານຂອງລູກຄ້າ).<br>**75232 <u>ການບໍລິການຂໍ້ມູນແລະຂໍ້ຄວາມອີເລັກໂທຣນິກ</u>**<br><br>ການບໍລິການເຄືອຂ່າຍ ແລະ ການບໍລິການທີ່ກ່ຽວຂ້ອງກັບເຄືອຂ່າຍ (ຮາດແວ ແລະ ຊອຟແວ) ທີ່ຈຳເປັນເພື່ອສົ່ງແລະຮັບ |

| | |
|---|---|
| | ຂໍ້ຄວາມອີເລັກໂທຣນິກ (ການບໍລິການໂທລະພິມ ແລະໂທລະເລກ) ແລະ/ຫຼື ເພື່ອເຂົ້າເຖິງ ແລະ ຈັດການຂໍ້ມູນຢູ່ໃນຖານຂໍ້ມູນ (ດັ່ງທີ່ເອີ້ນວ່າ ການບໍລິການເຄືອຂ່າຍມູນຄ່າເພີ່ມ). |
| **56** | **ການແປລະຫັດ ແລະ ໂປຣໂຕໂກນ** |
| | |
| **57** | **ການປະມວນຂ່າວສານ ແລະ/ຫຼື ຂໍ້ມູນ (ລວມທັງ ການປະມວນທຸລະກຳ) ອອນລາຍ (CPC 843**)** |

**843 ການບໍລິການດ້ານການປະມວນຂໍ້ມູນ**

**8431 84310 <u>ການບໍລິການດ້ານການກະກຽມປ້ອນຂໍ້ມູນ</u>**

ການບໍລິການບັນທຶກຂໍ້ມູນ ເຊັ່ນ ການຕີຂໍ້ມູນເຂົ້າ, ການສະແກນ ຫຼື ວິທີການອື່ນໆສຳລັບການປ້ອນຂໍ້ມູນ.

**8432 84320 <u>ການບໍລິການດ້ານການຈັດລະບຽບ ແລະ ປະມວນຂໍ້ມູນ</u>**

ການບໍລິການ ເຊັ່ນ ການຈັດລະບຽບ ແລະ ປະມວນຂໍ້ມູນ, ການບໍລິການຄຳນວນທາງຄອມພິວເຕີ, ແລະ ການບໍລິການໃຫ້ເຊົ່າໄລຍະເວລາການໃຊ້ຄອມພິວເຕີ.

**8433 84330 <u>ການບໍລິການເວລາໃຊ້ຮ່ວມກັນ</u>**

ນີ້ເບິ່ງຄືວ່າຈະເປັນປະເພດດຽວກັນກັບການບໍລິການ 84320. ເວລາການໃຊ້ຄອມພິວເຕີແມ່ນຖືກຊື້, ຖ້າຫາກແມ່ນຖືກຊື້ຈາກສະຖານທີ່ຂອງລູກຄ້າ, ການບໍລິການໂທລະຄົມມະນາຄົມກໍແມ່ນຖືກຊື້ຄືກັນ. ການບໍລິການຈັດລະບຽບ ແລະ ປະມວນຂໍ້ມູນ ແມ່ນອາດຖືກຊື້ຈາກ ສຳນັກງານທີ່ໃຫ້ບໍລິການ. ໃນທັງສອງກໍລະນີການບໍລິການແມ່ນອາດຖືກປະມວນໃນເວລາດຽວກັນ. ດັ່ງນັ້ນ, ຈຶ່ງບໍ່ມີຄວາມແຕກຕ່າງທີ່ຈະແຈ້ງລະຫວ່າງ 84320 ແລະ 84330.

**8439 84390 <u>ການບໍລິການດ້ານການປະມວນຂໍ້ມູນອື່ນ</u>**

ການບໍລິການທີ່ຈັດການວຽກງານທັງໝົດສຳລັບສະຖານທີ່ແລະອຸປະກອນຂອງລູກຄ້າ ພາຍໃຕ້ໃນສັນຍາ: ການບໍລິການຄວບຄຸມຄຸນນະພາບສິ່ງແວດລ້ອມຫ້ອງຄອມພິວເຕີ; ການບໍລິການບໍລິຫານຈັດການ ອຸປະກອນຄອມພິວເຕີຕ່າງໆໃນສະຖານທີ່; ແລະ ການບໍລິການບໍລິຫານຈັດການ ຂັ້ນຕອນການເຮັດວຽກຂອງຄອມພິວເຕີ ແລະ ການແຈກຢາຍ.

| | |
|---|---|
| **58** | **ອື່ນໆ** |

**7529 ການບໍລິການໂທລະຄົມມະນາຄົມອື່ນ**

**75291 <u>ການບໍລິການເຄື່ອງເພດເຈີ</u>**

ການຮຽກຕົວບຸກຄົນທີ່ຈະໂທລະສັບຜ່ານການໃຊ້ເຄື່ອງເພດເຈີອີເລັກໂທຣນິກ. ລະຫັດຍ່ອຍນີ້ລວມທັງ ການບໍລິການເພດເຈີ ສຽງ, ສຽງເວົ້າ ແລະ ການສະແດງຜົນແບບດິຈິຕອນ.

**75292 <u>ການບໍລິການປະຊຸມທາງໄກ</u>**

ການບໍລິການເຄືອຂ່າຍແລະການບໍລິການກ່ຽວຂ້ອງທີ່ຈຳເປັນເພື່ອຈັດການປະຊຸມທາງວິດີໂອ ແບບທາງດຽວຫຼືສອງທາງຕອບໂຕ້ຢ່າງເຕັມສ່ວນ.

**75299 <u>ການບໍລິການໂທລະຄົມມະນາຄົມອື່ນ</u>**

ການບໍລິການໂທລະຄົມມະນາຄົມທີ່ບໍ່ໄດ້ຈັດໄວ້ໃນລະຫັດອື່ນ. ໃນລະຫັດນີ້ປະກອບມີ ການບໍລິການສື່ສານໂທລະສັບເຄື່ອນທີ່ທາງທະເລ ແລະ ທາງອາກາດສູ່ພື້ນ.

**D. ການບໍລິການດ້ານພາບແລະສຽງ**

| | |
|---|---|
| **59** | **ການບໍລິການດ້ານການຜະລິດ ແລະ ຈຳໜ່າຍວິດີໂອເທບ ແລະ ພາບເຄື່ອນໄຫວ (CPC 9611)** |

**9611 ການບໍລິການດ້ານການຜະລິດ ແລະ ຈຳໜ່າຍວິດີໂອເທບ ແລະ ພາບເຄື່ອນໄຫວ**

| | |
|---|---|
| | **96111 ການບໍລິການດ້ານການສົ່ງເສີມ ຫຼື ໂຄສະນາ**<br>**96112 ການບໍລິການດ້ານການຜະລິດວີດີໂອເທບ ແລະ ພາບເຄື່ອນໄຫວ**<br><br>ການບໍລິການດ້ານການຜະລິດ ພາບເຄື່ອນໄຫວສໍາລັບລະຄອນແລະບໍ່ແມ່ນລະຄອນ, ບໍ່ວ່າຈະຢູ່ໃນຮູບແບບວີດີໂອເທບ ຫຼື ຟີມຮູບເງົາ ເພື່ອການສາຍໃນໂຮງລະຄອນ, ອອກອາກາດໃນໂທລະພາບ, ຫຼື ເພື່ອຂາຍ ຫຼື ໃຫ້ເຊົ່າໃຫ້ກັບຜູ້ອື່ນ. ຜົນຜະລິດທີ່ໄດ້ມານັ້ນອາດຈະເປັນຮູບເງົາລະຄອນສັ້ນ ແລະ ເຕັມຄວາມຍາວ ສໍາລັບການບັນເທີງຂອງມະຫາຊົນທົ່ວໄປ, ເພື່ອການໂຄສະນາ, ການສຶກສາ, ການເຝິກອົບຮົມ ແລະ ຂໍ້ມູນຂ່າວສານ ເຊັ່ນດຽວກັນກັບ ຮູບພາບທາງສາສະໜາ, ກາຕູນເຄື່ອນໄຫວທຸກຊະນິດ, ແລະ ອື່ນໆ.<br>ບໍ່ລວມ: ການບໍລິການດ້ານການຜະລິດຟີມສະໄລ ແລະ ຟີມພາບບໍ່ເຄື່ອນໄຫວ ແມ່ນຖືກຈັດໄວ້ໃນລະຫັດ 8750 (ການບໍລິການດ້ານຮູບພາບ).<br>**96113 ການບໍລິການຈໍາໜ່າຍວີດີໂອເທບ ແລະ ພາບເຄື່ອນໄຫວ**<br>ການບໍລິການຈໍາໜ່າຍ ວີດີໂອເທບ ແລະ ພາບເຄື່ອນໄຫວ. ການບໍລິການນີ້ກ່ຽວຂ້ອງກັບ ການຂາຍ ຫຼື ໃຫ້ເຊົ່າ ຮູບເງົາ ຫຼື ເທບ ໃຫ້ກັບອຸດສາຫະກໍາອື່ນ ສໍາລັບການບັນເທີງມະຫາຊົນທົ່ວໄປ, ການອອກອາກາດທາງໂທລະພາບ, ຫຼື ການຂາຍ ຫຼື ໃຫ້ເຊົ່າໃຫ້ກັບຜູ້ອື່ນ.<br><br>**96114 ການບໍລິການອື່ນ ທີ່ຕິດພັນກັບການຜະລິດ ແລະ ຈໍາໜ່າຍວີດີໂອເທບ ແລະ ພາບເຄື່ອນໄຫວ**<br>ການບໍລິການເສີມ, ທີ່ບໍ່ໄດ້ຈັດໄວ້ໃນລະຫັດບ່ອນອື່ນ, ບົນພື້ນຖານຄ່າຕອບແທນ ຫຼື ສັນຍາ, ເພື່ອການຜະລິດແລະ ຈໍາໜ່າຍເທບ ແລະ ພາບເຄື່ອນໄຫວ, ເຊັ່ນ ການພາກສຽງໃສ່ຟີມຮູບເງົາ, ການພິມຂໍ້ຄວາມໃສ່ຮູບເງົາ, ການດັດແກ້, ການຕັດຕໍ່, ແລະ ອື່ນໆ.<br>ບໍ່ລວມ: ການບໍລິການໃຫ້ເຊົ່າເຄື່ອງ ແລະ ອຸປະກອນ (ຕ.ຢ. ເຄື່ອງແຕ່ງກາຍ, ອຸປະກອນປະກອບສາກ, ກ້ອງຖ່າຍ) ໃຫ້ກັບອຸດສາຫະກໍາບັນເທີງ ແມ່ນຖືກຈັດລະຫັດໄວ້ໃນ ໝວດ 83 (ການບໍລິການເຊົ່າ ຫຼື ໃຫ້ເຊົ່າໂດຍບໍ່ລວມຜູ້ຄວບຄຸມ).<br>ການບໍລິການເປັນຕົວແທນໃນນາມຂອງນັກສະແດງໃດໜຶ່ງ ແມ່ນຖືກຈັດລະຫັດໄວ້ໃນ ລະຫັດຍ່ອຍ 87909 (ການບໍລິການທຸລະກິດອື່ນໆ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ).<br>ການບໍລິການສ້າງສໍາເນົາຮູບເງົາແລະເທບ ແມ່ນຖືກຈັດລະຫັດໄວ້ໃນ ລະຫັດຍ່ອຍ 88442 (ການພິມ ແລະການຈໍາໜ່າຍ, ບົນພື້ນຖານຕາມຄ່າຕອບແທນ ຫຼື ສັນຍາ).<br>ການບໍລິການເປັນຕົວແທນການເລືອກນັກສະແດງ ແລະ ການຈອງ ແມ່ນຖືກຈັດລະຫັດໄວ້ໃນ ລະຫັດຍ່ອຍ 96499 (ການບໍລິການໃຫ້ຄວາມບັນເທີງອື່ນໆ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ). |
| **60** | **ການບໍລິການດ້ານການສາຍພາບເຄື່ອນໄຫວ (ຮູບເງົາ) (CPC 9612)** |
| **9612** | **ການບໍລິການດ້ານການສາຍພາບເຄື່ອນໄຫວ**<br>**96121 ການບໍລິການດ້ານການສາຍພາບເຄື່ອນໄຫວ**<br>ການບໍລິການດ້ານການສາຍພາບເຄື່ອນໄຫວໃນໂຮງຮູບເງົາ ຫຼື ສະຖານທີ່ກາງແຈ້ງ ແລະ ໃນຫ້ອງສ່ວນຕົວທີ່ມີ ໜ້າຈໍ ຫຼື ສະຖານທີ່ອື່ນສໍາລັບການສາຍ.<br>**96122 ການບໍລິການດ້ານການສາຍວີດີໂອເທບ**<br><br>ການບໍລິການດ້ານການສາຍວີດີໂອເທບ ໃນໂຮງຮູບເງົາ ຫຼື ສະຖານທີ່ກາງແຈ້ງ ແລະ ໃນຫ້ອງສ່ວນຕົວທີ່ມີໜ້າຈໍ ຫຼື ສະຖານທີ່ອື່ນສໍາລັບການສາຍ. |
| **61** | **ການບໍລິການດ້ານວິທະຍຸ ແລະ ໂທລະພາບ (CPC 9613)** |

**9613 ການບໍລິການດ້ານວິທະຍຸ ແລະ ໂທລະພາບ**

**96131 ການບໍລິການດ້ານວິທະຍຸ**

ການບໍລິການ ການຜະລິດລາຍການວິທະຍຸບໍ່ວ່າຈະເປັນການຖ່າຍທອດສົດ (live) ຫຼື ບັນທຶກພາບ (tape) ຫຼື ການບັນທຶກຂະໜາດກາງ ສໍາລັບການອອກອາກາດຕໍ່ໄປ. ລາຍການເລົ່ານີ້ ອາດຈະແມ່ນສໍາລັບ ການບັນເທີງ, ສໍາລັບການສົ່ງເສີມການສຶກສາ, ການເຝິກອົບຮົມ ຫຼື ການເຜີຍແຜ່ຂ່າວ, ລວມທັງ ບົດລະຄອນ ທີ່ມີການຜະລິດປົກກະຕິໃນສະຖານີວິທະຍຸ. ນອກນັ້ນ, ຍັງລວມມີການຜະລິດລາຍການທາງດ້ານກິລາ, ພະຍາກອນອາກາດ, ການສໍາພາດ ແລະ ອື່ນໆ.

ບໍ່ລວມ: ການບໍລິການສົ່ງຄົ້ນສັນຍານລາຍການວິທະຍຸທີ່ຜະລິດໂດຍລາຍການວິທະຍຸອື່ນ ທີ່ຖືກຈັດຢູ່ ໃນລະຫັດ (CPC) 7524 (ການສົ່ງຄົ້ນສັນຍານລາຍການ).

**96132: ການບໍລິການໂທລະພາບ**

ການບໍລິການຜະລິດລາຍການໂທລະພາບ ບໍ່ວ່າຈະເປັນການຖ່າຍທອດສົດ (live) ຫຼື ບັນທຶກພາບ (tape) ຫຼື ການບັນທຶກຂະໜາດກາງ ສໍາລັບການອອກອາກາດຕໍ່ໄປ. ລາຍການເຫຼົ່ານີ້ອາດຈະ ແມ່ນສໍາລັບການບັນເທີງ, ສໍາລັບການສົ່ງເສີມການສຶກສາ, ການເຝິກອົບຮົມ ຫຼື ເຜີຍແຜ່ຂ່າວ, ລວມທັງ ບົດລະຄອນທີ່ມີການຜະລິດຕາມປົກກະຕິໃນສະຖານີວິທະຍຸ, ນອກນັ້ນ, ຍັງລວມມີການຜະລິດລາຍການທາງດ້ານກິລາ, ພະຍາກອນອາກາດ, ການສໍາພາດ ແລະ ອື່ນໆ.

ບໍ່ລວມ: ການບໍລິການສົ່ງຄົ້ນສັນຍານລາຍການໂທລະພາບ ທີ່ຜະລິດໂດຍລາຍການໂທລະພາບອື່ນທີ່ຖືກຈັດ ຢູ່ໃນລະຫັດ (CPC) 7524 (ການສົ່ງຄົ້ນສັນຍານລາຍການ).

**96133: ການບໍລິການແບບລວມທີ່ມີທັງການຜະລິດ ແລະ ການກະຈາຍພາບ-ສຽງ**

ການບໍລິການແບບລວມຂອງການຜະລິດ ແລະ ກະຈາຍທາງວິທະຍຸ ແລະ ໂທລະພາບ.

| 62 | **ການບໍລິການສົ່ງຄົ້ນສັນຍານວິທະຍຸ ແລະ ໂທລະພາບ (CPC 7524)** |
|---|---|

**7524 ການບໍລິການສົ່ງຄົ້ນສັນຍານລາຍການ**

**75241: ການບໍລິການສົ່ງຄົ້ນສັນຍານເພື່ອອອກອາກາດໂທລະພາບ**

ການໃຫ້ບໍລິການເຄື່ອຂ່າຍ ສໍາລັບສົ່ງສັນຍານໂທລະພາບ, ໂດຍບໍ່ກ່ຽວຂ້ອງກັບປະເພດຂອງເຕັກໂນໂລຊີ (ເຄືອຂ່າຍ) ຕ່າງໆ ທີ່ນໍາໃຊ້. ໃນຂະແໜງຍ່ອຍນີ້ ບໍ່ໄດ້ລວມການບໍລິການການຂາຍສັນຍານດາວທຽມ ໃຫ້ກັບບໍລິສັດທີ່ໃຫ້ບໍລິການສັນຍານໂທລະພາບເຄເບີ້ນ (ຊຶ່ງກົງກັນຂ້າມກັບການຂາຍ ການນໍາໃຊ້ສິ່ງອໍານວຍຄວາມສະດວກຂອງດາວທຽມ), ແລະ ບໍ່ລວມເອົາການບໍລິການດາວທຽມ ສົ່ງໂດຍກົງຫາບ້ານ DTH (direct to home) ໃນກໍລະນີທີ່ຜູ້ສະໜອງຂາຍ ແພັກເກດລາຍການໂທລະພາບໂດຍກົງຫາຄົວເຮືອນທີ່ຕັ້ງຢູ່ໃນເຂດຫ່າງໄກ ສອກຫຼີກ.

**75242 ການບໍລິການສົ່ງສັນຍານອອກອາກາດທາງວິທະຍຸ**

ການບໍລິການເຄື່ອຂ່າຍທີ່ມີຄວາມຈໍາເປັນ ສໍາລັບການສົ່ງສັນຍານສຽງເຊັ່ນ: ວິທະຍຸກະຈາຍສຽງ, ສຽງເພງແບບໃຊ້ສາຍ ແລະ ການບໍລິການທາງໂທລະໂຄ່ງ.

| 63 | **ການບັນທຶກສຽງ** |
|---|---|

| | |
|---|---|
| | |
| 64 | ການບໍລິການດ້ານພາບ ແລະ ສຽງອື່ນໆ |
| | |
| 65 | E. ອື່ນໆ<br>(ການບໍລິການດ້ານການສື່ສານອື່ນໆ) |
| | |
| ການບໍລິການດ້ານການກໍ່ສ້າງ ແລະ ວິສາວະກຳທີ່ກ່ຽວຂ້ອງ | |
| 66 | A. ວຽກກໍ່ສ້າງທົ່ວໄປສຳລັບອາຄານ (CPC 512) |

512 ວຽກກໍ່ສ້າງສຳລັບອາຄານ

5121 51210 ສຳລັບ 1 ແລະ 2 ອາຄານທີ່ຢູ່ອາໄສ

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານຢູ່ອາໄສ ທີ່ມີ 1 ຫຼື 2 ສະຖານທີ່ (ຫ້ອງ) ທີ່ຢູ່ອາໄສ.

5122 51220 ສຳລັບ ຫຼາຍອາຄານທີ່ຢູ່ອາໄສ

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານຢູ່ອາໄສ ທີ່ມີ ຫຼາຍ ສະຖານທີ່ທີ່ຢູ່ອາໄສ.

5123 51230 ສຳລັບ ອາຄານອຸດສາຫະກຳ ແລະ ສາງ

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານອຸດສາຫະກຳ (ໂຮງງານ) ແລະ ສາງ ເຊັ່ນ ອາຄານອຸດສາຫະກຳເບົາ ແລະ ອາຄານອຸດສາຫະກຳການຜະລິດ.

ບໍ່ລວມ: ວຽກກໍ່ສ້າງໃນສະຖານທີ່ພິເສດສະເພາະໃດໜຶ່ງ ສຳລັບ ການຜະລິດ ທີ່ຖືກຈັດໄວ້ໃນລະຫັດຍ່ອຍ 51360.

5124 51240 ສຳລັບ ອາຄານພານິດ

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານພານິດ ເຊັ່ນ ອາຄານ ຫ້ອງການ, ອາຄານທະນາຄານ, ໂຮງຈອດລົດ, ປໍ້ານໍ້າມັນ ແລະ ສະຖານີບໍລິການ, ສູນການຄ້າ ແລະ ສະຖານີຂົນສົ່ງທາງ ລົດ ແລະ ສະຖານີລົດໄຟ, ທາງອາກາດ ຫຼື ທາງຖະໜົນຫົນທາງ.

5125 51250 ສຳລັບ ອາຄານການບັນເທີງສາທາລະນະ

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານການບັນເທີງສາທາລະນະ ເຊັ່ນ ໂຮງໜັງ, ໂຮງລະຄອນ, ໂຮງສະແດງດົນຕີ, ໂຮງເຕັ້ນລຳ ແລະ ສະຖານບັນເທີງ.

ບໍ່ລວມ: ວຽກກໍ່ສ້າງໃນສະຖານທີ່ເພື່ອການພັກຜ່ອນຍ່ອນໃຈ ແລະ ກິລາ ທີ່ຖືກຈັດໄວ້ໃນລະຫັດຍ່ອຍ 5137.

5126 51260 ສຳລັບ ອາຄານຮ້ານອາຫານ, ໂຮງແຮມ ແລະ ອາຄານປະເພດທີ່ຄ້າຍຄືກັນ

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານຮ້ານອາຫານ, ໂຮງແຮມ, ໂມເຕັນ, ເຮືອນພັກ, ໂຮສເຕັນ, ຮ້ານອາຫານ ແລະ ອາຄານປະເພດທີ່ຄ້າຍຄືກັນ.

5127 51270 ສຳລັບ ອາຄານການສຶກສາ

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານການສຶກສາ ເຊັ່ນ

ໂຮງຮຽນ, ວິທະຍາໄລ, ມະຫາວິທະຍາໄລ, ຫ້ອງສະໝຸດ, ຫໍເກັບເອກະສານ ແລະ ໂຮງພິພິດທະພັນ.

**5128 51280 ສໍາລັບ ອາຄານສຸຂະພາບ**

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານສຸຂະພາບ ເຊັ່ນ ໂຮງໝໍ ແລະ ສຸກສາລາ.

**5129 51290 ສໍາລັບ ອາຄານອື່ນໆ**

ວຽກກໍ່ສ້າງ ( ລວມທັງ ວຽກໃໝ່, ວຽກເພີ່ມ, ວຽກປັບປຸງໃໝ່, ແລະ ວຽກສ້ອມແປງ) ອາຄານບໍ່ແມ່ນເພື່ອຢູ່ອາໄສ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ, ເຊັ່ນ ອາຄານທາງສາສະໜາ ແລະ ອາຄານຄຸກ.

| 67 | B. ວຽກກໍ່ສ້າງທົ່ວໄປສໍາລັບວິສະວະກໍາໂຍທາ (CPC 513) |
|---|---|

**513 ວຽກກໍ່ສ້າງສໍາລັບວິສະວະກໍາໂຍທາ**

**5131 51310 ສໍາລັບ ທາງດ່ວນ (ຍົກເວັ້ນ ທາງດ່ວນຍົກລະດັບ), ຖະໜົນຫົນທາງ, ເສັ້ນທາງ, ທາງລົດໄຟ ແລະ ເດີ່ນບິນ**

ວຽກກໍ່ສ້າງ ທາງດ່ວນ (ຍົກເວັ້ນ ທາງດ່ວນຍົກລະດັບ), ຖະໜົນຫົນທາງ, ເສັ້ນທາງ, ທາງສໍາລັບພາຫະນະແລະທາງສໍາລັບຄົນຍ່າງອື່ນໆ, ຮົ້ວປ້ອງກັນ, ທາງລົດໄຟ ແລະ ເດີ່ນບິນ.

ບໍ່ລວມ: ວຽກກໍ່ສ້າງ ທາງດ່ວນຍົກລະດັບ ແລະ ທາງລົດໄຟໃຕ້ດິນ ແມ່ນຖືກຈັດໃນລະຫັດຍ່ອຍ 51320.

**5132 51320 ສໍາລັບ ຂົວ, ທາງດ່ວນຍົກລະດັບ, ອຸໂມງ, ແລະ ທາງລົດໄຟໃຕ້ດິນ**

ວຽກກໍ່ສ້າງ ຂົວ, ສະພານ, ທາງດ່ວນຍົກລະດັບ, ທາງດ່ວນ, ອຸໂມງສໍາລັບຄົນຍ່າງແລະອຸໂມງສໍາລັບທາງລາງ, ແລະ ທາງລົດໄຟໃຕ້ດິນ.

**5133 51330 ສໍາລັບ ທາງນໍ້າ, ທ່າເຮືອ, ເຂື່ອນ ແລະ ວຽກງານທາງນໍ້າອື່ນໆ**

ວຽກກໍ່ສ້າງ ທາງນໍ້າ, ທ່າເຮືອ, ວຽກງານທາງແມ່ນໍ້າ, ເຂື່ອນ, ຊົນລະປະທານ ແລະ ວຽກງານທາງນໍ້າອື່ນໆ.

ບໍ່ລວມ: ວຽກກໍ່ສ້າງທໍ່ສົ່ງທາງນໍ້າ ແລະ ໃນທໍ່ນໍ້າແລະທໍ່ລະບາຍນໍ້າ ແມ່ນຖືກຈັດໃນລະຫັດຍ່ອຍ 51340 (ສໍາລັບທໍ່ສົ່ງທາງໄກ, ສາຍໄຟຟ້າແລະສາຍການສື່ສານ (ສາຍເຄເບີ້ນ)) ແລະ 51350 (ສໍາລັບທໍ່ສົ່ງ ແລະ ເຄເບີ້ນໃນທ້ອງຖິ່ນ; ວຽກຍ່ອຍ) ຕາມລໍາດັບ.

**5134 51340 ສໍາລັບ ທໍ່ທາງໄກ, ສາຍໄຟຟ້າ ແລະ ສາຍການສື່ສານ (ສາຍເຄເບີ້ນ)**

ວຽກກໍ່ສ້າງ ທໍ່ສົ່ງທາງໄກທາງບົກ ຫຼື ທາງນໍ້າ ແລະ ສາຍໄຟຟ້າ ແລະ ສາຍສົ່ງໂທລະຄົມ (ສາຍເຄເບີ້ນ).

ບໍ່ລວມ: ວຽກກໍ່ສ້າງ ທໍ່ອາຍແກັສທ້ອງຖິ່ນ, ທໍ່ນໍ້າ ຫຼື ສາຍສົ່ງການສື່ສານ (ສາຍເຄເບີ້ນ) ແມ່ນຖືກຈັດໃນລະຫັດຍ່ອຍ 51350 (ວຽກກໍ່ສ້າງ ສໍາລັບ ທໍ່ສົ່ງ ແລະ ສາຍເຄເບີ້ນໃນທ້ອງຖິ່ນ; ວຽກຍ່ອຍ).

**5135 51350 ສໍາລັບ ທໍ່ສົ່ງ ແລະ ສາຍເຄເບີ້ນໃນທ້ອງຖິ່ນ; ວຽກຍ່ອຍ**

ວຽກກໍ່ສ້າງທໍ່ອາຍແກັສທ້ອງຖິ່ນ ແລະ ທໍ່ນໍ້າ ແລະ ທໍ່ລະບາຍນໍ້າ ແລະ ສາຍສົ່ງການສື່ສານ (ສາຍເຄເບີ້ນ). ວຽກກໍ່ສ້າງ ໃນວຽກຍ່ອຍ ເຊັ່ນ ຫໍຄອຍສົ່ງສັນຍານ ລວມທັງ ເສົາ ແລະ ສະຖານີແປງສັນຍານ ແລະ ສະຖານີຍ່ອຍ ສໍາລັບແຈກຍາຍສັນຍານພາຍໃນເຂດແດນ.

ບໍ່ລວມ: ວຽກກໍ່ສ້າງ ທໍ່ສົ່ງທາງໄກ ແລະ ສາຍເຄເບີ້ນ ແມ່ນຖືກຈັດໃນລະຫັດຍ່ອຍ 51340.

**5136 51360 ສໍາລັບ ການກໍ່ສ້າງເພື່ອຂຸດຄົ້ນ ແລະ ການຜະລິດ**

ວຽກກໍ່ສ້າງ ການກໍ່ສ້າງເພື່ອການຂຸດຄົ້ນ ແລະ ການຜະລິດ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ ຕົວຢ່າງ ສະຖານີຄ່ຽນຖ່າຍ, ວິນດິງ ຊາຟ, ໂຮງງານໄຟຟ້າ, ໂຮງງານເຄມີ, ໂຮງຫຼໍ່ເລັກ, ເຕົາຫຼອມ, ເຕົາເຜົາຖ່ານຫີນ.

ບໍ່ລວມ: ວຽກກໍ່ສ້າງ ສໍາລັບ ອາຄານອຸດສາຫະກໍາ ແລະ ສາງ ແມ່ນຖືກຈັດໃນລະຫັດຍ່ອຍ 51230.

**5137 ສຳລັບ ການກໍ່ສ້າງເພື່ອການກິລາ ແລະ ການພັກຜ່ອນຍ່ອນໃຈ**

**51371 ສຳລັບ ພື້ນທີ່ການກິລາ ແລະ ສະໜາມກິລາ**

ວຽກກໍ່ສ້າງສະໜາມກິລາ ແລະ ພື້ນທີ່ການກິລາອື່ນ ເຊິ່ງໂດຍທົ່ວໄປຈະຫຼິ້ນກາງແຈ້ງ ເຊັ່ນ ກິລາບານເຕະ, ກິລາເບສບອນ, ກິລາຣັກບີ້, ກິລາເທີງລາງ ແລະ ເທີງສະໜາມ, ກິລາແຂ່ງລົດໃຫຍ່ ຫຼື ລົດຖີບ ແລະ ກິລາແຂ່ງມ້າ.

**51372 ສຳລັບ ການຕິດຕັ້ງເພື່ອການພັກຜ່ອນ ແລະ ກິລາອື່ນໆ (ຕົວຢ່າງ ສະລອຍນໍ້າ, ເດີ່ນເທນນິດ, ສະໜາມກອຟ)**

ວຽກກໍ່ສ້າງຂອງການຕິດຕັ້ງເພື່ອການພັກຜ່ອນ ແລະ ກິລາອື່ນໆ. ການຕິດຕັ້ງເພື່ອກິລາທີ່ຖືກຈັດໄວ້ໃນນີ້ສ່ວນຫຼາຍແມ່ນສຳລັບກິລາໃນຮົ່ມ ແລະ ມີເນື້ອທີ່ໜ້ອຍສຳລັບຜູ້ຊົມ, ຕົວຢ່າງ ສາໜາມບານບ້ວງ, ລານກິລາຮ໋ອກກີ້ນ້ຳກ້ອນ, ສະລອຍນໍ້າ , ເດີ່ນເທນນິດ, ໂຮງຍິມນາສຕິກ ແລະ ເວທີມວຍ. ວຽກກໍ່ສ້າງ ການຕິດຕັ້ງເພື່ອການພັກຜ່ອນ, ຕົວຢ່າງ ສະໜາມກອຟ, ວຽກການຕິດຕັ້ງຢູ່ຫາດຊາຍ, ຜາມພັກຜ່ອນເທິງພູ, ທ່າຈອດເຮືອສຳລັບເຮືອນສຳລານ, ພື້ນທີ່ສວນ ແລະ ສະຖານທີ່ອຳນວຍຄວາມສະດວກຂອງສວນເພື່ອການພັກຜ່ອນ.

**5139 51390 ສຳລັບວຽກວິສະວະກຳ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ**

ວຽກກໍ່ສ້າງ ສຳລັບວຽກວິສະວະກຳ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ, ເຊັ່ນ ການກໍ່ສ້າງໃນສະຖານທີ່ຂຸດຄົ້ນບໍ່ແຮ່.

| 68 | C. ວຽກການປະກອບສ້າງ ແລະ ການຕິດຕັ້ງ(CPC 514+516) |
|---|---|

**514 ການປະກອບສ້າງ ແລະ ການຕິດຕັ້ງ ຂອງການກໍ່ສ້າງສຳເລັດຮູບ**

**5140 51400 ການປະກອບສ້າງ ແລະ ການຕິດຕັ້ງ ຂອງການກໍ່ສ້າງສຳເລັດຮູບ**

ການຕິດຕັ້ງອາຄານສຳເລັດຮູບທີ່ຄົບຖ້ວນໃນສະຖານວຽກ, ຫຼື ການປະກອບສ້າງ ແລະ ການຕິດຕັ້ງ ພາກສ່ວນສຳເລັດຮູບໃສ່ອາຄານໃນສະຖານວຽກ ຫຼື ການກໍ່ສ້າງອື່ນ ຍົກເວັ້ນ ວຽກການສ້າງພາກສ່ວນເຫຼັກສຳເລັດຮູບ.

ບໍ່ລວມ: ວຽກການສ້າງພາກສ່ວນເຫຼັກສຳເລັດຮູບສຳລັບ ອາຄານ ແລະ ໂຄງສ້າງອື່ນ ແມ່ນຖືກຈັດໃນລະຫັດຍ່ອຍ 51550 (ການສ້າງ ແລະ ການດັດເຫຼັກ (ລວມທັງການເຊື່ອມໂລຫະ)).

**516 ວຽກການຕິດຕັ້ງ**

**5161 51610 ວຽກການເຮັດຄວາມຮ້ອນ, ການລະບາຍອາກາດ, ການປັບອາກາດ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະທີ່ກ່ຽວຂ້ອງກັບ ການເຮັດຄວາມຮ້ອນດ້ວຍໄຟຟ້າ ຫຼື ດ້ວຍວິທີອື່ນ, ການລະບາຍອາກາດ, ການເຮັດຄວາມເຢັນ ຫຼື ອຸປະກອນປັບອາກາດ. ທໍ່ ແລະ ວຽກກ່ຽວຂ້ອງກັບເຫຼັກແຜ່ນທີ່ຖືກປະຕິບັດອັນເປັນສ່ວນສຳຄັນຂອງວຽກດັ່ງກ່າວ ກໍ່ຖືກລວມຢູ່ໃນນີ້.

ບໍ່ລວມ: ວຽກການຕິດຕັ້ງເຄື່ອງເຮັດຄວາມຮ້ອນດ້ວຍໄຟຟ້າ ແມ່ນຖືກຈັດໃນລະຫັດຍ່ອຍ 51649 (ວຽກກໍ່ສ້າງໄຟຟ້າອື່ນໆ).

**5162 51620 ວຽກວາງທໍ່ລະບາຍນໍ້າ ແລະ ທໍ່ນໍ້າ**

ວຽກກໍ່ສ້າງການຄ້າສະເພາະທີ່ກ່ຽວຂ້ອງກັບລະບົບທໍ່ນໍ້າຫຼັກ ຮ້ອນ ຫຼື ເຢັນ (ເຊັ່ນ ນໍ້າປະປາ), ລວມທັງ ການຕິດຕັ້ງທໍ່ສີດນໍ້າ, ການຕິດຕັ້ງການລະບາຍນໍ້າ (ຍົກເວັ້ນ ວຽກກໍ່ສ້າງ ທໍ່ລະບາຍນໍ້າຝົນ ຫຼື ລະບາຍນໍ້າເປື້ອນ) ແລະ ການຕິດຕັ້ງຖັງເກັບຂອງເສຍ. ວຽກນໍ້າປະປາທີ່ເກີດຈາກການຕິດຕັ້ງເຄື່ອງໄຟຟ້າພາຍໃນກໍ່ຖືກລວມຢູ່ໃນນີ້.

ບໍ່ລວມ: ວຽກກໍ່ສ້າງ ທໍ່ລະບາຍນໍ້າຝົນ ຫຼື ລະບາຍນໍ້າເປື້ອນ ແມ່ນຖືກຈັດໃນລະຫັດຍ່ອຍ 51330 (ວຽກກໍ່ສ້າງທົ່ວໄປສຳລັບ ທາງນໍ້າ, ທ່າເຮືອ, ເຂື່ອນ ແລະ ວຽກງານທາງນໍ້າອື່ນໆ).

ວຽກຕິດຕັ້ງ ເຄື່ອງເຮັດຄວາມຮ້ອນໃນພື້ນທີ່ ແມ່ນຖືກຈັດໃນລະຫັດຍ່ອຍ 51610 (ວຽກເຄື່ອງປັບອາກາດ, ການ

ລະບາຍອາກາດ, ການເຮັດຄວາມຮ້ອນ).

**5163 51630 ວຽກກໍ່ສ້າງຕິດຕັ້ງທໍ່ອາຍແກັສ**

ວຽກກໍ່ສ້າງການຄ້າສະເພາະທີ່ກ່ຽວຂ້ອງກັບລະບົບສ້າງຄວາມຮ້ອນແບບແຫ້ງ ແລະ ຕິດຕັ້ງອາຍແກັສທຳມະຊາດ, ຍົກເວັ້ນການສ້າງຄວາມຮ້ອນດ້ວຍໄຟຟ້າ ແລະ ວຽກທໍ່.

ບໍ່ລວມ: ການສ້າງຄວາມຮ້ອນໃນພື້ນທີ່, ການລະບາຍອາກາດ, ວຽກເຄື່ອງປັບອາກາດ ແມ່ນຖືກຈັດໃນລະຫັດຍ່ອຍ 51610, ບໍ່ວ່າຈະໃຊ້ກັບອາຍແກັສ ຫຼື ບໍ່ ກໍຕາມ.

**5164 ວຽກໄຟຟ້າ**

**51641 ວຽກຕິດຕັ້ງ ແລະ ແລ່ນສາຍໄຟຟ້າ**

ວຽກກໍ່ສ້າງການຄ້າສະເພາະທີ່ກ່ຽວຂ້ອງກັບ ການຕິດຕັ້ງລະບົບສາຍໄຟຟ້າພື້ນຖານ ຫຼື ຕິດຕັ້ງໃນອາຄານ ຫຼື ໂຄງການກໍ່ສ້າງອື່ນໆ.

ບໍ່ລວມ: ວຽກຫຸ້ມສາຍສະນວນສາຍໄຟຟ້າຈາກທໍ່ນໍ້າ ແມ່ນຖືກຈັດໃນລະຫັດຍ່ອຍ 51650 (ວຽກເຮັດ ສະໜວນກັ້ນ).

**51642 ວຽກກໍ່ສ້າງ ສັນຍານເຕືອນໄຟໄໝ້**

ວຽກກໍ່ສ້າງການຄ້າສະເພາະ ສັນຍານເຕືອນໄຟໄໝ້, ການມອດໄຟ, ອຸປະກອນໜີໄຟ.

ບໍ່ລວມ: ວຽກການຕິດຕັ້ງເຄື່ອງສີດນໍ້າໃນສວນ ແມ່ນຖືກຈັດໃນລະຫັດຍ່ອຍ 51620 (ວຽກວາງທໍ່ລະບາຍນໍ້າ ແລະ ທໍ່ນໍ້າປະປາ).

ວຽກປ້ອງກັນໄຟ ແມ່ນຖືກຈັດໃນລະຫັດຍ່ອຍ 51650 (ວຽກເຮັດສະໜວນກັ້ນ (ສຽງ, ຄວາມຮ້ອນ, ນໍ້າ, ສາຍໄຟຟ້າ)).

**51643 ວຽກກໍ່ສ້າງ ລະບົບສັນຍານເຕືອນຂະໂມຍ**

ວຽກກໍ່ສ້າງການຄ້າສະເພາະ ລະບົບສັນຍານເຕືອນຂະໂມຍໃນສະຖານທີ່ກໍ່ສ້າງ.

**51644 ວຽກກໍ່ສ້າງ ເສົາອາກາດໃຫ້ທີ່ຢູ່ອາໄສ**

ວຽກກໍ່ສ້າງການຄ້າສະເພາະ ເສົາອາກາດ ແລະ ສາຍອາກາດໃຫ້ທີ່ຢູ່ອາໄສ. ວຽກຕິດຕັ້ງ ຕົວນຳ ແລະ ສາຍລໍ້ ຟ້າຜ່າ ແມ່ນຖືກລວມຢູ່ໃນນີ້.

**51649 ວຽກກໍ່ສ້າງໄຟຟ້າອື່ນໆ**

ວຽກກໍ່ສ້າງໄຟຟ້າເພື່ອການຄ້າສະເພາະອື່ນໆ, ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ ຕົວຢ່າງ ວຽກກໍ່ສ້າງ ສັນຍານໄຟຟ້າ ແລະ ການໃຫ້ແສງສະຫວ່າງທາງຫຼວງ ແລະ ອຸປະກອນສຽງ, ວຽກຕິດຕັ້ງ ອຸປະກອນຄົມມະນາຄົມ ຫຼື ການສ້າງຄວາມຮ້ອນດ້ວຍໄຟຟ້າ. ວຽກໄຟຟ້າ ທີ່ເກີດຈາກການຕິດຕັ້ງເຄື່ອງໄຟຟ້າພາຍໃນກໍຖືກລວມຢູ່ໃນນີ້.

**5165 51650 ວຽກເຮັດສະໜວນກັ້ນ (ສຽງ, ຄວາມຮ້ອນ, ນໍ້າ, ສາຍໄຟຟ້າ)**

ວຽກກໍ່ສ້າງການຄ້າສະເພາະ ການເຮັດສະໜວນກັ້ນສາຍໄຟຟ້າຈາກ ທໍ່ນໍ້າ, ແລະ ຈາກນໍ້າ, ຄວາມຮ້ອນ ຫຼື ສຽງ, ລວມທັງວັດສະດຸເຮັດສະໜວນກັ້ນປ້ອງກັນນໍ້າສຳລັບຮູໂກນຢູ່ຝາພາຍນອກ ແລະ ວຽກເຮັດສະໜວນກັ້ນອຸນຫະພູມໃຫ້ກັບທໍ່ນໍ້າເຢັນ ແລະ ທໍ່ນໍ້າຮ້ອນ, ເຄື່ອງຕົ້ມນໍ້າ ແລະ ທໍ່ສົ່ງ. ວຽກປ້ອງກັນໄຟແມ່ນຖືກລວມຢູ່ໃນນີ້.

ບໍ່ລວມ: ວຽກກັນນໍ້າໃຫ້ຫຼັງຄາ ແມ່ນຖືກຈັດໃນລະຫັດຍ່ອຍ 51530 (ການກັນນໍ້າ ແລະ ການມຸງຫຼັງຄາ).

5166 51660 **ວຽກກໍ່ສ້າງ ຮາວ ແລະ ຮົ້ວ**

ວຽກກໍ່ສ້າງການຄ້າສະເພາະ ຮົ້ວ, ຮາວ ແລະ ຮົ້ວທີ່ຄ້າຍຄືກັນ. ຮົ້ວອາດມາຈາກວັດສະດຸທີ່ແຕກຕ່າງກັນ (ລວດ, ໄມ້, ເຫຼັກ, ໃຍແກ້ວ) ແລະ ອາດໃຊ້ໃນຫຼາຍສະຖານທີ່ (ສະໜາມ, ລານ, ສະຖານທີ່ພັກອາໄສ ຫຼື ເຂດໂຮງງານອຸດສາຫະກຳ).

5169 **ວຽກຕິດຕັ້ງອື່ນໆ**

51691 **ວຽກກໍ່ສ້າງ ຂັ້ນໄດເລື່ອນ ແລະ ລິຟ**

ວຽກກໍ່ສ້າງການຄ້າສະເພາະ ລິຟ ແລະ ຂັ້ນໄດເລື່ອນ ແລະ ທາງຍ່າງເລື່ອນ. ຍັງລວມເອົາວຽກກໍ່ສ້າງການອຸປະກອນໜີໄຟ (ຕົວຢ່າງ ຂັ້ນໄດ).

51699 **ວຽກຕິດຕັ້ງອື່ນໆ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ**

ວຽກກໍ່ສ້າງການຄ້າສະເພາະອື່ນໆ, ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ, ກ່ຽວຂ້ອງກັບສິນຄ້າທີ່ບໍ່ຖືວ່າເປັນສ່ວນໜຶ່ງຂອງໂຄງສ້າງອາຄານພື້ນຖານ (ຕົວຢ່າງ ວຽກຕິດຕັ້ງກັນສາດ, ຜ້າໃບບັງສາດ, ຜ້າມ່ານ).

| 69 | D. ວຽກຕົບແຕ່ງ ແລະ ວຽກເພື່ອສຳເລັດການກໍ່ສ້າງອາຄານ(CPC 517) |
|---|---|

517 **ວຽກຕົບແຕ່ງ ແລະ ວຽກເພື່ອສຳເລັດການກໍ່ສ້າງອາຄານ**

5171 51710 **ວຽກຕິດຕັ້ງ ແກ້ວປ່ອງຢ້ຽມ ແລະ ວຽກການເຄືອບ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະ ແກ້ວ, ຫຸ້ມແກ້ວ, ກະຈົກ ແລະ ຜະລິດຕະພັນແກ້ວອື່ນໆ; ວຽກທີ່ປິດສະຖານທີ່ ເຊັ່ນ ວຽກຕິດຕັ້ງແກ້ວປ່ອງຢ້ຽມ.

5172 51720 **ວຽກໂບກປູນ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະ ໂບກປູນ ຫຼື ປູນປັ້ນ ແລະ ວັດສະດຸໄມ້ແບບ ສຳລັບພາຍໃນແລະພາຍນອກ. ວຽກແຜ່ນ ຝາ (ໄດຣວອລ) ທີ່ກ່ຽວຂ້ອງກັບການຕິດຕັ້ງແຜ່ນຜະໜັງເຊິ່ງໂດຍທົ່ວໄປ ແມ່ນແຜ່ນຢິບຊຳ.

5173 51730 **ວຽກ ການທາສີ**

ວຽກກໍ່ສ້າງການທາສີແລະວຽກກ່ຽວຂ້ອງເພື່ອການຄ້າສະເພາະ ພາຍໃນແລະພາຍນອກອາຄານ, ແລະ ວຽກທາສີໂຄງສ້າງ (ວິສະວະກຳ)ໜັກ, ລວມທັງ ວຽກໜ້າພື້ນຖະໜົນຫົນທາງ ແລະ ວຽກເຮັດເຄື່ອງໝາຍໃນບ່ອນຈອດລົດ.

<u>ບໍ່ລວມ</u>: ວຽກທາສີຫຼັງຄາ ແມ່ນຖືກຈັດໃນລະຫັດຍ່ອຍ 51530 (ການກັນນ້ຳ ແລະ ການມຸງຫຼັງຄາ).

5174 51740 **ວຽກປູກະເບື້ອງຝາແລະພື້ນ**

ວຽກກໍ່ສ້າງການຄ້າສະເພາະ ການວາງ ຫຼື ການຈັດ ແຜ່ນເຄື່ອງດິນເຜົາ, ສີມັງ, ຫຼື ແຜ່ນຫີນຕັດ ຫຼື ກະເບື້ອງປູພື້ນ.

5175 51750 **ວຽກເຈ້ຍຕິດຝາ, ວຽກປົກປິດຝາ, ການວາງພື້ນອື່ນໆ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະ ພົມ, ເສື່ອນ້ຳມັນ, ແຜ່ນອາສຟານ, ການເຮັດໃຫ້ພື້ນມີຄວາມຍືດຍຸ່ນ ແລະ ພື້ນປົກເກົ້ ແລະ ການວາງພື້ນດ້ວຍໄມ້ເນື້ອແຂງອື່ນໆ.

ວຽກເຈ້ຍຕິດຝາ. ວຽກຕົບແຕ່ງທີ່ກ່ຽວຂ້ອງກໍ່ຖືກລວມຢູ່ນີ້.

<u>ບໍ່ລວມ</u>: ວຽກຕິດຕັ້ງພື້ນສີມັງ (ຍົກເວັ້ນ ກະເບື້ອງ) ແມ່ນຖືກຈັດໃນລະຫັດຍ່ອຍ 51540 (ວຽກສີມັງ).

ວຽກຕິດຕັ້ງ ແຜ່ນພື້ນດິນເຜົາ ແລະ ແຜ່ນພື້ນຫີນ ແມ່ນຖືກຈັດໃນລະຫັດຍ່ອຍ 51740 (ວຽກປູກະເບື້ອງຝາແລະພື້ນ).

5176 51760 **ວຽກຊ່າງໄມ້ ແລະ ວຽກງານໄມ້ໂລຫະ ແລະ ໄມ້**

ວຽກກໍ່ສ້າງທາງດ້ານການຄ້າສະເພາະທີ່ກ່ຽວຂ້ອງກັບ ວຽກຊ່າງໄມ້, ການແກ້ໄຂແບບໄມ້ໃນໂຄງການກໍ່ສ້າງ ແລະ ອາຄານ ແລະ ການຕິດຕັ້ງຕູ້ໃນສະຖານທີ່ກໍ່ສ້າງ.

5177 51770 **ວຽກຕົບແຕ່ງຕິດຕັ້ງພາຍໃນ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະ ວຽກຫີນຂັດຄິງທີ່ ແລະ ຫີນອ່ອນພາຍໃນ, ວຽກຫີນສະເຫຼດ (slate) ຫຼື ຫີນແກຣນິດ.

ບໍ່ລວມ: ວຽກຕົບແຕ່ງພາຍນອກ ແມ່ນຖືກຈັດໃນລະຫັດຍ່ອຍ 51560 (ວຽກກໍ່ດິນຈີ່).
ວຽກຕິດຕັ້ງແຜ່ນກະໂລ້ ແມ່ນຖືກຈັດໃນລະຫັດຍ່ອຍ 51740 (ວຽກປູກະເບື້ອງຝາ ແລະ ພື້ນ).

**5178 51780 ວຽກຕິດຕັ້ງເພື່ອການຕົບແຕ່ງ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະ ສ່ວນປະກອບໂລຫະແຜ່ນ ຫຼື ສ່ວນປະກອບໂລຫະແຜ່ນທີ່ສ້າງຂຶ້ນສະເພາະ, ເຫຼັກເພື່ອຕົບແຕ່ງ ຫຼື ວຽກເຫຼັກ, ແລະ ວຽກໂລຫະສະຖາປັດ ຫຼື ວຽກໂລຫະເພື່ອການຕົບແຕ່ງ. ວຽກນີ້ອາດເພື່ອຈຸດປະສົງເຮັດໜ້າທີ່ໃດໜຶ່ງ, ຕົວຢ່າງ ການສ້າງຄວາມຮ້ອນດ້ວຍແຜ່ນ ຫຼື ທໍ່ປັບອາກາດ.

ບໍ່ລວມ: ວຽກຕິດຕັ້ງຫຼັງຄາໂລຫະແຜ່ນ ແມ່ນຖືກຈັດໃນລະຫັດຍ່ອຍ 51530 (ການກັນນ້ຳ ແລະ ການມຸງຫຼັງຄາ).

**5179 51790 ວຽກຕົບແຕ່ງ ແລະ ວຽກເພື່ອສຳເລັດການກໍ່ສ້າງອາຄານອື່ນໆ**

ວຽກຕົບແຕ່ງ ແລະ ວຽກເພື່ອສຳເລັດການກໍ່ສ້າງອາຄານເພື່ອການຄ້າສະເພາະອື່ນໆ, ຕົວຢ່າງ ວຽກທາງສຽງ ທີ່ກ່ຽວຂ້ອງກັບການນຳໃຊ້ ແຜ່ນກັ້ນສຽງ, ກະໂລ້ ແລະ ວັດສະດຸອື່ນໆ ໃສ່ຝາພາຍໃນແລະເພດານ, ແລະວຽກທຳຄວາມສະອາດດິນ ແລະ ຄວັນ ພາຍນອກອາຄານ.

| 70 | E. ອື່ນໆ(CPC 511+515+518) |
|---|---|

**511 ວຽກກ່ອນການສ້າງໃນສະຖານທີ່ກໍ່ສ້າງ**

**5111 51110 ວຽກການກວດສອບສະຖານທີ່**

ວຽກການກວດສອບແນ່ໃສ່ການຄົ້ນຫາສະຖານທີ່ທີ່ເໝາະສົມທີ່ສຸດສຳລັບໂຄງການກໍ່ສ້າງໃດໜຶ່ງ, ວຽກການແບ່ງເຂດ, ເຊັ່ນວ່າ ການແບ່ງເຂດສະຖານທີ່ ໃນໄລຍະທີ່ວຽກກໍ່ສ້າງໄດ້ດຳເນີນໄປໄດ້ໜຶ່ງ ຫຼື ຫຼາຍຂັ້ນຕອນ ຫຼື ຂະບວນການສຳຄັນແລ້ວ.

ບໍ່ລວມ: ວຽກການບໍລິການຂຸດເຈາະທົດສອບ ແມ່ນຖືກຈັດໃນລະຫັດຍ່ອຍ 51130 (ວຽກເກັບກວດ ແລະ ວຽກການສ້າງຕັ້ງ ສະຖານທີ່ເຮັດວຽກ). ການບໍລິການສະຖາປັດ, ວິສະວະກຳ, ການສຳຫຼວດ ແລະ ການເຮັດແຜນທີ່ ແມ່ນຖືກຈັດໃນກຸ່ມ 867 (ການບໍລິການສະຖາປັດ, ວິສະວະກຳ ແລະ ການບໍລິການດ້ານວິຊາການອື່ນໆ).

**5112 51120 ວຽກການມ້າງທຳລາຍ**

ວຽກການມ້າງທຳລາຍອາຄານ, ຖະໜົນຫົນທາງ ແລະ ທາງຫຼວງ ແລະ ໂຄງສ້າງອື່ນ, ແລະ ການຂາຍວັດສະດຸທີ່ໄດ້ມາຈາກຂະບວນການມ້າງທຳລາຍນັ້ນ.

**5113 51130 ວຽກເກັບກວດ ແລະ ວຽກການສ້າງຕັ້ງ ສະຖານທີ່ເຮັດວຽກ**

ວຽກກະກຽມແນ່ໃສ່ເຮັດໃຫ້ສະຖານທີ່ເຮັດວຽກມີຄວາມພ້ອມສຳລັບວຽກກໍ່ສ້າງທີ່ຈະມີຕໍ່ໄປ, ລວມທັງວຽກການລະເບີດ, ວຽກການຂຸດເຈາະທົດສອບ ແລະ ວຽກການໂຍກຍ້າຍຫີນ.

**5114 51140 ວຽກເຄື່ອນຍ້າຍດິນ ແລະ ວຽກການຂຸດຄົ້ນ**

ວຽກການຂຸດຄົ້ນ ແລະ ຂຸດເຈາະ, ວຽກເຄື່ອນຍ້າຍດິນ, ການປັບພື້ນສະຖານທີ່ກໍ່ສ້າງ ແລະ ການຂຸດຂຸມ.

ບໍ່ລວມ: ວຽກການຂຸດຮາກຖານ ແມ່ນຖືກຈັດໃນລະຫັດຍ່ອຍ 51510 (ວຽກຮາກຖານ, ລວມທັງການຝັງເສົາ).

**5115 51150 ວຽກກະກຽມສະຖານທີ່ສຳລັບການຂຸດຄົ້ນບໍ່ແຮ່ (Site preparation work for mining)**

ການເຈາະອຸໂມງ, ການກຳຈັດຫີນ ແລະ ເສດດິນທີ່ປົກປິດສາຍແຮ່, ວຽກການກະກຽມ ແລະ ພັດທະນາສະຖານທີ່ບໍ່ແຮ່, ຍົກເວັ້ນ ສຳລັບການຂຸດຄົ້ນອາຍແກັສ ແລະ ນ້ຳມັນ.

ບໍ່ລວມ: ການບໍລິການກໍ່ສ້າງທີ່ກ່ຽວກັບ ການຂຸດຄົ້ນອາຍແກັສ ແລະ ນ້ຳມັນ ແມ່ນຖືກຈັດໃນລະຫັດຍ່ອຍ 88300 (ການບໍລິການທີ່ກ່ຽວກັບການຂຸດຄົ້ນບໍ່ແຮ່).

**5116 51160 ວຽກເຮັດໂຄງສ້າງເພື່ອສ້ອມແປງ**

ວຽກຕິດຕັ້ງປະກອບ ແລະ ຮື້ມ້າງ ຫຼັກຮ້ານ/ໂຄງສ້າງ.

**515 ວຽກກໍ່ສ້າງທາງດ້ານການຄ້າສະເພາະ**

**5151 51510 ວຽກຮາກຖານ (ລວມທັງການຝັງເສົາ)**

ວຽກຮາກຖານເພື່ອທາງດ້ານການຄ້າສະເພາະ ແລະ ການຝັງເສົາ ແລະ ວຽກທີ່ກ່ຽວຂ້ອງ.

ບໍ່ລວມ: ວຽກການຂຸດຄົ້ນ ແລະ ຂຸດເຈາະ, ວຽກເຄື່ອນຍ້າຍດິນອື່ນໆ ແມ່ນຖືກຈັດໃນລະຫັດຍ່ອຍ 51140.

ວຽກສີມັງ ແມ່ນຖືກຈັດໃນລະຫັດຍ່ອຍ 51540.

ວຽກຮາກຖານກໍ່ດິນຈີ່ ແມ່ນຖືກຈັດໃນລະຫັດຍ່ອຍ 51560 (ວຽກກໍ່ດິນຈີ່).

**5152 51520 ການເຈາະບໍ່ນ້ຳ**

ວຽກກໍ່ສ້າງການຄ້າສະເພາະທີ່ກ່ຽວຂ້ອງກັບ ການເຈາະ ຫຼື ການເຈາະບໍ່ນ້ຳ; ວຽກການຕິດຕັ້ງ ແລະ ສ້ອມແປງຈັກສູບບໍ່ນ້ຳ ແລະ ລະບົບທໍ່ຂອງບໍ່ນ້ຳ.

ບໍ່ລວມ: ວຽກສ້ອມແປງ ແລະ ຕິດຕັ້ງ ລະບົບທໍ່ພາຍໃນອາຄານ ແມ່ນຖືກຈັດໃນລະຫັດຍ່ອຍ 51620 (ວຽກວາງທໍ່ລະບາຍນ້ຳ ແລະ ທໍ່ນ້ຳ).

**5153 51530 ການປ້ອງກັນນ້ຳ ແລະ ການມຸງຫຼັງຄາ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະທີ່ກ່ຽວຂ້ອງກັບ ການຕິດຕັ້ງຫຼັງຄາ, ຮາງລິນ, ວຽກມຸງຫຼັງຄາດ້ວຍໂລຫະ ຫຼື ວັດສະດຸອື່ນ. ວຽກທາສີຫຼັງຄາ. ລວມທັງ ວຽກກັນນ້ຳສຳລັບອາຄານຕ່າງໆ.

**5154 51540 ວຽກຄອນກຣີດ**

ວຽກກໍ່ສ້າງທາງດ້ານການຄ້າສະເພາະທີ່ກ່ຽວຂ້ອງກັບ ຄອນກຣີດ, ການເທ ແລະ ວຽກຄອນກຣີດອື່ນໆ, ລວມທັງ ຄອນກຣີດຈາກປູນຂາວ ແລະ ດິນໜຽວ ແລະ ຢາງອາສຟ້ານ (asphalt), ໃນໂຄງການກໍ່ສ້າງ.

ບໍ່ລວມ: ວຽກກໍ່ສ້າງທີ່ກ່ຽວຂ້ອງກັບ ການເທທາງ, ທາງຫຼວງ, ເສັ້ນທາງ ແລະ ທາງສຳລັບຄົນຍ່າງສາທາລະນະ ແມ່ນຖືກຈັດໃນລະຫັດຍ່ອຍ 51310 (ວຽກກໍ່ສ້າງສຳລັບ ທາງດ່ວນ (ຍົກເວັ້ນ ທາງດ່ວນຍົກລະດັບ), ຖະໜົນຫົນທາງ, ເສັ້ນທາງ, ທາງລົດໄຟ ແລະ ທາງແລ່ນເດີນບິນ).

ວຽກວາງແຫ່ງບູອກ ແມ່ນຖືກຈັດໃນລະຫັດຍ່ອຍ 51560 (ວຽກກໍ່ດິນຈີ່/ດິນບູອກ).

**5155 51550 ການສ້າງ ແລະ ການດັດເຫຼັກ (ລວມທັງການເຊື່ອມໂລຫະ)**

ວຽກກໍ່ສ້າງທາງດ້ານການຄ້າສະເພາະທີ່ກ່ຽວຂ້ອງກັບ ການດັດເຫຼັກ, ວຽກກໍ່ສ້າງເທິງໂຄງສ້າງເຫຼັກ, ວຽກການສ້າງ ອາຄານ ຫຼື ໂຄງສ້າງອື່ນໆ ເຊັ່ນ ຂົວ, ເຄື່ອງຍົກເຄຣນ ຫຼື ຫໍຄອຍສົ່ງສັນຍານໄຟຟ້າ, ແລະ ວຽກເສີມຄວາມແຂງແຮງເຫຼັກ ຈາກ ສ່ວນປະກອບເຫຼັກສຳລັບໂຄງສ້າງທີ່ຊື້ມາ ຫຼື ຜະລິດເອົາເອງ. ວຽກການເຊື່ອມໂລຫະກໍ່ຖືກລວມຢູ່ໃນນີ້.

**5156 51560 ວຽກກໍ່ດິນຈີ່/ດິນປູອກ**

ວຽກກໍ່ສ້າງການຄ້າສະເພາະທີ່ກ່ຽວຂ້ອງກັບ ການວາງກ້ອນດິນຈີ່, ການວາງແຜ່ນປູອກ, ການຈັດກ້ອນຫີນ ແລະ ວຽກກໍ່ດິນຈີ່ອື່ນໆ.

ບໍ່ລວມ: ວຽກຄອນກຣີດ ແມ່ນຖືກຈັດໃນລະຫັດຍ່ອຍ 51540.

ວຽກຕົບແຕ່ງຕິດຕັ້ງພາຍໃນ ແມ່ນຖືກຈັດໃນລະຫັດຍ່ອຍ 51770.

**5159 51590 ວຽກກໍ່ສ້າງການຄ້າສະເພາະອື່ນໆ**

ວຽກກໍ່ສ້າງການຄ້າສະເພາະອື່ນໆ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ, ຕົວຢ່າງ ການເຄື່ອນຍ້າຍເຮືອນ, ການຂຸດຄົ້ນຫຼຸມຝັງສົບ.

**518 ການບໍລິການໃຫ້ເຊົ່າທີ່ກ່ຽວຂ້ອງກັບອຸປະກອນສໍາລັບການກໍ່ສ້າງ ຫຼື ການມ້າງທໍາລາຍ ອາຄານ ຫຼື ວຽກວິສະວະກໍາໂຍທາ, ໂດຍມີຜູ້ຄວບຄຸມ**

**5180 51800 ການບໍລິການໃຫ້ເຊົ່າທີ່ກ່ຽວຂ້ອງກັບອຸປະກອນສໍາລັບການກໍ່ສ້າງ ຫຼື ການມ້າງທໍາລາຍ ອາຄານ ຫຼື ວຽກວິສະວະກໍາໂຍທາ, ໂດຍມີຜູ້ຄວບຄຸມ**

ການບໍລິການໃຫ້ເຊົ່າ ກ່ຽວຂ້ອງກັບອຸປະກອນສໍາລັບການກໍ່ສ້າງ ຫຼື ການມ້າງທໍາລາຍ ໂດຍມີຜູ້ຄວບຄຸມ ແລະ ການບໍລິການປະຕິບັດງານ ທີ່ສະໜອງໂດຍຜູ້ຄວບຄຸມ.

ບໍ່ລວມ: ການບໍລິການໃຫ້ເຊົ່າ ກ່ຽວຂ້ອງກັບອຸປະກອນ ແລະ ເຄື່ອງຈັກສໍາລັບການກໍ່ສ້າງ ໂດຍບໍ່ມີຜູ້ຄວບຄຸມ ແມ່ນຖືກຈັດໃນລະຫັດຍ່ອຍ 83107.

**ການບໍລິການຈັດຈໍາໜ່າຍ**

| 71 | A. ການບໍລິການຕົວແທນນາຍໜ້າ (CPC 621) |
|---|---|

**621 ການບໍລິການຕົວແທນນາຍໜ້າ**

**6211 ການບໍລິການຕົວແທນນາຍໜ້າ**

**62111 ການຂາຍວັດຖຸດິບກະສິກໍາ ແລະ ສັດທີ່ມີຊີວິດ ໂດຍໄດ້ຮັບຄ່າທໍານຽມ ຫຼື ອີງຕາມສັນຍາ**

ບໍລິການຂາຍຍົກວັດຖຸດິບກະສິກໍາ ແລະ ສັດທີ່ມີຊີວິດ ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກໍານົດໄວ້ໃນ CPC/01-03, 291.)

**62112 ການຂາຍຜະລິດຕະພັນອາຫານ, ເຄື່ອງດື່ມ ແລະ ຢາສູບ ໂດຍໄດ້ຮັບຄ່າທໍານຽມ ຫຼື ອີງຕາມສັນຍາ**

ບໍລິການຂາຍຍົກຜະລິດຕະພັນອາຫານ, ເຄື່ອງດື່ມ ແລະ ຢາສູບ ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກໍານົດໄວ້ໃນ CPC 01, 029, 04, 21-25.)

**62113 ການຂາຍນໍ້າມັນ, ໂລຫະ, ແຮ່ທາດ, ໄມ້, ວັດສະດຸກໍ່ສ້າງ ແລະ ທາດເຄມີອຸດສາຫະກໍາ ແລະ ທາດເຄມີເຕັກນິກ ໂດຍໄດ້ຮັບຄ່າທໍານຽມ ຫຼື ອີງຕາມສັນຍາ**

ບໍລິການຂາຍຍົກນໍ້າມັນ, ໂລຫະ, ແຮ່ທາດ, ໄມ້, ວັດສະດຸກໍ່ສ້າງ(ຕົວຢ່າງ ສີແລະສານເຄືອບ, ວັດສະດຸກໍ່ສ້າງຈາກນໍ້າມັນດິນ, ວັດຖຸດິບເຜົາທີ່ໃຊ້ໃນການກໍ່ສ້າງ, ວັດສະດຸກໍ່ສ້າງຈາກແກ້ວ) ແລະ ທາດເຄມີອຸດສາຫະກໍາແລະທາດເຄມີເຕັກນິກ

(ທາດເຄມີອຸດສາຫະກຳພື້ນຖານ, ວັດສະດຸປະລາສຕິກ, ເສັ້ນໃຍສັງເຄາະຍົກເວັ້ນ ແກ້ວ, ຝຸ່ນປຸ໋ຍ ອື່ນໆ) ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 03, 1, 31, 33, 34, 351, 354, 36, 37, 387, 41, 421.)

**62114 <u>ການຂາຍເຄື່ອງຈັກ, ອຸປະກອນອຸດສາຫະກຳ ແລະ ພາຫະນະອື່ນໆນອກເໜືອຈາກພາຫະນະທີ່ໃຊ້ມໍເຕີ, ລົດຈັກ ແລະລົດຖີບ ໂດຍໄດ້ຮັບຄ່າທຳນຽມ ຫຼື ອີງຕາມສັນຍາ</u>**

ບໍລິການຂາຍຍົກເຄື່ອງຈັກ, ອຸປະກອນອຸດສາຫະກຳ ແລະ ພາຫະນະອື່ນໆນອກເໜືອຈາກພາຫະນະທີ່ໃຊ້ມໍເຕີ, ລົດຈັກ ແລະ ລົດຖີບ ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 327, 43-49.)

**62115 <u>ການຂາຍເຄື່ອງເຮືອນ, ສິນຄ້າໃນເຮືອນ, ເຄື່ອງມື ແລະ ອຸປະກອນເຫຼັກທີ່ໃຊ້ໃນເຮືອນ ແລະ ສວນ ໂດຍໄດ້ຮັບຄ່າທຳນຽມ ຫຼື ອີງຕາມສັນຍາ</u>**

ບໍລິການຂາຍຍົກເຄື່ອງເຮືອນ, ສິນຄ້າໃນເຮືອນ (ເຄື່ອງຕົບແຕ່ງເຮືອນ ແລະ ເຄື່ອງໃຊ້ໃນເຮືອນ), ເຄື່ອງມື (ເຄື່ອງຕັດແລະເຄື່ອງມືທົ່ວໄປ) ແລະ ອຸປະກອນເຫຼັກທີ່ໃຊ້ໃນເຮືອນ ແລະ ສວນ ແລະ ເຄື່ອງໄຟຟ້າພາຍໃນ ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 3533, 381, 42, 448,/465.)

**62116 <u>ການຂາຍເຄື່ອງນຸ່ງ, ແຜ່ນແພ, ຖົງຕີນ ແລະ ເກີບ ໂດຍໄດ້ຮັບຄ່າທຳນຽມ ຫຼື ອີງຕາມສັນຍາ</u>**

ບໍລິການຂາຍຍົກເຄື່ອງນຸ່ງ, ແຜ່ນແພ, ຖົງຕີນ ແລະ ເກີບ ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 26-28, 293-296.)

**62117 <u>ການຂາຍຢາປົວພະຍາດ, ອຸປະກອນການແພດ ແລະ ເຄື່ອງສຳອາງ ໂດຍໄດ້ຮັບຄ່າທຳນຽມ ຫຼື ອີງຕາມສັນຍາ</u>**

ບໍລິການຂາຍຍົກຢາປົວພະຍາດ ແລະ ອຸປະກອນການແພດ ແລະ ເຄື່ອງສຳອາງ ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 352, 353, 481.)

**62118 <u>ການຂາຍສິນຄ້າ ໂດຍໄດ້ຮັບຄ່າທຳນຽມ ຫຼື ອີງຕາມສັນຍາ ທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ</u>**

ບໍລິການຂາຍຍົກສິນຄ້າທີ່ບໍ່ໄດ້ຖືກຈັດໄວ້ໃນບ່ອນອື່ນ (ເຊັ່ນ ວັດສະດຸເສດເຫຼືອ, ເຈ້ຍແລະຜະລິດຕະພັນຈາກເຈ້ຍ, ເຄື່ອງກິລາແລະເຄື່ອງສ້າງຄວາມບັນເທີງ, ອຸປະກອນຖ່າຍຮູບ, ເຄື່ອງດົນຕີ, ເຄື່ອງປະດັບ ແລະ ໂມງ) ໂດຍຕົວແທນນາຍໜ້າ, ນາຍໜ້າສິນຄ້າ, ຜູ້ຂາຍຜ່ານການປະມູນ ແລະ ຜູ້ຂາຍຍົກອື່ນໆ ທີ່ເຮັດການຄ້າຂາຍໃນນາມຂອງຜູ້ອື່ນ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 292, 321-326, 382-386, 389, 39, 48.)

| 72 | B. ການບໍລິການການຄ້າຂາຍຍົກ (CPC 622) |
|---|---|

**622 ການບໍລິການການຄ້າຂາຍຍົກ**

**6221 ການບໍລິການການຄ້າຂາຍຍົກວັດຖຸດິບກະສິກຳ ແລະ ສັດທີ່ມີຊີວິດ**

**62211 <u>ການບໍລິການການຄ້າຂາຍຍົກເມັດພືດ, ເມັດພືດນ້ຳມັນ ແລະ ໝາກໄມ້ນ້ຳມັນ, ແກ່ນ ແລະ ອາຫານສັດ</u>**

ການບໍລິການຂາຍຍົກສະເພາະເມັດພືດ, ເມັດພືດນ້ຳມັນແລະໝາກໄມ້ນ້ຳມັນ, ແກ່ນແລະອາຫານສັດ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 011, 014, 015, 019, 218, 233.)

**62212 ການບໍລິການການຄ້າຂາຍຍົກ ດອກໄມ້ ແລະ ຕົ້ນໄມ້**

ການບໍລິການຂາຍຍົກສະເພາະດອກໄມ້ ແລະ ຕົ້ນໄມ້ (ຜະລິດຕະພັນດັ່ງກ່າວ ແມ່ນ ຖືກກຳນົດໄວ້ໃນ CPC 015.)

**6429 64290 ການບໍລິການເສີບອາຫານອື່ນໆ:**

ການກະກຽມອາຫານອື່ນໆ ແລະບໍລິການເສີບ ແລະບໍລິການເຄື່ອງດື່ມທີ່ກ່ຽວຂ້ອງ, ຕົວຢ່າງ: ຮ້ານຂາຍເຄື່ອງດື່ມແບບນ້ອຍໆ.

**643 ການບໍລິການຂາຍເຄື່ອງດື່ມສໍາລັບການບໍລິໂພກໃນສະຖານທີ່ອະນຸຍາດ**

**6431 64310 ການບໍລິການຂາຍເຄື່ອງດື່ມທີ່ບໍ່ມີການບັນເທີງ**

ການບໍລິການຂາຍເຄື່ອງດື່ມ ສ່ວນໃຫຍ່ເປັນເຄື່ອງດື່ມທີ່ມີເຫຼົ້າ ເສີບຢູ່ເຄົາເຕີ້ ແລະ ສະຖານທີ່ທີ່ຄ້າຍຄືກັນໂດຍບໍ່ມີການບັນເທີງ. ໃນນັ້ນລວມມີການບໍລິການເສີບຢູ່ເຄົາເຕີ້ໃນໂຮງແຮມ ຫຼື ສະຖານທີ່ພັກ ຫຼື ຢູ່ໃນສະຖານທີ່ຂົນ ສົ່ງຕ່າງໆ ຕົວຢ່າງ: ໃນລົດໄຟ ຫຼື ເທິງເຮືອ.

ບໍ່ລວມ: ການບໍລິການເສີບອາຫານ ແລະ ເຄື່ອງດື່ມທີ່ຈັດຢູ່ໃນລະຫັດ 64210 (ການບໍລິການເສີບອາຫານທີ່ມີການບໍລິການແບບຮ້ານອາຫານ).

**6432 64320 ການບໍລິການຂາຍເຄື່ອງດື່ມທີ່ມີການບັນເທີງ**

ການບໍລິການຂາຍເຄື່ອງດື່ມ ສ່ວນໃຫຍ່ເປັນເຄື່ອງດື່ມທີ່ມີເຫຼົ້າ ເສີບຢູ່ເຄົາເຕີ້, ຮ້ານບັນເທີງ ແລະ ສະຖານທີ່ທີ່ຄ້າຍຄືກັນໂດຍມີການບັນເທີງ.

ບໍ່ລວມ: ການບໍລິການເສີບອາຫານ ແລະ ເຄື່ອງດື່ມທີ່ຈັດຢູ່ໃນລະຫັດ 64210 (ການບໍລິການເສີບອາຫານທີ່ມີການບໍລິການແບບຮ້ານອາຫານ).

| | |
|---|---|
| 90 | B. ການບໍລິການຕົວແທນທ່ອງທ່ຽວ ແລະ ຈັດທ່ຽວ (CPC 7471) |

**7471 74710 ການບໍລິການຕົວແທນທ່ອງທ່ຽວ ແລະ ຈັດທ່ຽວ**

ການສະໜອງບໍລິການສຳລັບຜູ້ໂດຍສານທີ່ເດີນທາງໂດຍຕົວແທນທ່ອງທ່ຽວ ແລະ ຈັດທ່ຽວ, ແລະ ການບໍລິການທີ່ຄ້າຍຄືກັນ; ຂໍ້ມູນທ່ອງທ່ຽວ, ການບໍລິການໃຫ້ຄຳແນະນຳ ແລະ ວາງແຜນ; ການບໍລິການທີ່ກ່ຽວຂ້ອງກັບການຈັດທ່ຽວ, ທີ່ພັກ, ການຂົນສົ່ງຜູ້ໂດຍສານ ແລະ ກະເປົາເດີນທາງ; ການບໍລິການອອກປີ້ບິນ. ການບໍລິການເຫຼົ່ານີ້ແມ່ນສະໜອງບົນພື້ນຖານຄ່າຕອບແທນ ແລະ ສັນຍາ.

| | |
|---|---|
| 91 | C. ການບໍລິການຜູ້ນຳທ່ຽວ (CPC 7472) |

**7472 74720 ການບໍລິການຜູ້ນຳທ່ຽວ**

ການບໍລິການຜູ້ນຳທ່ຽວໂດຍຕົວແທນຜູ້ນຳທ່ຽວ ແລະ ຜູ້ນຳທ່ຽວທີ່ມີບັນຊີຂອງຕົນເອງ.

ບໍ່ລວມ: ການບໍລິການໂດຍຜູ້ນຳທ່ຽວໃນການລ່າສັດທີ່ມີບັນຊີຂອງຕົນເອງ ທີ່ໄດ້ຈັດໃນລະຫັດ 96419 (ການບໍລິການກິລາອື່ນໆ).

ການບໍລິການຕິດຕາມ ແມ່ນລວມໃນລະຫັດ 97090 (ການບໍລິການອື່ນໆທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ).

| | |
|---|---|
| 92 | D. ອື່ນໆ |

**ການບໍລິການນັນທະນາການ (ການພັກຜ່ອນ), ວັດທະນາທຳ ແລະ ກິລາ (ທີ່ນອກຈາກການບໍລິການພາບແລະສຽງ)**

| | |
|---|---|
| 93 | A. ການບໍລິການບັນເທີງ (ລວມທັງການສະແດງລະຄອນ, ວົງດົນຕີ ແລະ ລະຄອນສັດ)(CPC 9619) |

**9619 ການບໍລິການບັນເທີງອື່ນໆ**

**96191 ການບໍລິການຂອງຜູ້ຜະລິດລະຄອນ, ກຸ່ມນັກຮ້ອງ, ວົງດົນຕີ ແລະ ອໍເຄດຕາ (orchestra).**

ການບໍລິການການສະແດງລະຄອນສົດ, ລວມທັງຄອນເສີດ, ໂອເປລາ ແລະ ການເຕັ້ນ, ບໍ່ວ່າຈະເປັນມືອາຊີບຫຼືນັກສະມັກ ລິ້ນ ແລະ ບໍ່ວ່າຈະເປັນການສ້າງຕັ້ງຂຶ້ນຢູ່ສະຖານທີ່ທ່ອງທ່ຽວດຽວ ຫຼື ຫຼາຍບ່ອນ.

**96192 ການບໍລິການທີ່ສະໜອງໂດຍນັກຂຽນ, ນັກປະພັນເພງ, ນັກແກະສະລັກ, ຜູ້ໃຫ້ຄວາມບັນເທີງ ແລະ ນັກສິລະປິນອື່ນໆ**

**96193 ການບໍລິການເສີມການສະແດງລະຄອນທີ່ບໍ່ໄດ້ລະບຸຢູ່ຂໍ້ອື່ນ**

ການບໍລິການເສີມເພື່ອການບັນເທີງທີ່ບໍ່ໄດ້ລະບຸຢູ່ໃສ ລວມທັງການດຳເນີນຈັດສາກເບື້ອງໜ້າ ແລະ ສາກເບື້ອງຫຼັງ, ອຸປະກອນແສງສີ ແລະ ສຽງ, ບ່ອນຈຳໜ່າຍປີ້, ແລະ ການບໍລິການອອກແບບສາກ ແລະ ແສງ.

**96194 ລະຄອນສັດ, ສວນສະໜຸກ ແລະ ການບໍລິການສະຖານທີ່ທີ່ຄ້າຍຄືກັນ**

**96195 ການບໍລິການຫ້ອງສຳລັບຈັດງານ, ດິສໂກ້ເທັກ, ແລະ ອາຈານສອນເຕັ້ນລຳ**

**96199 ການບໍລິການດ້ານຄວາມບັນເທີງອື່ນໆ ທີ່ບໍ່ໄດ້ລະບຸຢູ່ຂໍ້ອື່ນ**

| | |
|---|---|
| 94 | B. ການບໍລິການຂອງໜ່ວຍງານຂ່າວ (CPC 962) |

**962 ການບໍລິການຂອງໜ່ວຍງານຂ່າວ**

**9621 ການບໍລິການຂອງໜ່ວຍງານຂ່າວໜັງສືພິມ ແລະ ວາລະສານ**

**96211 ບໍລິການສະໜອງຂ່າວເພື່ອຈັດພິມ**

ການບໍລິການເກັບກຳ, ສືບສວນ ແລະ ສະໜອງຂ່າວໃນຮູບແບບໜັງສືຕົ້ນສະບັບເພື່ອຈັດພິມໃຫ້ກັບທຸລະກິດດ້ານສື່ການພິມເຊັ່ນ: ໜັງສືພິມ, ວາລະສານ ແລະ ປຶ້ມ.

**96212 ບໍລິການສະໜອງຮູບພາບ**

ການບໍລິການສະໜອງຮູບພາບຂອງຂ່າວໃຫ້ກັບທຸລະກິດດ້ານສື່ການພິມເຊັ່ນ: ໜັງສືພິມ, ວາລະສານ ແລະ ປຶ້ມ.

**9622 96220 ບໍລິການລາຍງານຂ່າວສານຂອງໜ່ວຍງານຂ່າວໃຫ້ກັບສະຖານີວິທະຍຸ**

ການບໍລິການເກັບກຳ, ສືບສວນ ແລະ ສະໜອງຂ່າວໃຫ້ກັບສະຖານີວິທະຍຸໃນການລາຍງານຂ່າວຫຼືໃນການອອກອາກາດຈາກຈຸດທີ່ແທ້ຈິງຂອງແຫຼ່ງຂ່າວ.

**9623 ການບໍລິການຂອງໜ່ວຍງານຂ່າວໃຫ້ກັບສະຖານີໂທລະພາບ**

**96231 ບໍລິການລາຍງານຂ່າວສານຂອງໜ່ວຍງານຂ່າວໃຫ້ກັບສະຖານີໂທລະພາບ**

ການບໍລິການເກັບກຳ, ສືບສວນ ແລະ ສະໜອງຂ່າວໃນຮູບແບບໜັງສືຕົ້ນສະບັບ, ຂ່າວທີ່ເປັນຮູບພາບ ໃຫ້ກັບສະຖານີໂທລະພາບ.

**96232 ການບໍລິການຂອງໜ່ວຍງານຖ່າຍທອດສົດການລາຍງານໃຫ້ກັບສະຖານີໂທລະພາບ**

ການບໍລິການຂອງໜ່ວຍງານຖ່າຍທອດສົດການລາຍງານຂ່າວທີ່ເປັນຮູບພາບໂດຍການຖ່າຍທອດອອກອາກາດຈາກຈຸດທີ່ແທ້ຈິງຂອງແຫຼ່ງຂ່າວໃຫ້ກັບສະຖານີໂທລະພາບ

**9629 96290 ການບໍລິການຂອງໜ່ວຍງານຂ່າວອື່ນໆ**

ສະໜອງຂ່າວໃນຮູບແບບໜັງສືຕົ້ນສະບັບ, ຂ່າວທີ່ເປັນຮູບພາບ ໃຫ້ກັບທຸລະກິດດ້ານສື່ມວນຊົນອື່ນໆ ເຊັ່ນ: ບໍລິສັດຮູບເງົາ.

| 95 | C. ການບໍລິການຫໍສະມຸດ, ຄັງບັດຄວາມ, ຫໍພິພິດຕະພັນ ແລະ ວັດທະນະທຳອື່ນໆ (CPC 963) |
|---|---|

**963 ການບໍລິການຫໍສະມຸດ, ຄັງບັດຄວາມ, ຫໍພິພິດຕະພັນ ແລະ ວັດທະນະທຳອື່ນໆ**

**9631 ການບໍລິການຫໍສະມຸດ, ຄັງບັດຄວາມ**

**96311 ການບໍລິການຫໍສະມຸດ**

ການບໍລິການຫໍສະມຸດຂອງທຸກປະເພດ. ການບໍລິການເອກະສານຕ່າງໆ, ຕົວຢ່າງ, ການຮວບຮວມ, ການຈັດລາຍການເອກະສານຢ່າງເປັນລະບົບ, ບໍ່ວ່າຈະເປັນເຮັດດ້ວຍມືຫຼືຄອມພິວເຕີຊ່ວຍ ແລະ ການບໍລິການຊອກຄົ້ນເອກະສານ. ການບໍລິການອາດຈະຖືກສະໜອງໃຫ້ແກ່ປະຊາຊົນທົ່ວໄປຫຼືໃຫ້ກັບລູກຄ້າພິເສດ ເຊັ່ນ: ນັກສຶກສາ, ນັກວິທະຍາສາດ, ນາຍຈ້າງ, ສະມາຊິກ ແລະ ອື່ນໆ

**96312 ການບໍລິການຄັງບັດຄວາມ**

ການບໍລິການຂອງຄັງບັດຄວາມ, ການບໍລິການເອກະສານ ຕົວຢ່າງ: ການຮວບຮວມ, ການຈັດລາຍການເອກະສານຢ່າງເປັນລະບົບ, ບໍ່ວ່າຈະເປັນເຮັດດ້ວຍມືຫຼືຄອມພິວເຕີຊ່ວຍ, ການບໍລິການອະນຸລັກ ແລະ ການບໍລິການຊອກຄົ້ນເອກະສານສ່ວນຫຼາຍແມ່ນທາງດ້ານປະຫວັດສາດ ແລະ ວິທະຍາສາດອື່ນໆ

**9632 ການບໍລິການຫໍພິພິດຕະພັນທີ່ລວມທັງການບໍລິການປົກປັກຮັກສາສະຖານທີ່ປະຫວັດສາດ ແລະ ອາຄານຕ່າງໆ**

**96321 ການບໍລິການຫໍພິພິດຕະພັນທີ່ບໍ່ລວມສະຖານທີ່ປະຫວັດສາດ ແລະ ອາຄານຕ່າງໆ**

ການບໍລິການຫໍພິພິດຕະພັນຂອງທຸກປະເພດເຊັ່ນ: ພິພິດຕະພັນສິນລະປະ, ພິພິດຕະພັນເຄື່ອງປະດັບ, ເຄື່ອງເຟີນີເຈີ, ເຄື່ອງນຸ່ງຮົ່ມ, ເຄື່ອງປັ້ນດິນເຜົາ, ເຄື່ອງເງິນ, ແລະ ອື່ນໆ, ພິພິດຕະພັນວິທະຍາສາດ ເຊັ່ນ ທໍລະນີສາດ, ພຶກສາຊາດ, ສັດວິທະຍາ, ມະນຸດວິທະຍາ, ແລະ ອື່ນໆ, ພິພິດຕະພັນເຕັກໂນໂລຊີ ແລະ ທຸກປະເພດຂອງພິພິດຕະພັນພິເສດອື່ນໆ ,

| | | |
|---|---|---|
| | ຍົກເວັ້ນສະຖານທີ່ປະຫວັດສາດ ແລະ ອາຄານຕ່າງໆ. | |
| | **96322** | **ການບໍລິການປົກປັກຮັກສາສະຖານທີ່ປະຫວັດສາດແລະອາຄານຕ່າງໆ** |
| | ການບໍລິການປົກປັກຮັກສາສະຖານທີ່ປະຫວັດສາດແລະອາຄານຕ່າງໆ | |
| **9633** | **ການບໍລິການວັດທະນະທຳອື່ນໆ** | |
| | **96331** | **ການບໍລິການສວນພືກສາຊາດ ແລະ ສວນສັດ** |
| | ບໍລິການສຳລັບການຮັກສາສວນພຶກສາຊາດ ແລະ ສວນສັດ, ຍົກເວັ້ນອະນຸລັກທຳມະຊາດ | |
| | Services for maintaining botanical and zoological gardens, except nature reserves. | |
| | **96332** | **ການບໍລິການອະນຸລັກທຳມະຊາດລວມທັງການບໍລິການປົກປັກຮັກສາສັດປ່າ** |
| 96 | D. ການບໍລິການກິລາ ແລະ ບັນທະນາການ (ການພັກຜ່ອນ) (CPC 964) | |
| **964** | ການບໍລິການກິລາ ແລະ ບັນທະນາການ (ການພັກຜ່ອນ) | |
| **9641** | ການບໍລິການກິລາ | |
| | **96411** | ການບໍລິການສົ່ງເສີມງານກິລາ |
| | **96412** | ການບໍລິການຈັດງານກິລາ |
| | ການບໍລິການຈັດງານກິລາປະເພດຕ່າງໆ ທັງໃນ ແລະ ນອກສະຖານທີ່ສຳລັບນັກກິລາມືອາຊີບ ຫຼື ສະມັກຫຼິ້ນ ການບໍລິການທີ່ກ່າວມານີ້ແມ່ນການບໍລິການທີ່ສະໜອງໂດຍບັນດາສະໂມສອນກິລາ ເຊັ່ນ: ສະໂມສອນເຕາະບານ, ສະໂມສອນໂບລິ້ງ ແລະ ອື່ນໆ. | |
| | **96413** | **ການດຳເນີນການບໍລິການອຳນວຍຄວາມສະດວກດ້ານກິລາ** |
| | ການດຳເນີນການບໍລິການອຳນວຍຄວາມສະດວກຢູ່ໃນການຈັດງານກິລາປະເພດຕ່າງໆທີ່ມີການສະແດງ. ການບໍລິການອາດຈະແມ່ນການບໍລິການສະເພາະດ້ານ ຫຼື ສະໜາມກິລາ, ການບໍລິການຮອບດ້ານ ທີ່ມີ ຫຼື ບໍ່ມີການກຳນົດບ່ອນນັ່ງຊົມ. | |
| | **96419** | **ການບໍລິການກິລາປະເພດຕ່າງໆ** |
| | ການບໍລິການກິລາທີ່ກ່ຽວຂ້ອງກັບການຈັດງານກິລາ ເຊັ່ນ: ກຳມະການຕັດສິນ, ຜູ້ຈັບເວລາ, ແລະ ອື່ນໆ ແລະ ການບໍລິການທີ່ສະໜອງໂດຍໂຮງຮຽນກິລາ ແລະ ເກມ ແລະ ການບໍລິການກິລາປະເພດຕ່າງໆ ທີ່ບໍ່ໄດ້ຈັດປະເພດໄວ້ຢູ່ໃນຂໍ້ອື່ນ. | |
| **9649** | **ການບໍລິການບັນທະນາການ (ການພັກຜ່ອນ) ຕ່າງໆ** | |
| | **96491** | **ການບໍລິການສວນສາທາລະນະ ແລະ ຫາດຊາຍທະເລ ເພື່ອການພັກຜ່ອນ** |
| | **96492** | **ການບໍລິການດ້ານການພະນັນ ແລະ ການຫຼິ້ນການພະນັນ** |
| | **96499** | **ການບໍລິການບັນທະນາການ (ການພັກຜ່ອນ) ອື່ນໆທີ່ບໍ່ໄດ້ຈັດປະເພດໄວ້ຢູ່ໃນຂໍ້ອື່ນ.** |
| 97 | **E. ການບໍລິການບັນທະນາການ, ວັດທະນາທຳ ແລະ ກິລາ ອື່ນໆ.** | |
| | | |
| **ການບໍລິການຂົນສົ່ງ**<br><br>**A. ການບໍລິການຂົນສົ່ງທາງທະເລ** | | |
| 98 | **ການຂົນສົ່ງຜູ້ໂດຍສານ (CPC 7211)** | |

**7211 ການຂົນສົ່ງຜູ້ໂດຍສານ**

**72111 ການຂົນສົ່ງຜູ້ໂດຍສານໂດຍເຮືອຂ້າມຟາກ**

ການຂົນສົ່ງຜູ້ໂດຍສານໂດຍເຮືອຂ້າມທະເລ ຫຼື ຝັ່ງທະເລ, ລວມທັງເຮືອໄວ ແລະ ເຮືອທີ່ມີພື້ນກົງເບັງທີ່ສາມາດແລ່ນເທິງບົກ ແລະ ນ້ຳໄດ້, ບົນພື້ນຖານຕາມຕາຕະລາງ ຫຼື ບໍ່ມີຕາຕະລາງແລ່ນເຮືອກໍຕາມ.

**72119 ການຂົນສົ່ງຜູ້ໂດຍສານອື່ນໆ**

ການຂົນສົ່ງຜູ້ໂດຍສານເທິງທະເລທີ່ສູງ ແລະ ນ້ຳຕາມຝັ່ງທະເລໂດຍເຮືອທາງທະເລ, ບົນພື້ນຖານຕາມຕາຕະລາງ ຫຼື ບໍ່ມີຕາຕະລາງແລ່ນເຮືອກໍຕາມ, ໂດຍບໍ່ກ່ຽວກັບລະດັບຂອງການບໍລິການ, ແລະ ລວມທັງຜູ້ໂດຍສານທີ່ມີກະເປົາເດີນທາງໄປນຳ.

| | |
|---|---|
| 99 | **ການຂົນສົ່ງສິນຄ້າ (CPC 7212)** |

**7212 ການຂົນສົ່ງສິນຄ້າ**

72121 ການຂົນສົ່ງສິນຄ້າແຊ່ແຂງ ຫຼື ໄດ້ຮັບການແຊ່ແຂງ

ການຂົນສົ່ງສິນຄ້າແຊ່ແຂງ ຫຼື ໄດ້ຮັບການແຊ່ແຂງ ໃນຕູ້ແຊ່ສະເພາະ ໂດຍເຮືອທາງທະເລ.

**72122 ການຂົນສົ່ງຂອງເຫຼວຈຳນວນຫຼາຍ ແລະ ອາຍແກັດ**

ການຂົນສົ່ງຂອງເຫຼວ ແລະ ອາຍແກັດ ໃນກຸ່ມເຮືອບັນທຸກນ້ຳມັນທາງທະເລ. ສິ່ງເຫຼົ່ານີ້ອາດໄດ້ຮັບການແຊ່ແຂງ.

**72123 ການຂົນສົ່ງສິນຄ້າທີ່ໄດ້ຮັບການບັນຈຸໃນຕູ້ຄອນເທນເນີ**

ການຂົນສົ່ງຊິ້ນສ່ວນ ແລະ ສິ່ງຂອງທີ່ໄດ້ຮັບການຫຸ້ມຫໍ່ ແລະ ຂົນສົ່ງໃນຕູ້ຄອນເທນເນີທີ່ສ້າງພິເສດເພື່ອການຂົນສົ່ງ ທີ່ອອກແບບໃຫ້ງ່າຍໃນການຍົກຍ້າຍຂົນສົ່ງ ໂດຍເຮືອທາງທະເລ.

**72129 ການຂົນສົ່ງສິນຄ້າອື່ນໆ**

ການຂົນສົ່ງສິນຄ້າ ໂດຍເຮືອທາງທະເລ ທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ.

| | |
|---|---|
| 100 | **ການໃຫ້ເຊົ່າເຮືອພ້ອມດ້ວຍລູກເຮືອ (CPC 7213)** |

**7213 72130 ການບໍລິການໃຫ້ເຊົ່າເຮືອທາງທະເລພ້ອມຜູ້ຂັບເຮືອ**

ການບໍລິການໃຫ້ເຊົ່າ ແລະ ເຊົ່າທຸກປະເພດເຮືອທາງທະເລທີ່ຂັບດ້ວຍຕົນເອງພ້ອມດ້ວຍຜູ້ຂັບເຮືອ, ເຊັ່ນ: ເຮືອຜູ້ໂດຍສານ (ຍົກເວັ້ນເຮືອບັນເທີງ) ເຮືອບັນທຸກນ້ຳມັນ, ກຸ່ມເຮືອບັນທຸກສິນຄ້າແຫ້ງ, ເຮືອບັນທຸກ ແລະ ຂົນສົ່ງສິນຄ້າ, ເຮືອໂຍງ ແລະ ເຮືອຫາປາ.

ບໍ່ລວມ: ການບໍລິການເຊົ່າ ຫຼື ໃຫ້ເຊົ່າເຮືອທີ່ປາສະຈາກຄົນຂັບເຮືອ ທີ່ໄດ້ລະບຸໃນລະຫັດ 83103.

ການບໍລິການເຊົ່າ ຫຼື ໃຫ້ເຊົ່າເຮືອບັນເທີງທາງທະເລ ທີ່ໄດ້ລະບຸໃນລະຫັດ 96499 (ການບໍລິການບັນເທີງອື່ນໆ ທີ່ບໍ່ໄດ້

| | |
|---|---|
| | ລະບຸຢູ່ບ່ອນອື່ນ). |
| **101** | **ການບຳລຸງຮັກສາ ແລະ ສ້ອມແປງເຮືອ (CPC 8868**)** |
| | |
| **102** | **ບໍລິການຍູ້ ແລະ ຂົນຍ້າຍ (CPC 7214)** |

**7214 72140 ບໍລິການຍູ້ ແລະ ຂົນຍ້າຍ**

ບໍລິການຍູ້ ແລະ ຂົນຍ້າຍຢູ່ເທິງໜ້ານໍ້າທະເລເລິກ ແລະ ເທິຊາຍຝັ່ງທະເລ. ການບໍລິການເຫຼົ່ານີ້ໂດຍທົ່ວໄປແມ່ນສະໜອງໂດຍເຮືອທີ່ບໍ່ໄດ້ຂົນສົ່ງສິນຄ້າຫຼືຜູ້ໂດຍສານ. ໃນນີ້ລວມມີການບໍລິການຂົນແທ່ງນໍ້າມັນ, ເຄນທີ່ເລື່ອນໄດ້, ເຮືອທີ່ໃຊ້ຂຸດເຈາະ, ທຸ່ນ (buoys) ແລະ ລຳເຮືອ ແລະ ເຮືອທີ່ຍັງບໍ່ທັນແລ້ວ, ບົນພື້ນຖານຄ່າບໍລິການ ຫຼື ການເຮັດສັນຍາ.
ລວມທັງການບໍລິການຂົນຍ້າຍເຮືອທີ່ເພ.

| | |
|---|---|
| **103** | **ການບໍລິການເສີມການຂົນສົ່ງທາງທະເລ (CPC 745**)** |

**745 ການບໍລິການເສີມການຂົນສົ່ງທາງນໍ້າ**

**7451 74510 ການດຳເນີນການບໍລິການທ່າເຮືອ ແລະ ການບໍລິການທາງນໍ້າ (ບໍ່ລວມການຂົນສົ່ງສິນຄ້າ)**

ການດຳເນີນການບໍລິການທ່າເຮືອ ເຊັ່ນ ທ່າທຽບເຮືອ, ທ່າເຮືອ, ແລະການບໍລິການສິ່ງອຳນວຍຄວາມສະດວກບ່ອນຂຶ້ນເຮືອອື່ນໆທີ່ກ່ຽວຂ້ອງ, ລວມທັງການບໍລິການບ່ອນຂຶ້ນເຮືອສຳລັບຜູ້ໂດຍສານໃນການເຊື່ອມຕໍ່ກັບການຂົນສົ່ງທາງທະເລ, ບົນພື້ນຖານຄ່າບໍລິການຫຼືການເຮັດສັນຍາ, ແລະ ການບໍລິການດຳເນີນການ ແລະ ບຳລຸງຮັກ ສາເຮືອ ແລະ ຄອງ, ແລະ ຄອງລະບາຍນໍ້າ ແລະ ຄອງນໍ້າທະເລທຽມ. ນອກຈາກນີ້ຍັງລວມເຖິງການບໍລິການຂອງລັອກ ແລະ ຍົກເຮືອ, ຝາຍກັ້ນນໍ້າ, ປະຕູນໍ້າ ແລະ ການບໍລິການຂົນຍ້າຍໃນຄອງທີ່ນອກເໜືອຈາກເຮືອລາກແກ່, ຕົວຢ່າງ: ດ້ວຍລົດແຕກເຕີ້ ຫຼື ລົດໄຟຢູ່ແຄມນໍ້າ.

ບໍ່ລວມ: ການບໍລິການຂົນຖ່າຍທີ່ຈັດຢູ່ໃນລະຫັດ 74110 (ການບໍລິການຈັດຕູ້ຄອນເທນເນີ), ສຳລັບການຂົນສົ່ງສິນຄ້າທີ່ບັນຈຸໃນຕູ້ຄອນເທນເນີແມ່ນຈັດຢູ່ໃນລະຫັດ 74190. (ນອກເໜືອຈາກການບໍລິການຂົນສົ່ງສິນຄ້າທົ່ວໄປ, ສຳລັບການຂົນສົ່ງສິນຄ້າທີ່ບໍ່ໄດ້ໃສ່ຕູ້ຄອນເທນເນີ).

ການບໍລິການເກັບຮັກສາຢູ່ທ່າເຮືອ ແລະ ການບໍລິການສາງສິນຄ້າແມ່ນຈັດຢູ່ໃນລະຫັດ 742 (ການບໍລິການເກັບຮັກສາ ແລະ ການບໍລິການສາງສິນຄ້າ).

ການບໍລິການເຮືອລາກແກ່ເຊື່ອມຕໍ່ ແລະ ການບໍລິການຂົນຍ້າຍ ແມ່ນຈັດຢູ່ໃນລະຫັດ 74520 (ການບໍລິການທໍບັງຄັບເຮືອ ແລະ ທຽບທ່າເຮືອ).

**7452 74520** ການບໍລິການທໍບັງຄັບເຮືອ ແລະ ທຽບທ່າເຮືອ

ການບໍລິການເຮືອລາກແກ່ເຊື່ອມຕໍ່ ແລະ ການບໍລິການຂົນຍ້າຍທຸກຊະນິດ ແລະ ການບໍລິການທໍບັງຄັບເຮືອບໍ່ ວ່າຈະເປັນການຈັດເຮືອເຂົ້າ ຫຼື ອອກຈາກທ່າເຮືອ ຫຼື ກວດສອບໄພອັນຕະລາຍອ້ອມໆ.

**7453 74530 ການບໍລິການຊ່ວຍເຫຼືອນຳທາງ**

ການບໍລິການສະໜອງໂດຍທໍສັນຍານໄຟ, ເຮືອທີ່ມີສັນຍານໄຟ, ທຸ່ນ (buoys), ການສ້າງຄອງລະບາຍນໍ້າ ແລະ ການຊ່ວຍເຫຼືອນຳທາງທີ່ຄ້າຍຄື.

**7454 74540 ການບໍລິການກູ້ເຮືອ ແລະ ຍົກຂຶ້ນມາໜ້ານໍ້າ**

ການບໍລິການການກູ້ເຮືອ, ບໍ່ວ່າຈະສະໜອງໃນມະຫາສະໝຸດ ແລະ ນໍ້າທະເລ ແລະ ນ່ານນໍ້າ. ການບໍລິການດັ່ງກ່າວປະກອບດ້ວຍການຟື້ນຟູເຮືອທີ່ເພ ແລະ ເຮືອທີ່ຈົມ ແລະ ສິນຄ້າຂອງເຂົາເຈົ້າ, ລວມທັງການຍົກເຮືອທີ່ຂວ້ານຂຶ້ນ.

ບໍ່ລວມ: ການບໍລິການລາກທີ່ສະໜອງໃຫ້ເຮືອທີ່ເພທີ່ຈັດຢູ່ໃນລະຫັດ 72140 ສຳລັບເຮືອເດີນທະເລ ແລະ ຈັດຢູ່ໃນ

ລະຫັດ 72240 ສຳລັບເຮືອທີ່ບໍ່ແມ່ນເຮືອເດີນທະເລ. ການບໍລິການເຮືອຊູຊີບ, ການບໍລິການເຮືອດັບເພີງ ແລະ ການບໍລິການການຄົ້ນຫາ ແລະ ກູ້ໄພທາງທະເລອື່ນໆ ທີ່ຈັດຢູ່ໃນລະຫັດ 91260 (ລວມທັງການບໍລິການຕຳຫຼວດ ແລະ ປ້ອງກັນໄຟໄຫມ້) ແລະ ລະຫັດ 91290 (ສຳລັບການບໍລິການອື່ນໆທີ່ກ່ຽວກັບການບໍລິການຄວາມປອດໄພເພື່ອປະຊາຊົນ).

**7459 74590 ການບໍລິການສະໜັບສະໜູນອື່ນໆສຳລັບການຂົນສົ່ງນ້ຳ**

ການທຳຄວາມສະອາດ, ຂ້າເຊື້ອ, ອົບຢາ, ຄວບຄຸມສັດຕູພືດ ແລະ ການບໍລິການທີ່ຄ້າຍຄືກັນ ຢູ່ເທິງເຮືອຫຼືບ່ອນຈອດເຮືອບົນພື້ນຖານຄ່າບໍລິການຫຼືການເຮັດສັນຍາ, ການບໍລິການສະໜັບສະໜູນການຂົນສົ່ງທາງນ້ຳທີ່ເຊື່ອມຕໍ່ໂດຍກົງກັບການດຳເນີນງານຂອງເຮືອທີ່ບໍ່ໄດ້ຈັດຢູ່ໃນລະຫັດອື່ນ , ແລະ ການບໍລິການທີ່ບໍ່ໄດ້ເຊື່ອມຕໍ່ກັບການດຳເນີນເຮືອເຊັ່ນ ການບໍລິການເຈາະນ້ຳກ້ອນ, ການບໍລິການຈົດທະບຽນເຮືອ, ການບໍລິການຈັດ ແລະ ການເກັບຮັກສາເຮືອ ແລະ ອື່ນໆ.

ບໍ່ລວມ: ການບໍລິການເຮືອຊູຊີບ, ການບໍລິການເຮືອດັບເພີງ ແລະ ການບໍລິການການຄົ້ນຫາ ແລະ ກູ້ໄພທາງທະເລອື່ນໆ ທີ່ຈັດຢູ່ໃນລະຫັດ 91260 (ລວມທັງການບໍລິການຕຳຫຼວດ ແລະ ປ້ອງກັນໄຟໄຫມ້) ແລະ ລະຫັດ 91290 (ສຳລັບການບໍລິການອື່ນໆທີ່ກ່ຽວກັບການບໍລິການຄວາມປອດໄພເພື່ອປະຊາຊົນ).

B ການຂົນສົ່ງທາງນ້ຳພາຍໃນ

| 104 | **ການຂົນສົ່ງຜູ້ໂດຍສານ (CPC 7221)** |
|---|---|

7221 ການຂົນສົ່ງຜູ້ໂດຍສານ

72211 ການຂົນສົ່ງຜູ້ໂດຍສານດ້ວຍເຮືອຂ້າມຟາກ

ການຂົນສົ່ງຜູ້ໂດຍສານຕາມແມ່ນ້ຳ, ຕາມລຳຄອງ ແລະ ການຂົນສົ່ງຂ້າມຟາກຕາມນ້ຳຈືດອື່ນໆທີ່ບໍ່ອອກສູ່ທະເລ, ເຮືອເບົາຕິດປີກ ແລະ ເຮືອໄວຂະໜາດໃຫຍ່, ບໍ່ວ່າຈະຢູ່ຕາຕະລາງພື້ນຖານ ຫຼື ບໍ່ຢູ່ຕາຕະລາງພື້ນຖານ.

72219 ການຂົນສົ່ງຜູ້ໂດຍສານອື່ນໆ

ການຂົນສົ່ງຜູ້ໂດຍສານທາງແມ່ນ້ຳ, ຕາມລຳຄອງ ແລະ ຕາມແມ່ນ້ຳຈືດອື່ນໆໂດຍເຮືອທຸກປະເພດທີ່ນອກເໜືອຈາກເຮືອຂ້າມຟາກ.

| 105 | **ການຂົນສົ່ງສິນຄ້າ (CPC 7222)** |
|---|---|

7222 ການຂົນສົ່ງສິນຄ້າ

72221 ການຂົນສົ່ງຂອງສິນຄ້າແຊ່ແຂງ ຫຼື ສິນຄ້າໃນຕູ້ເຢັນ

ການຂົນສົ່ງໂດຍເຮືອທີ່ບໍ່ໄດ້ອອກສູ່ທະເລຂອງສິນຄ້າແຊ່ແຂງຫຼືສິນຄ້າໃນຕູ້ເຢັນທີ່ມີການແບ່ງໃນຕູ້ເຢັນສະເພາະ.

72222 ການຂົນສົ່ງຂອງແຫຼວ ຫຼື ກ໊າສ

ການຂົນສົ່ງໂດຍເຮືອທີ່ບໍ່ໄດ້ອອກສູ່ທະເລຂອງປະເພດຂອງແຫຼວ ຫຼື ກ໊າສ ທີ່ຢູ່ໃນເຮືອບັນທຸກພິເສດ. ເຮືອເຫຼົ່ານີ້ອາດຈະເປັນເຮືອແຊ່ເຢັນ.

72229 ການຂົນສົ່ງສິນຄ້າອື່ນໆ

ການຂົນສົ່ງໂດຍເຮືອທີ່ບໍ່ໄດ້ອອກສູ່ທະເລຂອງສິນຄ້າທີ່ບໍ່ໄດ້ແບ່ງຢູ່ໃນປະເພດໃດ.

| 106 | **ການເຊົ່າເຮືອພ້ອມກັບພະນັກງານບໍລິການໃນເຮືອ (CPC 7223)** |
|---|---|

7223 72230 ການບໍລິການໃຫ້ເຊົ່າເຮືອທີ່ບໍ່ໄດ້ອອກສູ່ທະເລພ້ອມດ້ວຍຄົນຂັບ

ການບໍລິການໃຫ້ເຊົ່າ ແລະ ການເຊົ່າ ທຸກປະເພດທີ່ຂັບເຄື່ອນດ້ວຍເອງ, ເຮືອທີ່ບໍ່ໄດ້ອອກສູ່ທະເລກັບຄົນຂັບ, ເຮືອດັ່ງກ່າວເປັນເຮືອໂດຍສານຍົກເວັ້ນເຮືອສຳລານ, ເຮືອຂົນສົ່ງນ້ຳມັນ, ເຮືອຂົນສົ່ງສິນຄ້າແຫ້ງ, ເຮືອສິນຄ້າ ແລະ ເຮືອຂົນສົ່ງສິນຄ້າ, ເຮືອລາກແກ່ ແລະ ເຮືອປະມົງ.

ບໍ່ລວມ: ການບໍລິການການເຊົ່າ ຫຼື ໃຫ້ເຊົ່າທີ່ບໍ່ລວມຄົນຂັບ ທີ່ຈັດຢູ່ໃນລະຫັດ 83103.
ການບໍລິການໃຫ້ເຊົ່າ ຫຼື ການເຊົ່າ ເຮືອສຳລານທີ່ບໍ່ໄດ້ອອກສູ່ທະເລ ທີ່ຈັດຢູ່ໃນລະຫັດ 96499 (ການບໍລິການໃຫ້ຄວາມບັນເທີງ ແລະ ອື່ນໆທີ່ບໍ່ໄດ້ລະບຸຢູ່ໃນລະຫັດອື່ນ).

| 107 | **ການບຳລຸງຮັກສາ ແລະ ສ້ອມແປງເຮືອ (CPC 8868**)** |
|---|---|
| 108 | **ບໍລິການຍູ້ ແລະ ຂົນຍ້າຍ (CPC 7224)** |

**7224 72240** **ບໍລິການຂົນຍ້າຍ ແລະ ຍູ້**

ການໃຫ້ບໍລິການຂົນສິ່ງທາງບັກຕາມລຳນ້ຳຕ່າງໆ ແມ່ນຂຶ້ນກັບການໃຫ້ບໍລິການຂອງເຮືອລາກ. ບໍລິການຕ່າງໆ ລວມມີ ການຂົນສິ່ງເສົາຂຸດເຈາະນ້ຳມັນ, ເສົາເຄນກໍ່ສ້າງ, ເຮືອຂຸດເຈາະ, ລູກລອຍສຳລັບເຮືອ ແລະ ລຳເຮືອ ແລະ ຮ່າງເຮືອທີ່ບໍ່ສົມບູນ, ເຊິ່ງບໍລິການພວກນີ້ ແມ່ນຈະມີການເສຍຄ່າທຳນຽມ ຫຼື ອາດເຮັດເປັນສັນຍາ. ສຳລັບ ທຸກບໍລິການຂົນຍ້າຍທາງເຮືອ ທີ່ບໍ່ແມ່ນທາງທະເລ ກໍ່ຖືກຈັດຢູ່ໃນໝວດນີ້.

| 109 | **ບໍລິການເສີມ ສຳລັບ ການຂົນສິ່ງທາງນ້ຳພາຍໃນ (CPC 745**)** |
|---|---|

**745 ບໍລິການເສີມ ສຳລັບ ການຂົນສິ່ງທາງນ້ຳ**

**7451 74510 ວຽກງານບໍລິການເທິງທ່າເຮືອ ແລະ ທາງນ້ຳ (ບໍ່ລວມ ການຂົນຖ່າຍສິນຄ້າ)**

ວຽກງານບໍລິການເທິງທ່າເຮືອ ເຊັ່ນ: ໜ້ານ້ຳ, ບ່ອນຈອດເຮືອ, ທາງຍ່າງ, ທາງຂົນສິ່ງ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ສຳລັບທ່າເຮືອ ເຊັ່ນ: ບໍລິການຫ້ອງຜູ້ໂດຍສານ, ທີ່ກ່ຽວພັນກັບການຂົນສິ່ງທາງນ້ຳ ພາຍໃຕ້ຄ່າທຳນຽມ ຫຼື ແບບສັນຍາ, ໂດຍຍັງລວມເອົາ ການປະຕິບັດງານ ແລະ ບຳລຸງຮັກສາ ເຮືອບໍລິການ, ບັກ ແລະ ທາງນ້ຳ, ສຳລັບແມ່ນ້ຳ ຫຼື ຄອງເໝືອງຕ່າງໆ ທີ່ສ້າງຂຶ້ນ. ນອກນັ້ນ ຍັງລວມມີ ບໍລິການລ໋ອກເຮືອ, ຍົກເຮືອ, , ກັນເຈື່ອນ ແລະ ບໍລິການຍ້າຍເຮືອຕາມລຳນ້ຳແບບອື່ນນອກເໜືອຈາກດ້ວຍເຮືອລາກ ເຊັ່ນ: ດ້ວຍລົດລາກ (ລົດຕໍ່ອກຕໍ່ອກ) ຫຼື ດ້ວຍຫົວລົດໄຟ ຕາມແຄມນ້ຳ.

**ບໍ່ລວມ**: ສຳລັບບໍລິການ ແຮງງານຂົນຍ້າຍສິນຄ້າ, ຖ້າເປັນກໍລະນີ ການຂົນສິ່ງດ້ວຍຕູ້ຄອນເທນເນີ ແມ່ນຖືກຈັດຢູ່ໃນ ໝວດ 74110 (ບໍລິການຕູ້ຄອນເທນເນີ), ຖ້າບໍ່ແມ່ນ ຂົນສິ່ງດ້ວຍຕູ້ຄອນເທນເນີ ແມ່ນຈະຖືກຈັດຢູ່ໃນ ໝວດ 74190.

ສຳລັບ ບໍລິການສາງເກັບເຄື່ອງໃນທ່າເຮືອ ແລະ ຄັງສິນຄ້າ ແມ່ນຖືກຈັດໃນ ກຸ່ມ 742 (ບໍລິການສາງເກັບເຄື່ອງ ແລະ ຄັງສິນຄ້າ)

ສຳລັບບໍລິການຈອດເຮືອດ້ວຍເຮືອລາກ ແລະ ການຂົນຍ້າຍ ແມ່ນຈັດໃນ ໝວດ /74520 (ບໍລິການທາງເຮືອ ແລະ ຈອດເຮືອ)

**7452 74520** **ບໍລິການນຳທາງເຮືອ ແລະ ຈອດເຮືອ**

ບໍລິການເຮືອລາກ ທີ່ກ່ຽວພັນກັບການທຽບທ່າ ແລະ ປ່ອຍເຮືອ ທຸກໆປະເພດ, ແລະ ບໍລິການນຳທາງເຮືອ ເຊິ່ງລວມມີ ບໍລິການນຳທາງເຮືອ ເຂົ້າ-ອອກ ທ່າເຮືອ ຫຼື ນຳທາງເຮືອຫຼີກເວັ້ນຈຸດອັນຕະລາຍ.

**7453 74530 ບໍລິການ ອຳນວຍຄວາມສະດວກໃນການນຳທາງ**

ແມ່ນທຸກໆບໍລິການຂອງ ທໍຄອຍໄຟນຳທາງ, ກຳປັ່ນເບີອງໄຟ, ເຮືອເບີອງໄຟ, ລູກລອຍບອກທາງ, ເຄື່ອງໝາຍບອກຊ່ອງທາງ, ແລະ ສິ່ງອຳນວຍຄວາມສະດວກອື່ນໆ ສຳລັບການນຳທາງ.

**7454 74540 ບໍລິການກູ້ເຮືອ ແລະ ດຶງເຮືອຄ້າງໂຄກລີງນໍ້າ**

ແມ່ນບໍລິການກູ້ເຮືອ ເຊິ່ງລວມທັງໃນມະຫາສະມຸດ ແລະ ຕາມແຄມຝັ່ງ ຫຼື ຕາມແມ່ນໍ້າຕ່າງໆ. ບໍລິການດັ່ງກ່າວ ປະກອບມີ ການກູ້ເຮືອຫຼົ້ມ ແລະ ເຮືອຈົມ ແລະ ສິນຄ້າທີ່ບັນທຸກມາ, ເຊິ່ງລວມເອົາ ຍົກເຮືອທີ່ຈົມ, ການປິ້ນເຮືອຂື້ນ ແລະ ການດຶງເຮືອຄ້າງໂຄກລີງນໍ້າ.

<u>**ບໍ່ລວມ**</u>: ບໍລິການຍົກຍ້າຍ ສາລັບເຮືອຫຼົ້ມ ແມ່ນຈະຖືກຈັດໃນ ໝວດ 72140 ຖ້າແມ່ນເຮືອທະເລ, ແຕ່ຖ້າແມ່ນບໍ່ແມ່ນເຮືອທະເລ ແມ່ນຈະຈັດໃນ ໝວດ 72240.

ບໍລິການເຮືອກູ້ຊີບ, ບໍລິການເຮືອດັບເພີງ ແລະ ບໍລິການຄົ້ນຫາທາງທະເລ ແລະ ກູ້ໄພ ແມ່ນຈະຈັດໃນ ໝວດ 91260 (ບໍລິການ ປ້ອງກັນຄວາມສະຫງົບ ແລະ ປ້ອງກັນອັກຄີໄພ) ແລະ ໝວດ 91290 (ບໍລິການດ້ານສັງຄົມອື່ນໆ ແລະ ບໍລິການທີ່ກ່ຽວຂ້ອງກັບຄວາມປອດໄພ).

**7459 74590 ບໍລິການອື່ນໆສຳລັບການຂົນສົ່ງທາງນໍ້າ**

ແມ່ນບໍລິການອະນາໄມ, ຂ້າເຊື້ອ, ການພົ່ນ/ສີດຢາຂ້າເຊື້ອ, ການຄວບຄຸມສັດທີ່ນຳພາເຊື້ອໂລກ ແລະ ບໍລິການອື່ນໆທີ່ກ່ຽວຂ້ອງ, ບໍ່ວ່າຈະເປັນເຮືອທີ່ຈອດຢູ່ແຄມທ່າ ຫຼື ຈອດຢູ່ກາງນໍ້າ, ເປັນແບບສັນຍາຮັບເໝົາ ຫຼື ຈ່າຍຄ່າທຳນຽມໃນແຕ່ລະຄັ້ງ, ເປັນບໍລິການຂົນສົ່ງທາງນໍ້າ ທີ່ກ່ຽວຂ້ອງໂດຍກົງກັບ ການປະຕິບັດວຽກເທິງເຮືອ ທີ່ບໍ່ໄດ້ຈັດເຂົ້າໃນໝວດອື່ນໃດ, ແລະ ບໍ່ກ່ຽວຂ້ອງໂດຍກົງກັບການປະຕິບັດວຽກເທິງເຮືອ ເຊັ່ນ: ເຮືອທຸບນໍ້າກ້ອນ, ການຈົດທະບຽນເຮືອ, ການຝາກເຮືອ ແລະ ສາງເກັບເຄື່ອງ, ໆລໆ.

<u>**ບໍ່ລວມ**</u>: ບໍລິການເຮືອກູ້ຊີບ, ບໍລິການເຮືອດັບເພີງ ແລະ ບໍລິການຄົ້ນຫາທາງທະເລ ແລະ ກູ້ໄພ ແມ່ນຈະຈັດໃນ ໝວດ 91260 (ບໍລິການ ປ້ອງກັນຄວາມສະຫງົບ ແລະ ປ້ອງກັນອັກຄີໄພ) ແລະ ໝວດ 91290 (ບໍລິການດ້ານສັງຄົມອື່ນໆ ແລະ ບໍລິການທີ່ກ່ຽວຂ້ອງກັບຄວາມປອດໄພ).

| 110 | D. ການຂົນສົ່ງເທິງອາວະກາດ (CPC 733) |
|---|---|

**733 ການຂົນສົ່ງຜ່ານທາງອາວະກາດ**

**7330 73300 ການຂົນສົ່ງຜ່ານທາງອາວະກາດ**

ການຂົນສົ່ງຜູ້ໂດຍສານ ຫຼື ສິນຄ້າຜ່ານທາງອາວະກາດ.

**E. ບໍລິການຂົນສົ່ງເທິງລາງ**

| 111 | ການຂົນສົ່ງຜູ້ໂດຍສານ (CPC 7111) |
|---|---|

**7111 ການຂົນສົ່ງຜູ້ໂດຍສານ**

| | |
|---|---|
| | **71111 ການຂົນສົ່ງຜູ້ໂດຍສານລະຫວ່າງຕົວເມືອງ**<br><br>ການຂົນສົ່ງຜູ້ໂດຍສານລະຫວ່າງຕົວເມືອງ ແມ່ນການຂົນສົ່ງໂດຍທາງລົດໄຟ, ໂດຍບໍ່ຄານຶງເຖິງໄລຍະທາງ ຫຼື ຊັ້ນທີ່ນັ່ງ.<br><br>**71112 ການຂົນສົ່ງຜູ້ໂດຍສານລະຫວ່າງຕົວເມືອງ ແລະ ເຂດຊານເມືອງ**<br><br>ການຂົນສົ່ງຜູ້ໂດຍສານໃນຕົວເມືອງ ແລະ ເຂດຊານເມືອງໂດຍທາງລົດໄຟ. ການຈະລາຈອນໃນຕົວເມືອງແມ່ນການຈະລາຈອນຈາກຈຸດເລີ່ມຕົ້ນ ແລະ ຈຸດປາຍທາງທີ່ຢູ່ພາຍໃນຊາຍແດນຂອງໜ່ວຍບໍລິການໃນຕົວເມືອງດຽວກັນ; ແລະ ການຈະລາຈອນໂດຍສານໃນເຂດຊານເມືອງ ແມ່ນການຈະລາຈອນພາຍໃນເຂດພື້ນທີ່ເຂດເມືອງກວ້າງຂຶ້ນລວມທັງຕົວເມືອງທີ່ໃກ້ຄຽງ. ລວມໃນນີ້ ແມ່ນມີການບໍລິການທີ່ສະໜອງໂດຍລົດໄຟຂົນສົ່ງມວນຊົນໃນຕົວເມືອງ (ລົດໄຟໃຕ້ດິນ ຫຼື ລົດໄຟລອຍຟ້າ). |
| 112 | ການຂົນສົ່ງສິນຄ້າ (CPC 7112) |
| 7112 | ການຂົນສົ່ງສິນຄ້າ<br>71121 ການຂົນສົ່ງຂອງສິນຄ້າແຊ່ແຂງ ຫຼື ສິນຄ້າໃນຕູ້ເຢັນ<br><br>ການຂົນສົ່ງໂດຍທາງລົດໄຟສຳລັບສິນຄ້າແຊ່ແຂງ ຫຼື ສິນຄ້າໃນຕູ້ເຢັນ ຕົວຢ່າງ ຜະລິດຕະພັນສະບຽງອາຫານເນົ່າເປື່ອຍງ່າຍທີ່ຢູ່ໃນລົດຕູ້ແຊ່ເຢັນສະເພາະ.<br>71122 ການຂົນສົ່ງຂອງແຫຼວ ຫຼື ແກສ<br><br>ການຂົນສົ່ງທາງລົດໄຟສຳລັບປະເພດຂອງແຫຼວ ຫຼື ແກສ ທີ່ຢູ່ໃນຕູ້ບັນທຸກພິເສດ. ລົດເຫຼົ່ານີ້ອາດຈະເປັນຕູ້ແຊ່ເຢັນ.<br>**71123 ການຂົນສົ່ງຕູ້ຄອນເທນເນີ້**<br><br>ການຂົນສົ່ງທາງລົດໄຟສຳລັບສິ່ງຂອງ ແລະ ພັດສະດຸຕ່າງໆຂອງສ່ວນບຸກຄົນ ທີ່ຫຸ້ມຫໍ່ ແລະ ບັນຈຸໃນຕູ້ຄອນເທນເນີ້ເພື່ອຂົນຍ້າຍພິເສດທີ່ຖືກອອກແບບສຳລັບຄວາມງ່າຍຂອງການຈັດການໃນການຂົນສົ່ງ.<br><br>**71124 ການຂົນສົ່ງຈົດໝາຍ**<br><br>ການຂົນສົ່ງຈົດໝາຍທາງລົດໄຟໃນບັນຊີຂອງອົງການໄປສະນີແຫ່ງຊາດ ແລະ ຕ່າງປະເທດ.<br><br>71129 ການຂົນສົ່ງສິນຄ້າອື່ນໆ<br><br>ການຂົນສົ່ງທາງລົດໄຟສຳລັບສິນຄ້າທີ່ບໍ່ໄດ້ຈັດຢູ່ໃນບ່ອນອື່ນໃດ. |
| 113 | **ບໍລິການຍູ້ ແລະ ຂົນຍ້າຍ** Pushing and towing services (CPC 7113) |
| 7113 | 71130 **ບໍລິການຍູ້ ແລະ ຂົນຍ້າຍ**<br><br>ບໍລິການຍູ້ ແລະ ຂົນຍ້າຍທາງລົດໄຟ, ບົນພື້ນຖານຄ່າບໍລິການຫຼືການເຮັດສັນຍາ, ຕົວຢ່າງ ການເຄື່ອນຍ້າຍຂອງລົດບັນທຸກລະຫວ່າງເດີ່ນຂອງສະຖານີ, ລາງລົດໄຟ, ແລະ ອື່ນໆ |
| 114 | ການບຳລຸງຮັກສາແລະສ້ອມແປງອຸປະກອນການຂົນສົ່ງທາງລົດໄຟ Maintenance and repair of rail transport |

| | equipment (CPC 8868**) |
|---|---|

**ພາກທີ 88 ບໍລິການດ້ານ ກະສິກຳ, ບໍ່ແຮ່ ແລະ ການຜະລິດ**

ແມ່ນການບໍລິການ ແບບເກັບຄ່າທຳນຽມ ຫຼື ໂດຍມີສັນຍາ ຕາມຫົວໜ່ວຍການຜະລິດຂອງສິນຄ້າ ທີ່ສາມາດຂົນສົ່ງໄດ້, ແລະ ບໍລິການທີ່ກ່ຽວຂ້ອງກັບ ການຜະລິດສິນຄ້ານັ້ນໆ.

ການບໍລິການ ຈຳນວນຫຼາຍ ແລະ ຫຼາຍຮູບແບບ ແມ່ນໄດ້ຖືກຈັດແບ່ງ ໂດຍອີງຕາມ ປະເພດອຸດສະຫະກຳ ດັ່ງລຸ່ມນີ້:

**<u>ບໍລິການທີ່ກ່ຽວຂ້ອງກັບ ການກະສິກຳ, ລ່າສັດ, ປ່າໄມ້ ແລະ ປະມົງ:</u>**

ແມ່ນບັນດາບໍລິການ ແບບເກັບຄ່າທຳນຽມ ຫຼື ໂດຍ ມີສັນຍາ, ເຊິ່ງສ່ວນໃຫຍ່ ແມ່ນດຳເນີນການຢູ່ສະຖານທີ່ຂອງການຜະລິດກະສິກຳນັ້ນໆ, ຕ.ຢ. ບໍລິການສະໜອງເຄື່ອງ ຈັກດ້ານກະສິກຳ ແບບມີຄົນບັງຄັບ ແລະ ນາຍຊ່າງ; ການເກັບກ່ຽວ ແລະ ບໍລິການກ່ຽວຂ້ອງ; ບໍລິການຈັດຫາແຮງງານ ຜະລິດກະສິກຳ; ບໍລິການ ຮັບຝາກສັດ, ເບິ່ງແຍງ ແລະ ປະສົມພັນ ສັດ; ບໍລິການສຳລັບສິ່ງເສີມ ການຂະຫຍາຍພັນ, ການເຕີບໂຕ ແລະ ສົ່ງອອກ ສັດ; ບໍລິການສຳລັບສິ່ງເສີມການລ່າສັດ ແລະ ການວາງກັບດັກ ເພື່ອເປັນສິນຄ້າ; ບໍລິການ ກວດກາ ແລະ ປະເມີນໄມ້ທ່ອນ, ດັບເພີງ, ການບໍລິຫານຈັດການ ປ່າໄມ້ ໂດຍລວມເອົາການ ປະເມີນ ແລະ ກວດກາ ການທຳລາຍປ່າໄມ້; ບໍລິການກ່ຽວກັບການຄ້າໄມ້; ບໍລິການກ່ຽວຂ້ອງກັບ ການປະມົງ ແລະ ບໍລິການ ໂຮງເພາະພັນປາ ແລະ ຟາມປາ.

**<u>ບໍລິການທີ່ກ່ຽວຂ້ອງກັບການຂຸດຄົ້ນບໍ່ແຮ່:</u>**

ແມ່ນບັນດາບໍລິການ ແບບເກັບຄ່າທຳນຽມ ຫຼື ໂດຍມີສັນຍາ ໃນຂົງເຂດນ້ຳ ມັນເຊື້ອໄຟ ແລະ ກ໊າດ, ເຊັ່ນ: ບໍລິການຂຸດເຈາະ, ການກໍ່ສ້າງປັ້ນຈັ່ນຂຸດເຈາະ, ບໍລິການ ສ້ອມແປງ ແລະ ມ້າງ, ບໍລິການ ເທເບຕົງໃສ່ບໍ່ນ້ຳມັນ ຫຼື ບໍ່ກ໊າດ.

<u>ບໍ່ລວມ</u>: ບໍລິການກວດຫາແຮ່ທາດ, ບໍລິການກວດການ້ຳມັນ ແລະ ກ໊າດ, ແລະ ບໍລິການສຳຫຼວດດ້ານທໍລະນີຟີຊິກ (ເຊັ່ນ: ແຜ່ນດິນໄຫວ) ແລະ ດ້ານທໍລະນີສາດ ແມ່ນຖືກຈັດໃນລະຫັດ 8675 (ບໍລິການ ທີ່ປຶກສາ ວິທະຍາສາດ ແລະ ເຕັກນິກໃນຂົງເຂດວິສະວະກຳ).

**<u>ບໍລິການທີ່ກ່ຽວຂ້ອງກັບການຜະລິດ:</u>**

ເຊິ່ງລວມເອົາ ການຜະລິດ ແບບເສຍຄ່າບໍລິການ ຫຼື ຕາມສັນຍາ, ເຊັ່ນ: ບໍລິການ ດ້ານການຜະລິດ ທີ່ມອບເໝົາໃຫ້ພາກສ່ວນອື່ນ ເຊິ່ງຂະບວນການຕ່າງໆໃນການປຸງແຕ່ງວັດຖຸດິບ ແມ່ນບໍ່ຂຶ້ນກັບເຈົ້າຂອງ ໂຮງງານ. ບໍລິການປະກອບ, ຕິດຕັ້ງທີ່ນອກເໜືອຈາກ ວຽກການກໍ່ສ້າງ, ການວັດແທກຊິ້ນສ່ວນ, ການບຳລຸງຮັກສາ ແລະ ການສ້ອມແປງແມ່ນຖືກຈັດໃນລະຫັດນີ້.

**ຕໍ່ໄປນີ້ ແມ່ນຕົວຢ່າງ ບໍລິການກ່ຽວກັບການຜະລິດ:**

- ບໍລິການ ແບບເກັບຄ່າທຳນຽມ ຫຼື ໂດຍມີສັນຍາ ທີ່ກ່ຽວຂ້ອງກັບປຸງແຕ່ງ ແລະ ເກັບຮັກສາ ຊີ້ນ, ປາ, ໝາກໄມ້, ຜັກ, ຜະລິດຕະພັນນົມ ແລະ ຜະລິດຕະພັນເຂົ້າໜົມປັງ;
- ບໍລິການ ແບບເກັບຄ່າທຳນຽມ ຫຼື ໂດຍມີສັນຍາ ທີ່ກ່ຽວຂ້ອງກັບການແປຮູບ ແລະ ການຜະລິດອຸປະກອນແຜ່ນແພ (ເຊັ່ນ: ບໍລິການກ່ຽວກັບຮູບແບບຂອງການປະກອບການ, ຕ.ຢ. ການອອກແບບ ແລະ ກະກຽມສິນຄ້າຕົວຢ່າງ); ບໍລິການກ່ຽວກັບການເຮັດສີ ແລະ ຕົບແຕ່ງ ຜະລິດຕະພັນໜັງ ແລະ ການຜະລິດ ສິນຄ້າປະເພດໜັງ ແລະ ເກີບ;
- ບໍລິການຈັດພິມ ແບບເກັບຄ່າທຳນຽມ ຫຼື ໂດຍມີສັນຍາ ແລະ ບໍລິການອື່ນທີ່ກ່ຽວຂ້ອງກັບການຈັດພິມ, ເຊັ່ນ: ການໃສ່ຢ່ອງປຶ້ມ;
- ບໍລິການ ຫຼໍ່, ຫຼອມ ແລະ ຕີ ໂລຫະ ແລະ ບໍລິການເຄືອບໂລຫະ; ບໍລິການດ້ານວິສະວະກຳກົນຈັກທົ່ວໄປ ແບບເກັບຄ່າທຳນຽມ ຫຼື ໂດຍມີສັນຍາ; ບໍລິການສ້ອມແປງທີ່ກ່ຽວຂ້ອງກັບ ຜະລິດຕະພັນໂລຫະ, ກົນຈັກ ແລະ ອຸປະກອນ.

<u>ບໍ່ລວມ</u>: ວຽກງານການຕິດຕັ້ງຕ່າງໆໃນວຽກງານກໍ່ສ້າງ ແມ່ນຖືກຈັດໃນ ລະຫັດ 516. ບໍລິການສ້ອມແປງ ສຳລັບຍົນ, ລົດຈັກ, ແລະ ອຸປະກອນຄົວເຮືອນ, ອຸປະກອນທົ່ວໄປ, ສິນຄ້າຕົບແຕ່ງ ແລະ ສິນຄ້າບໍລິໂພກອື່ນໆ ແມ່ນຖືກຈັດໃນ

ລະຫັດ 61120 ແລະ 61220 ແລະ ໃນ ລະຫັດ 633 (ບໍລິການສ້ອມແປງສໍາລັບອຸປະກອນສ່ວນຕົວ ແລະ ອຸປະກອນຄົວເຮືອນ). ສໍາລັບ ບໍລິການ ທີ່ປະກອບດ້ວຍພຽງແຕ່ ການບັນຈຸຂວດ ແລະ ຕຶດກາ ສໍາເຫຼົ້າ, ວາຍ ແລະ ນໍ້າ ຖ້າຊື້ຂາຍແບບສົ່ງ ແມ່ນຖືກຈັດໃນ ລະຫັດ 62226 (ບໍລິການການຄ້າສົ່ງເຄື່ອງດື່ມ), ແຕ່ຖ້າຊື້ຂາຍຍ່ອຍແບບເກັບຄ່າທໍານຽມ ຫຼື ຕາມສັນຍາ ແມ່ນຈະຖືກຈັດໃນ ລະຫັດ 87600 (ບໍລິການບັນຈຸກ່ອງ).

ການບໍລິການດ້ານການບໍາລຸງຮັກສາ ແລະ ສ້ອມແປງ ເຄື່ອງຈັກ ແລະ ອຸປະກອນເຄື່ອງຈັກຮັບໃຊ້ໃນຫ້ອງການ ແມ່ນໄດ້ກໍານົດຢູ່ໃນຂະແໜງຍ່ອຍລະຫັດ 84500

**ບໍລິການທີ່ກ່ຽວຂ້ອງກັບການຂົນສົ່ງພະລັງງານ:**

ບໍລິການ ຂົນສົ່ງ ແບບເກັບຄ່າທໍານຽມ ຫຼື ໂດຍມີສັນຍາ ສໍາລັບ ໄຟຟ້າ, ແກສເຊື້ອໄຟ ແລະ ນໍ້າຮ້ອນ ຫາບ້ານເຮືອນ, ໂຮງງານອຸດສະຫະກໍາ, ບໍລິສັດ ແລະ ຜູ້ຊົມໃຊ້ອື່ນໆ.

ບໍ່ລວມ: ບໍລິການຂົນສົ່ງຜ່ານທໍ່ ແບບເກັບຄ່າທໍານຽມ ຫຼື ໂດຍມີສັນຍາ ສໍາລັບ ນໍ້າມັນເຊື້ອໄຟ ແລະ ກ໊າດທໍາມະຊາດ ແມ່ນຈັດໃນ ລະຫັດ 71310.

| 115 | **ການບໍລິການເພື່ອສະໜັບສະໜູນການບໍລິການຂົນສົ່ງທາງລົດໄຟ (CPC 743)** |
|---|---|

**743 ການບໍລິການເພື່ອສະໜັບສະໜູນການບໍລິການຂົນສົ່ງທາງລົດໄຟ**

**7430 74300 ການບໍລິການເສີມສໍາລັບການຂົນສົ່ງທາງລົດໄຟ**

ການບໍລິການສະຖານີລົດໄຟສາລັບຜູ້ໂດຍສານ, ທີ່ບໍ່ລວມເອົາການຂົນສົ່ງສິນຄ້າ ແລະ ການບໍລິການເສີມສໍາລັບການຂົນສົ່ງທາງລົດໄຟ, ທີ່ບໍ່ໄດ້ຈັດປະເພດຢູ່ບ່ອນອື່ນ.

ບໍ່ລວມ: ບໍລິການຍ່ອຍທີ່ຖືກຈັດຢູ່ໃນລະຫັດ 71130 (ບໍລິການຍູ້ ແລະ ຂົນຍ້າຍ).

ບໍລິການຂົນສົ່ງສິນຄ້າທາງລົດໄຟທີ່ຈັດຢູ່ໃນລະຫັດ 74110 (ການບໍລິການຈັດຕູ້ຄອນເທນເນີ້) ສໍາລັບການຂົນສົ່ງສິນຄ້າເຂົ້າຕູ້. ແລະ ລະຫັດ 74190 (ການບໍລິການຈັດການຂົນສົ່ງສິນຄ້າທົ່ວໄປ) ສໍາລັບການຂົນສົ່ງສິນຄ້າບໍ່ເຂົ້າຕູ້ ຫຼື ກະເປົ໋າຂອງຜູ້ໂດຍສານ.

**F. ບໍລິການເທິງທ້ອງຖະໜົນ**

| 116 | **ພາຫະນະຂົນສົ່ງຜູ້ໂດຍສານ (CPC 7121+7122)** |
|---|---|

**7121 ພາຫະນະຂົນສົ່ງຜູ້ໂດຍສານຕາມຕາຕະລາງ**

**71211 ການຂົນສົ່ງ ຕາມເຂດຕົວເມືອງ ແລະ ເຂດຊານເມືອງ ແບບປົກກະຕິ**

ແມ່ນພາຫະນະຂົນສົ່ງຜູ້ໂດຍສານ ຕາມເຂດຕົວເມືອງ ແລະ ເຂດຊານເມືອງ ທີ່ຈອດຕາມປ້າຍເປັນປົກກະຕິ ຕາມຕາຕະລາງເວລາ ເທິງທາງຫຼວງແຫ່ງຊາດ ແລະ ໃນແບບອື່ນໆຂອງການຂົນສົ່ງທາງບົກ. ບໍລິການຕ່າງໆ ໃນນີ້ ແມ່ນໝາຍເຖິງ ລົດເມ, ລົດລາງ (tramway), ລົດເມໄຟຟ້າ ແລະ ບໍລິການກ່ຽວຂ້ອງອື່ນໆ, ແລະ ຈະໃຫ້ບໍລິການໃນຮູບແບບສາປະທານ ພາຍໃນຂອບເຂດຂອງຕົວເມືອງໃດໜຶ່ງ ຫຼື ຫຼາຍຕົວເມືອງທີ່ຢູ່ຕິດກັນ. ບໍລິການດັ່ງກ່າວ ແມ່ນຈະເປັນໄປຕາມເສັ້ນທາງ ແລະ ຕາຕະລາງ ທີ່ກໍານົດໄວ້ແລ້ວ, ເຊິ່ງອາດຈະມີບໍລິການ ຮັບ ແລະ ສົ່ງ ຜູ້ໂດຍສານ ຕາມຕາຕະລາງ ແລະ ປ້າຍຈອດ ທີ່ກໍານົດໄວ້, ແລະ ເປັນບໍລິການເປີດກ້ວາງແກ່ສາທາລະນະ.

ຂໍ້ຍົກເວັ້ນ: ການຂົນສົ່ງຜູ້ໂດຍສານຕາມເຂດຕົວເມືອງ ແລະ ຊານເມືອງ ດ້ວຍລົດໄຟ ແມ່ນຈັດໃນໝວດ 71112.

### 71212 ການຂົນສົ່ງ ຕາມເຂດຕົວເມືອງ ແລະ ເຂດຊານເມືອງ ແບບພິເສດ

ແມ່ນການຂົນສົ່ງຕາມຕາຕະລາງ ດ້ວຍລົດເມໂຮງຮຽນ ເພື່ອ ຮັບ-ສົ່ງ ນັກຮຽນ ຈາກບ້ານ ຫາ ໂຮງຮຽນ, ລະຫວ່າງ ໂຮງຮຽນ, ແລະ ອື່ນໆ..., ພາຍໃນຂອບເຂດຂອງຕົວເມືອງໃດໜຶ່ງ ຫຼື ຫຼາຍຕົວເມືອງທີ່ຢູ່ຕິດກັນ. ໃນນີ້ ແມ່ນລວມທັງ ການຂົນສົ່ງຕາມຕາຕະລາງ ລະຫວ່າງ ຈຸດໃຈກາງຂອງຕົວເມືອງ ຫາ ສະໜາມບິນ ຫຼື ສະຖານີໂດຍສານຂອງຕົວ ເມືອງນັ້ນໆ ຫຼື ໃນເຂດຊານເມືອງ ໂດຍ ລົດເມ ແລະ ລົດຮັບ-ສົ່ງສະໜາມບິນພິເສດ, ພ້ອມຄົນຂັບລົດ. ບໍລິການເຫຼົ່ານີ້ ແມ່ນຈະແລ່ນໄປຕາມເສັ້ນທາງ ແລະ ຕາຕະລາງ ທີ່ຖືກກຳນົດໄວ້ແລ້ວ, ເຊິ່ງ ລູກຄ້າ ກໍ່ເປັນປະເພດຈຳກັດ ໂດຍແຕ່ລະ ຖ້ຽວ ສ່ວນໃຫຍ່ ແມ່ນຈະເປັນ ການຮັບ ຫຼື ການສົ່ງ ເທົ່ານັ້ນ, ບໍ່ແມ່ນທັງຮັບ ແລະ ສົ່ງ.

ບໍ່ລວມ: ບໍລິການລົດແທັກຊີ ແມ່ນຖືກຈັດໃນໝວດ 71221, ແລະ ບໍລິການລົດເຊົ່າແບບມີຄົນຂັບ ແມ່ນຖືກຈັດໃນໝ ວດ 71222 (ບໍລິການລົດໂດຍສານເຊົ່າແບບມີຄົນຂັບ).

### 71213 ການຂົນສົ່ງລະຫວ່າງຕົວເມືອງແບບປົກກະຕິ

ແມ່ນການຂົນສົ່ງຜູ້ໂດຍສານລະຫວ່າງຕົວເມືອງ ຕາມຕາຕະລາງປົກກະຕິ ດ້ວຍລົດເມ ຜ່ານທາງຫຼວງແຫ່ງຊາດ, ໃນນັ້ນ ຍັງລວມເອົາບໍລິການຂົນສົ່ງຫີບເຄື່ອງຂອງຜູ້ໂດຍສານອີກດ້ວຍ.

### 71214 ການຂົນສົ່ງລະຫວ່າງຕົວເມືອງແບບພິເສດ

ແມ່ນການຂົນສົ່ງຕາມຕາຕະລາງ ດ້ວຍລົດເມໂຮງຮຽນ ເພື່ອ ຮັບ-ສົ່ງ ນັກຮຽນ ຈາກບ້ານ ຫາ ໂຮງຮຽນ, ລະຫວ່າງ ໂຮງຮຽນ, ແລະ ອື່ນໆ..., ຈາກໃຈກາງຕົວເມືອງໜຶ່ງ ຫາໃຈກາງຕົວເມືອງອື່ນ. ໃນນີ້ ແມ່ນລວມທັງ ການຂົນສົ່ງຕາມ ຕາຕະລາງ ລະຫວ່າງ ຈຸດໃຈກາງຂອງຕົວເມືອງ ຫາ ສະໜາມບິນ ຫຼື ສະຖານີໂດຍສານຂອງໃນໃຈກາງເມືອງອື່ນ ໂດຍ ລົດເມ ແລະ ລົດຮັບ-ສົ່ງສະໜາມບິນພິເສດ, ພ້ອມຄົນຂັບລົດ.

### 71219 ພາຫະນະຂົນສົ່ງຜູ້ໂດຍສານຕາມຕາຕະລາງ ແບບອື່ນໆ (n.e.c.)

ແມ່ນພາຫະນະຂົນສົ່ງຜູ້ໂດຍສານ ດ້ວຍການຂົນສົ່ງທາງບົກດ້ວຍເຄື່ອງກົນຈັກ ທີ່ບໍ່ໄດ້ຈັດເຂົ້າໃນໝວດໃດໆ, ເຊັ່ນ: ບໍລິການ ກະເຊົ້າໄຟຟ້າ (cable car), ແລະ ບໍລິການຂົນສົ່ງອື່ນໆ ທີ່ໃຊ້ເຊືອກລາກ ຕາມຕາຕະລາງເວລາ.

## 7122 ພາຫະນະໂດຍສານບໍ່ມີຕາຕະລາງເວລາ

### 71221 ບໍລິການລົດແທັກຊີ

ແມ່ນບໍລິການລົດແທັກຊີ ສຳລັບເຂດຕົວເມືອງ, ເຂດຊານເມືອງ ແລະ ລະຫວ່າງຕົວເມືອງ. ບໍລິການປະເພດນີ້ ໂດຍທົ່ວໄປ ແມ່ນຈະອີງໃສ່ການເກັບຄ່າບໍລິການຕາມໄລຍະທາງຂອງການເດີນທາງ, ໃນໄລຍະເວລາທີ່ຈຳກັດ, ແລະ ໄປຕາມຈຸດໝາຍ ປາຍທາງທີ່ກຳນົດ. ນອກນັ້ນ ຍັງລວມເອົາ ລົດຈັກທີ່ໃຫ້ບໍລິການເປັນລົດແທັກຊີ

ບໍ່ລວມ: ບໍລິການແທັກຊີທີ່ລາກດ້ວຍສັດ ຫຼື ແຮງງານຄົນ ແມ່ນຖືກຈັດໃນ ໝວດ 71224 (ພາຫະນະໂດຍສານທີ່ລາກ ດ້ວຍສັດ ຫຼື ແຮງງານຄົນ).

ບໍລິການແທັກຊີທາງນ້ຳ ແມ່ນຖືກຈັດໃນໝວດ 72219 (ພາຫະນະໂດຍສານແບບອື່ນ), ແລະ ທາງອາກາດ ແມ່ນຖືກຈັດ

ໃນໝວດ 72219 (ພາຫະນະໂດຍສານທາງອາກາດແບບບໍ່ມີຕາຕະລາງເວລາ).

**71222 ບໍລິການລົດເຊົ່າພ້ອມຄົນຂັບ**

ແມ່ນບໍລິການລົດເຊົ່າທີ່ມີຄົນຂັບລົດ ແລະ ເດີນທາງໄປທຸກບ່ອນຕາມທີ່ຜູ້ໂດຍສານຕ້ອງການ, ຍົກເວັ້ນບໍລິການລົດແທັກຊີ. ບໍລິການເຫຼົ່ານີ້ ສ່ວນໃຫຍ່ ແມ່ນຈະເກັບຄ່າບໍລິການຕາມໄລຍະເວລາຂອງການໃຫ້ບໍລິການ ໂດຍຈະຈຳກັດຈຳນວນຜູ້ໂດຍສານ, ແລະ ຈະມີການເດີນທາງໄປຫຼາຍໆບ່ອນ.

**71223 ບໍລິການລົດເຊົ່າລົດເມ ພ້ອມຄົນຂັບ**

ແມ່ນບໍລິການລົດເຊົ່າເມທີ່ມີຄົນຂັບ, ໂດຍສ່ວຍໃຫຍ່ ແມ່ນຈະເກັບຄ່າບໍລິການຕາມໄລຍະເວລາ ແລະ ໄລຍະທາງທີ່ໃຊ້, ແລະ ຈະມີການເດີນທາງໄປຫຼາຍໆບ່ອນ.

**71224 ພາຫະນະໂດຍສານລາກດ້ວຍສັດ ຫຼື ແຮງງານຄົນ**

ແມ່ນພາຫະນະໂດຍສານ ທີ່ລາກດ້ວຍສັດ ຫຼື ແຮງງານຄົນ, ໂດຍບໍລິການດັ່ງກ່າວ ຕ້ອງລວມທັງຜູ້ຂັບ (ຜູ້ບັງຄັບ) ແລະ ສັດທີ່ໃຊ້ລາກ.

<u>ບໍ່ລວມ</u>: ການລຳລຽງເຄື່ອງດ້ວຍສັດ ແມ່ນຖືກຈັດໃນ ໝວດ 83102 (ບໍລິການເໝົາ ຫຼື ເຊົ່າ ພາຫະນະຂົນສົ່ງສິນຄ້າໂດຍບໍ່ມີຄົນຄວບຄຸມ), ແລະ ພາຫະນະເຊົ່າໂດຍສານ ໂດຍທີ່ບໍ່ມີບໍລິການຄົນຂັບ ແມ່ນຖືກຈັດໃນ ໝວດ 83105 (ບໍລິການເໝົາ ຫຼື ເຊົ່າ ອຸປະກອນຂົນສົ່ງທາງບົກອື່ນໆ ໂດຍບໍ່ມີຄົນຄວບຄຸມ).

**71229 ພາຫະນະຂົນສົ່ງຜູ້ໂດຍສານບໍ່ຕາມຕາຕະລາງ ແບບອື່ນໆ**

ແມ່ນພາຫະນະໂດຍສານບໍ່ຕາມຕາຕະລາງ ທີ່ມີຄົນຂັບ, ທີ່ບໍ່ໄດ້ຖືກຈັດເຂົ້າໃນ ໝວດ ໃດໆ.

<u>ບໍ່ລວມ</u>: ລົດເມ, ລົດສອງແຖວ, ລົດທົວ ແລະ ລົດທ່ອງທ່ຽວ ທີ່ບໍ່ແລ່ນຕາຕະລາງເວລາທີ່ແນ່ນອນ ແມ່ນຖືກຈັດເຂົ້າໃນ ໝວດ 71223 (ບໍລິການລົດເມ ຫຼື ລົດຕູ້ ເຊົ່າ ພ້ອມຜູ້ຄວບຄຸມ).

| 117 | **ການຂົນສົ່ງສິນຄ້າ (CPC 7123)** |
|---|---|

**7123** ການຂົນສົ່ງສິນຄ້າ

**71231** ການຂົນສົ່ງຂອງສິນຄ້າແຊ່ແຂງ ຫຼື ສິນຄ້າໃນຕູ້ເຢັນ

ການຂົນສົ່ງທາງລົດສຳລັບສິນຄ້າແຊ່ແຂງຫຼືສິນຄ້າໃນຕູ້ເຢັນ ທີ່ຢູ່ໃນຕູ້ແຊ່ສະເພາະ.

**71232** ການຂົນສົ່ງຂອງແຫຼວ ຫຼື ກ໊າສ

ການຂົນສົ່ງທາງລົດສຳລັບປະເພດຂອງແຫຼວ ຫຼື ກ໊າສ ທີ່ຢູ່ໃນຕູ້ບັນທຸກພິເສດ. ຕູ້ເຫຼົ່ານີ້ອາດຈະເປັນຕູ້ແຊ່.

**71233 ການຂົນສົ່ງຕູ້ຄອນເທນເນີ້**

ການຂົນສົ່ງທາງລົດໄຟສຳລັບສິ່ງຂອງ ແລະ ພັດສະດຸຕ່າງໆຂອງສ່ວນບຸກຄົນ ທີ່ຫຸ້ມຫໍ່ ແລະ ບັນຈຸໃນຕູ້ຄອນເທນເນີ້ເພື່ອຂົນຍ້າຍພິເສດທີ່ຖືກອອກແບບສຳລັບຄວາມງ່າຍຂອງການຈັດການໃນການຂົນສົ່ງ.

**71234 ການຂົນສົ່ງເຄື່ອງເຟີນິເຈີ**

ການຂົນສົ່ງເຟີນິເຈີທາງບົກໃນໄລຍະໄລຍະໃດໜຶ່ງ

ບໍ່ລວມ: ການຂົນສົ່ງເຟີນິເຈີທາງທະເລ ທີ່ຈັດໃນລະຫັດ 72123 (ການຂົນສົ່ງຕູ້ຄອນເທນເນີ້).

**71235 ການຂົນສົ່ງຈົດໝາຍ**

ການຂົນສົ່ງຈົດໝາຍທາງບົກທຸກປະເພດທີ່ບໍ່ແມ່ນລົດໄຟ

**71236 ການຂົນສົ່ງສິນຄ້າໂດຍຄົນ ຫຼື ໃຊ້ສັດເປັນພາຫະນະລາກແກ່**

ການຂົນສົ່ງສິນຄ້າໂດຍຄົນ ຫຼື ໃຊ້ສັດເປັນພາຫະນະລາກແກ່

**71239** ການຂົນສົ່ງສິນຄ້າອື່ນໆ

ການຂົນສົ່ງທາງບົກທຸກປະເພດທີ່ບໍ່ແມ່ນລົດໄຟສຳລັບສິນຄ້າ ທີ່ບໍ່ໄດ້ຈັດຢູ່ໃນປະເພດໃດ.

| 118 | **ການບໍລິການໃຫ້ເຊົ່າຍານພາຫະນະຂົນສົ່ງທາງການຄ້າກັບຜູ້ປະກອບການ (CPC 7124)** |
|---|---|

**7124 71240 ການບໍລິການໃຫ້ເຊົ່າຍານພາຫະນະຂົນສົ່ງສິນຄ້າທາງການຄ້າກັບຜູ້ປະກອບການ**

ການບໍລິການໃຫ້ເຊົ່າລົດບັນທຸກ ແລະ ບໍລິການເຄື່ອງຈັກຍານພາຫະນະຂົນສົ່ງສິນຄ້າອື່ນໆ ພ້ອມຄົນຂັບ.

ບໍ່ລວມ: ການຂົນສົ່ງສິນຄ້າໂດຍໃຊ້ສັດເປັນພາຫະນະລາກແກ່ການ ພ້ອມຄົນຂັບທີ່ຈັດຢູ່ໃນລະຫັດ 71236 (ຂົນສົ່ງສິນຄ້າໂດຍຄົນ ຫຼື ໃຊ້ສັດເປັນພາຫະນະລາກແກ່)

ການບໍລິການໃຫ້ເຊົ່າໃນການເຊື່ອມຕໍ່ກັບລູກຄ້າທີ່ຂັບລົດບັນທຸກ ແມ່ນຈັດຢູ່ໃນລະຫັດ 83102 (ບໍລິການໃຫ້ເຊົ່າຫຼືການເຊົ່າທີ່ກ່ຽວຂ້ອງກັບຍານພາຫະນະການຂົນສົ່ງສິນຄ້າທີ່ບໍ່ແມ່ນກັບຜູ້ປະກອບການ).

| 119 | **ບຳລຸງຮັກສາແລະສ້ອມແປງອຸປະກອນການຂົນສົ່ງທາງບົກ (CPC 6112+8867)** |
|---|---|

**6112 61120 ການບໍລິການດ້ານການບຳລຸງຮັກສາ ແລະ ສ້ອມແປງພາຫະນະລົດໃຫຍ່ທີ່ໃຊ້ຈັກມໍເຕີ້**

ການບໍລິການບຳລຸງຮັກສາແລະສ້ອມແປງລົດໃຫຍ່. ການບໍລິການດັ່ງກ່າວອາດຈະມີການຍົກເຄື່ອງຈັກ, ປັບເຄື່ອງຈັກຂຶ້ນ, ການສ້ອມແປງ ແລະ ການປັບ ຄາບູເລເຕີ (carburettor), ການບໍລິການສ້ອມແປງລະບົບໄຟຟ້າ ແລະ ສາກໝໍ້ໄຟ, ການສ້ອມແປງແລະການປັບເກຍພວງມະໄລ, ການປັບລໍ້, ການສ້ອມແປງຊ່ວງລ່າງ, ການສ້ອມແປງ ແລະ ການປັບເບກ, ການສ້ອມແປງ ແລະ ການດັດປັບລະບົບສາຍສົ່ງ, ການສ້ອມແປງລະບົບທໍ່ອາຍເສຍ, ສ້ອມແປງລະບົບລະບາຍຄວາມຮ້ອນ ລວມທັງການປ່ຽນທໍ່ນ້ຳ ແລະ ການບໍລິການບຳລຸງຮັກສາ ແລະສ້ອມແປງອື່ນໆຂອງລົດ.

ການບໍລິການສ້ອມແປງຮ່າງຂອງລົດໃຫຍ່ ແລະ ການບໍລິການທີ່ຄ້າຍຄືກັນ. ບໍລິການດັ່ງກ່າວອາດຈະມີການບໍ ລິການສ້ອມແປງປະຕູ ແລະ ລັອກ, ກັນຊົນ, ເຄາະ, ພົ່ນສີ, ສ້ອມແປງເບາະ ແລະ ໜ້າຈໍປ່ອງຢ້ຽມ, ປ່ຽນປ່ອງຢ້ຽມ ແລະ ການບໍລິການສ້ອມແປງຮ່າງອື່ນໆຂອງລົດໃຫຍ່.

ໃນນີ້ລວມເອົາການບໍລິການສ້ອມແປງລົດໃຫຍ່ສຸກເສີນຕາມຖະໜົນຫົນທາງ ແລະ ການບໍລິການທາຄວາມສະອາດ ແລະ

ການບໍລິການບໍາລຸງຮັກສາເປັນປົກກະຕິ, ເຊັ່ນ: ການບໍລິການລ້າງ, ຂັດ, ເຄືອບ ແລະ ແວັກລົດແລະອື່ນໆ.

ບໍ່ລວມ: ການບໍລິການສ້ອມແປງ ເຈາະ ທີ່ຈັດຢູ່ໃນລະຫັດນີ້, ແຕ່ວ່າການປ່ຽນຕີນລົດ ແມ່ນຈັດໃນລະຫັດ 36120.

| 120 | ການບໍລິການເສີມສໍາລັບການບໍລິການການຂົນສົ່ງທາງບົກ (CPC 744) |
|---|---|

**744 ການບໍລິການເສີມສໍາລັບການຂົນສົ່ງທາງບົກ**

**7441 74410 ການບໍລິການສະຖານີລົດເມ**

ການບໍລິການອາຄານຜູ້ໂດຍສານສາລັບການຂົນສົ່ງຜູ້ໂດຍສານທາງລົດເມໃນການເຊື່ອມຕໍ່ກັບຕົວເມືອງ, ຊານເມືອງ ແລະ ໃນຕົວເມືອງ, ບົນພື້ນຖານຄ່າບໍລິການຫຼືການເຮັດສັນຍາ.

ບໍ່ລວມ: ການບໍລິການສໍາພາລະ ແລະ ການຈັດການຂົນສົ່ງສິນຄ້າ ທີ່ຈັດໃນລະຫັດ 74190 (ການບໍລິການຈັດການຂົນສົ່ງສິນຄ້າອື່ນໆ).

**7442 74420 ການບໍລິການທາງດ່ວນ, ຂົວ ແລະ ອຸໂມງ**

ການບໍລິການອານວຍຄວາມສະດວກໃນການດໍາເນີນງານກັບທີ່, ເຊັ່ນ: ຖະໜົນຫົນທາງ, ອຸໂມງ, ຂົວ ແລະ ທາງຫຼວງ, ບົນພື້ນຖານຄ່າບໍລິການຫຼືການເຮັດສັນຍາ.

ບໍ່ລວມ: ການບໍລິການສະຖານທີ່ບ່ອນຈອດລົດທີ່ຈັດໃນລະຫັດ 74430 (ບໍລິການສະຖານທີ່ຈອດລົດ).

**7443 74430 ບໍລິການສະຖານທີ່ຈອດລົດ**

ການບໍລິການບ່ອນຈອດລົດທີ່ສະໜອງບ່ອນຈອດລົດ, ອູ່ຈອດລົດ, ແບບມີຫຼັງຄາ ຫຼືບໍ່ມີຫຼັງຄາ.

**7449 74490 ການບໍລິການເສີມອື່ນໆສໍາລັບການຂົນສົ່ງທາງບົກ**

ການບໍລິການບໍາລຸງຮັກສາພາຫະນະທາງການຄ້າ ແລະ ການບໍລິການສ້ອມແປງນ້ອຍ, ບົນພື້ນຖານຄ່າບໍລິການຫຼືການເຮັດສັນຍາ, ແລະ ການບໍລິການເສີມອື່ນໆສໍາລັບການຂົນສົ່ງທາງບົກ, ທີ່ບໍ່ໄດ້ກໍານົດຢູ່ບ່ອນອື່ນ.

G. ການຂົນສົ່ງຜ່ານທໍ່

| 121 | ການຂົນສົ່ງນໍ້າມັນເຊື້ອໄຟ (CPC 7131) |
|---|---|

7131 71310 **ການຂົນສົ່ງນໍ້າມັນ ແລະ ອາຍແກັສທໍາມະຊາດ**

ແມ່ນການຂົນສົ່ງນໍ້າມັນດິບ ຫຼື ນໍ້າມັນກັ່ນ, ນໍ້າມັນເຊື້ອໄຟ ແລະ ແກັສທໍາມະຊາດ ຜ່ານທໍ່.

| 122 | ການຂົນສົ່ງສິນຄ້າອື່ນໆ (CPC 7139) |
|---|---|

7139 71390 **ການຂົນສົ່ງສິນຄ້າອື່ນໆ**

ແມ່ນການຂົນສົ່ງຜະລິດຕະພັນທາງເຄມີ ຜ່ານທໍ່, ເຊັ່ນ: ສານ ethylene, ຖ່ານຫີນ ແລະ ອື່ນໆ ທີ່ບໍ່ໄດ້ຖືກຈັດເຂົ້າໃນໝ

ວດອື່ນ.

**H. ບໍລິການເສີມສຳລັບທຸກປະເພດການຂົນສົ່ງ**

| 123 | ບໍລິການຂົນຖ່າຍສິນຄ້າ (CPC 741) |
|---|---|

**741 ບໍລິການຂົນຖ່າຍສິນຄ້າ**

**7411 74110 ບໍລິການຈັດການຕູ້ສິນຄ້າ (ຕູ້ຄອນເທນເນີ)**

ແມ່ນບໍລິການຂົນຖ່າຍສິນຄ້າສຳລັບ ສິນຄ້າໃນຕູ້ຄອນເທນເນີສະເພາະ. ໃນນີ້ ແມ່ນຈະລວມເອົາ ອາຄານສາງສິນຄ້າ, ພາຍໃຕ້ແບບສັນຍາມອບເໝົາ ຫຼື ແບບເສຍຄ່າທຳນຽມ, ສຳລັບທຸກປະເພດຂອງການຂົນສົ່ງ ລວມທັງ ແຮງງານຄົນຂົນເຄື່ອງ (ສາລັບຂົນຂຶ້ນ, ຂົນລົງ, ແລະ ຂົນຕູ້ສິນຄ້າລົງຈາກເຮືອ ທີ່ທ່າເຮືອ).

**7419 74190 ບໍລິການຂົນຖ່າຍສິນຄ້າແບບອື່ນໆ**

ແມ່ນບໍລິການຂົນຖ່າຍສິນຄ້າ ສຳລັບສິນຄ້າທີ່ບໍ່ບັນຈຸໃນຕູ້ຄອນເທນເນີ ຫຼື ສຳລັບຫີບເຄື່ອງຂອງຜູ້ໂດຍສານ. ໃນນີ້ ແມ່ນລວມເອົາ ອາຄານສາງສິນຄ້າ, ພາຍໃຕ້ແບບສັນຍາມອບເໝົາ ຫຼື ແບບເສຍຄ່າທຳນຽມ, ສຳລັບທຸກປະເພດຂອງການຂົນສົ່ງ ລວມທັງ ແຮງງານຄົນຂົນເຄື່ອງ (ສຳລັບຂົນຂຶ້ນ, ຂົນລົງ, ແລະ ຂົນສິນຄ້າທີ່ບໍ່ບັນຈຸໃນຕູ້ຄອນເທນເນີ ລົງຈາກເຮືອ ທີ່ທ່າເຮືອ), ແລະ ບໍລິການຂົນຖ່າຍສິນຄ້າ ທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າ, ທີ່ບໍ່ໄດ້ຈັດເຂົ້າໃນໝວດອື່ນໃດ. ພ້ອມນີ້ ຍັງລວມເອົາ ບໍລິການຂົນຍ້າຍຫີບເຄື່ອງທີ່ສະໜາມບິນ, ສະຖານີລົດໂດຍສານ, ແລະ ສະຖານີລົດໄຟອີກດ້ວຍ.

ບໍ່ລວມ: ບໍລິການເສີມອື່ນໆ ທີ່ກ່ຽວຂ້ອງກັບປະເພດໃດໜຶ່ງຂອງການຂົນສົ່ງ ແມ່ນຈັດໃນໝວດ 74300 ສຳລັບການຂົນສົ່ງທາງລົດລາງຫຼືລົດໄຟ, ໝວດ 74490 ສຳລັບການຂົນສົ່ງທາງຖະໜົນ, ໝວດ 74590 ສຳລັບການຂົນສົ່ງທາງນໍ້າ, ແລະ ໝວດ 74690 ສຳລັບການຂົນສົ່ງທາງອາກາດ.

| 124 | ການບໍລິການເກັບຮັກສາ ແລະ ສາງ (CPC 742) |
|---|---|

**742 ການບໍລິການເກັບຮັກສາ ແລະ ສາງ**

**7421 74210 ການບໍລິການເກັບຮັກສາສິນຄ້າແຊ່ແຂງ ຫຼື ແຊ່ເຢັນ**

ການບໍລິການເກັບຮັກສາ ແລະ ສາງສຳລັບສິນຄ້າແຊ່ແຂງ ຫຼື ແຊ່ເຢັນ, ລວມທັງຜະລິດຕະພັນສະບຽງອາຫານທີ່ເນົ່າເສຍງ່າຍ.

7422 74220 ການບໍລິການເກັບຮັກສາຂອງແຫຼວ ຫຼື ກ໊າສ

ການບໍລິການເກັບຮັກສາຂອງແຫຼວ ຫຼື ກ໊າສ

**7429 74290 ການບໍລິການເກັບຮັກສາຫຼືສາງອື່ນໆ**

ການບໍລິການເກັບຮັກສາຫຼືສາງສິນຄ້າອື່ນໆ ເຊັ່ນ: ຝ້າຍ, ເມັດພືດ, ຂົນສັດ, ຢາສູບ, ຜະລິດຕະພັນກະສິກຳອື່ນໆ, ແລະ ສິນຄ້າໃນຄົວເຮືອນອື່ນໆ.

| | |
|---|---|
| 125 | **ການບໍລິການຂອງໜ່ວຍງານຂົນສົ່ງສິນຄ້າ (CPC 748)** |

**7480 74800 ການບໍລິການຂອງໜ່ວຍງານຂົນສົ່ງສິນຄ້າ**

ບໍລິການນາຍຫນ້າຂົນສົ່ງສິນຄ້າ, ການບໍລິການສົ່ງຕໍ່ສິນຄ້າ (ໂດຍສະເພາະແມ່ນການບໍລິການຂົນສົ່ງ ຫຼື ການຈັດໃນນາມຂອງຜູ້ສົ່ງຫຼືຜູ້ຮັບສິນຄ້າ), ການບໍລິການນາຍຫນ້າຂົນສົ່ງທາງເຮືອ ແລະ ຍົນ ແລະ ການຮອບຮອມ ແລະ ການແບ່ງກຸ່ມບໍລິການຂົນສົ່ງສິນຄ້າ.

| | |
|---|---|
| 126 | **ອື່ນໆ (CPC 749)** |

**7490 74900 ບໍລິການເສີມອື່ນໆສໍາລັບການຂົນສົ່ງ**

ບໍລິການນາຍໜ້າຂົນສົ່ງສິນຄ້າ; ບໍລິການກວດສອບໃບບິນ ແລະ ຂໍ້ມູນອັດຕາຄ່າຂົນສົ່ງ; ບໍລິການກະກຽມເອກະສານຂົນສົ່ງ; ບໍລິການຫໍ່ເຄື່ອງ, ບັນຈຸເຄື່ອງ, ແກະຫໍ່, ແລະ ແກະກ່ອງ; ບໍລິການກວດສອບຂົນສົ່ງສິນຄ້າ, ຊັ່ງນໍ້າໜັກ ແລະ ກວດສອບຕົວຢ່າງ; ແລະ ບໍລິການຮັບ ແລະ ຍອມຮັບ ສິນຄ້າ (ລວມທັງບໍລິການ ຮັບ-ສົ່ງ ຮອດສະຖານທີ່).

| | |
|---|---|
| 127 | **I. ບໍລິການຂົນສົ່ງປະເພດອື່ນ** |
| 128 | **ບໍລິການອື່ນໆທີ່ບໍ່ມີຢູ່ບ່ອນອື່ນ (CPC 95+97+98+99)** |

**ພາກທີ 95 ການໃຫ້ບໍລິການຂອງອົງການທີ່ເປັນສະມາຊິກ**

ການບໍລິການໂດຍອົງການທີ່ເປັນສະມາຊິກໃຫ້ແກ່ສາທາລະນະທົ່ວໄປ ຫຼື ທຸລະກິດອື່ນໆ ທີ່ໄດ້ຈັດປະເພດຕາມການບໍລິການຫຼັກ ທີ່ປະກອບມີ (ເຊັ່ນ: ການບໍລິການທີ່ພັກ, ການປະກັນໄພ, ການສຶກສາ ຫຼືການບໍລິການດ້ານການປິ່ນປົວ).

**951 ການໃຫ້ບໍລິການໂດຍທຸລະກິດ, ນາຍຈ້າງ ແລະ ອົງການທີ່ເປັນມືອາຊີບ**

**9511 95110 ການໃຫ້ບໍລິການໂດຍທຸລະກິດ, ນາຍຈ້າງ ແລະ ອົງການ**

ການບໍລິການເຜີຍແຜ່ຂໍ້ມູນຂ່າວສານ, ການບໍລິການເປັນຕົວແທນກ່ອນອົງການລັດຖະບານ, ການບໍລິການປະ ຊາສໍາພັນ, ການບໍລິການເຈລະຈາດ້ານແຮງງານ ແລະ ບໍລິການອື່ນໆ ທີ່ສະໜອງໂດຍສະມາຄົມ ທີ່ມີສະມາຊິກເປັນໃຈກາງທີ່ມີຄວາມສົນໃຈໃນການພັດທະນາ ແລະ ສະຫວັດດີການຂອງທຸລະກິດ ຫຼື ການຄ້າທົ່ວໄປ ຫຼື ຂອງສາຍສະເພາະ.

ບໍ່ລວມ: ການບໍລິການປະຊາສພັນໂດຍບຸກຄົນອື່ນ, ແບບເກັບຄ່າທໍານຽມ ຫຼື ໂດຍມີສັນຍາ, ໃນນາມຂອງສະມາຄົມທີ່ຈັດຢູ່ໃນລະຫັດ 86506 (ການບໍລິການປະຊາສໍາພັນ).

**9512 95120 ການໃຫ້ບໍລິການໂດຍອົງການທີ່ເປັນມືອາຊີບ**

ການບໍລິການເຜີຍແຜ່ຂໍ້ມູນຂ່າວສານ, ການບໍລິການການພັດທະນາ ແລະ ຄວບຄຸມມາດຕະຖານຂອງການປະຕິ ບັດສໍາລັບ

ການປະກອບອາຊີບສະເພາະ, ການບໍລິການເປັນຕົວແທນກ່ອນອົງການລັດຖະບານ ແລະການບໍລິການປະຊາສໍາພັນ, ບໍລິການອື່ນໆທີ່ສະໜອງໂດຍສະມາຄົມທີ່ມີສະມາຊິກເປັນໃຈກາງທີ່ມີຄວາມສົນໃຈໃນລະບຽບວິໄນຕ່າງໆ ຫຼື ການປະຕິບັດທີ່ເປັນມືອາຊີບທາງດ້ານວິຊາການທົ່ວໄປຫຼືຂອງພາກສະໜາມສະເພາະ.

**952 ການໃຫ້ບໍລິການໂດຍສະຫະພັນກໍາມະບານ**

**9520 95200 ການໃຫ້ບໍລິການໂດຍສະຫະພັນກໍາມະບານ**

ການບໍລິການເປັນຕົວແທນປະກອບທັດສະນະຂອງສະມາຊິກກ່ຽວກັບສະຖານະການການເຮັດວຽກ ແລະການບໍລິການຂອງອົງກອນສໍາລັບການປະຕິບັດທີ່ເປັນຮູບປະທໍາທີ່ສະໜອງໂດຍສະມາຄົມທີ່ມີສະມາຊິກສ່ວນໃຫຍ່ເປັນພະນັກງານ.

**959 ການໃຫ້ບໍລິການໂດຍອົງກອນທີ່ເປັນສະມາຊິກທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ**

**9591 95910 ການບໍລິການທາງສາສະໜາ**

ການບໍລິການນະມັດສະການ, ເຝິກອົບຮົມ, ແລະ ການສຶກສາທາງສາສະໜາ ສະໜອງໂດຍກົງໃຫ້ແກ່ຜູ້ທີ່ນັບຖືໂດຍໂບດ, ມັດສະຢິບ, ວັດ, ທໍາມະສາລາ ແລະ ສານພະພູມອື່ນໆ, ແລະໂດຍບັນຊີຂອງລັດຖະມົນຕີສາສະໜາ. ການບໍລິການນັບຖືສາສະໜາທົ່ວໄປ, ການບໍລິການປະກາດ ແລະ ເຜີຍແຜ່ສາດສະໜາ, ການບໍລິການທາງສາ ສະໜາພິເສດເຊັ່ນ: ການບໍລິການແຕ່ງງານ, ການບໍລິການງານສົບ, ການບໍລິການການຢັ້ງຢືນ, ພິທີລ້າງບາບ ແລະ ພິທີການທາງສາດອື່ນໆ. ການບໍລິການທາງສາສະໜາທີ່ລວມທັງການບໍລິການທີ່ພັກສະໜອງໂດຍເຮືອນຂອງສາສະໜາຕາມຄໍາສັ່ງສອນ. ການບໍລິການທີ່ກ່ຽວຂ້ອງກັບສາສະໜາແລະການບໍລິການທາງສາສະໜາທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ.

**9592 95920 ການບໍລິການສະໜອງໂດຍອົງການຈັດຕັ້ງທາງດ້ານການເມືອງ**

ການບໍລິການເຜີຍແຜ່ຂໍ້ມູນຂ່າວສານ, ບໍລິການປະຊາສໍາພັນ, ການບໍລິການລະດົມທຶນ ແລະ ການບໍລິການທີ່ຄ້າຍ ຄືກັນ ທີ່ສະໜອງໂດຍພັກການເມືອງ ແລະ ອົງການຈັດຕັ້ງທີ່ຄ້າຍຄືກັນ ທີ່ກ່ຽວຂ້ອງກັບພັກການເມືອງ ຫຼື ຜູ້ສະໝັກ. ອົງການຈັດຕັ້ງເຫຼົ່ານີ້ແມ່ນໄດ້ມີສ່ວນຮ່ວມຫຼາຍໃນການວາງສະມາຊິກຂອງພັກ, ຫຼືຜູ້ທີ່ເຫັນດີກັບບຸກຄົນທີ່ຢູ່ໃນຕໍາແໜ່ງທາງການເມືອງ.

**9599 ການໃຫ້ບໍລິການຂອງອົງການທີ່ເປັນສະມາຊິກອື່ນໆທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ**

**95991 ການບໍລິການເທດສະບານ ແລະ ບໍລິການການສະໜັບສະໜູນສິ່ງອໍານວຍຄວາມສະດວກໃຫ້ແກ່ຊຸມຊົນ**

ການບໍລິການສະໜອງໂດຍສະມາຄົມເທດສະບານ ແລະ ອົງການຈັດຕັ້ງທີ່ຄ້າຍຄືກັນ ທີ່ປະກອບດ້ວຍບຸກຄົນຜູ້ທີ່ຮ່ວມໂຕກັນສໍາລັບຈຸດປະສົງຂອງບັນຫາຂອງສາທາລະນະ ຫຼື ດ້ວຍວິທີການຂອງການສຶກສາສາທາລະນະ, ອິດທິພົນທາງດ້ານການເມືອງ, ແລະອື່ນໆ. ນອກນັ້ນ ຍັງມີການບໍລິການສະໜອງໂດຍສະມາຄົມສໍາລັບການສະໜັບສະໜູນສິ່ງອໍານວຍຄວາມສະດວກແກ່ຊຸມຊົນ, ສັງຄົມ ແລະ ການສຶກສາ.

**95992 ການບໍລິການສະໜັບສະໜູນກຸ່ມພິເສດ**

ການບໍລິການສະໜອງໂດຍສະມາຄົມສໍາລັບການປົກປັກຮັກສາກຸ່ມພິເສດ ແລະ ເຮັດໃຫ້ດີຂຶ້ນ, ເຊັ່ນ: ຊົນເຜົ່າແລະ ຊົນກຸ່ມນ້ອຍ.

**95993 ການບໍລິການສະໜອງໂດຍສະມາຄົມຊາວໜຸ່ມ**

ການບໍລິການສະໜອງໂດຍສະມາຄົມຊາວໜຸ່ມແລະເດັກນ້ອຍ. ການບໍລິການຂອງເດັກນ້ອຍຊາຍ, ຍິງ ແລະສະມາຄົມທີ່ຄ້າຍຄືກັນ, ແລະ ສະມາຄົມນັກສຶກສາ, ສະໂມສອນ ແລະ ຄະນະ.

**95999 ບໍລິການອື່ນໆສະໜອງໂດຍອົງການຈັດຕັ້ງເປັນສະມາຊິກ ທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ**

ການບໍລິການໂດຍສັງຄົມພີ່ນ້ອງ ແລະ ອົງການຈັດຕັ້ງທີ່ຄ້າຍຄືກັນ, ການບໍລິການສະມາຄົມຮັກຊາດ, ການບໍລິການສະໂມສອນວັດທະນະທຳ, ນັນທະນາການທີ່ບໍ່ແມ່ນກິລາ ແລະ ການບໍລິການສັງຄົມ ແລະ ຊຸມຊົນທີ່ກ່ຽວຂ້ອງ, ທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ.

ບໍ່ລວມ: ການບໍລິການຂອງສະໂມສອນກິລາ ແມ່ນຈັດຢູ່ໃນລະດັບ 9641 (ການບໍລິການກິລາ).

**ພາກທີ 97 ການບໍລິການອື່ນໆ**

**970 ການບໍລິການອື່ນໆ**

**9701 ການບໍລິການຊັກເຄື່ອງ, ທຳຄວາມສະອາດ, ແລະ ການຍ້ອມສີ**

**97011 ການບໍລິການຊັກລີດ**

ການບໍລິການຊັກລີດທີ່ກ່ຽວຂ້ອງກັບການຮັບຫຼືສົ່ງເຄື່ອງນຸ່ງຫົ່ມໂດຍບໍ່ມີການບໍລິການປະຕິບັດວຽກກັບທີ່ຫຼືທຳຄວາມສະອາດ.

**97012 ການບໍລິການທຳຄວາມສະອາດແຜ່ນແພ ແລະ ຜະລິດຕະພັນຂົນ**

ການບໍລິການລ້າງແລະທຳຄວາມສະອາດອື່ນໆ ຍົກເວັ້ນການຊັກແຫ້ງເຄື່ອງແຕ່ງກາຍ ແລະແຜ່ນແພອື່ນໆ, ລວມທັງຊຸດຊັ້ນໃນ,ເສື້ອ, ຜ້າກັ້ງ, ຜ້າປູໂຕະ, ຜ້າປູບ່ອນ ແລະ ພົມປູພື້ນ. ການບໍລິການດັ່ງກ່າວສາມາດໄດ້ຮັບການປະຕິບັດໃນສະຖານທີ່ຂອງລູກຄ້າ. ອາດຈະປະກອບມີການສະໜອງຈັກຊັກຜ້າທີ່ໃຊ້ຫຼຽນ ທີ່ລູກຄ້ານຳໃຊ້ຊັກເອງ. ລວມທັງການຊັກ ແລະ ໃຫ້ເຊົ່າແຜ່ນແພ, ເຊັ່ນ: ຜ້າ, ຜ້າປູບ່ອນ ແລະ ເຄື່ອງແບບເຮັດວຽກອຸດສາຫະກຳຕ່າງໆ.

**97013 ການບໍລິການຊັກແຫ້ງ**

ການບໍລິການຊັກແຫ້ງເຄື່ອງແຕ່ງກາຍ ແລະ ແຜ່ນອື່ນໆ. ການບໍລິການດັ່ງກ່າວອາດຈະປະກອບມີການສະໜອງຈັກຊັກຜ້າທີ່ໃຊ້ຫຼຽນ ທີ່ລູກຄ້ານຳໃຊ້ຊັກເອງ.

**97014 ການບໍລິການດ້ານການລີດ**

ການບໍລິການດ້ານການລີດເຄື່ອງນຸ່ງຫົ່ມ ແລະ ແຜ່ນແພອື່ນໆ, ລວມທັງ ຜ້າປູໂຕະ ແລະ ຜ້າປູບ່ອນພາຍຫຼັງທີ່ຜ່ານຂັ້ນຕອນການທຳຄວາມສະອາດແລ້ວ.

**97015 ການບໍລິການດ້ານການຍ້ອມ ແລະ ໃສ່ສີ**

ການບໍລິການດ້ານການຍ້ອມ ແລະ ໃສ່ສີເຄື່ອງນຸ່ງຫົ່ມ ແລະ ແຜ່ນແພອື່ນໆ.

ບໍ່ລວມ: ການບໍລິການດ້ານການຍ້ອມ ແລະ ໃສ່ສີ ເສັ້ນດ້າຍ ແລະ ເຄື່ອງນຸ່ງຫົ່ມແມ່ນຈັດໃນລະຫັດ 8842 (ການຜະລິດແຜ່ນແພ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໜັງ ແບບເກັບຄ່າບໍລິການ ຫຼື ການເຮັດສັນຍາ).

**9702 ການບໍລິການຕົບແຕ່ງຜົມ ແລະ ຄວາມງາມອື່ນໆ**

**97021 ການບໍລິການຕົບແຕ່ງຜົມ ແລະ ການບໍລິການຮ້ານຕັດຜົມ**

ການບໍລິການຕັດຜົມ ແລະ ການບໍລິການຕົບແຕ່ງຜົມ ສຳລັບຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ, ລວມທັງການແຖໜ້າ ແລະ ການດູແລໜວດ.

**97022 ການບໍລິການດ້ານການເສີມຄວາມງາມ, ບໍລິການເຮັດເລັບຕີນ ແລະ**

ການບໍລິການຮັກສາຜິວໜ້າ ແລະ ເສີມຄວາມງາມ, ເຄື່ອງສຳອາງ, ບໍລິການເຮັດເລັບຕີນ ແລະ ເລັບມື.

**97029 ການບໍລິການເສີມຄວາມງາມອື່ນໆ ທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ**

ການບໍລິການສຸຂະອະນາໄມສ່ວນບຸກຄົນ, ການດູແລຮ່າງກາຍ, ຂັດ, ການນວດທີ່ບໍ່ລວມການນວດແບບບຳບັດ, ການປິ່ນປົວດ້ວຍລັງສີອຸນຕ້າໄວໂອເລດ (ultraviolet) ແລະ ລັງສີອິນຟາເລດ (infra-red), ອົບຜິວສີແທນ ແລະການບໍລິການສຸຂະອະນາໄມອື່ນໆ.

**9703 97030 ການບໍລິການດ້ານການຈັດງານສົບ, ຊາປະນະກິດສົບ ແລະ ການດຳເນີນການ**

ການຈັດງານສົບ, ຊາປະນະກິດສົບ ແລະ ພິທີງານສົບຕາມຮີດຄອງປະເພນີ. ການບໍລິການບຳລຸງຮັກສາຂອງປ່າຊ້າ, ການເບິ່ງແຍງສຸສານ, ການຂົນສົ່ງສົບ, ການບໍລິການເຄື່ອນສົບ.

**9709 97090 ການບໍລິການອື່ນໆ ທີ່ບໍ່ໄດ້ລະບຸຢູ່ບ່ອນອື່ນ**

**ພາກທີ 98 ຄົວເຮືອນເອກະຊົນທີ່ມີການຈ້າງຄົນເຮັດວຽກ**

**980 ຄົວເຮືອນເອກະຊົນທີ່ມີການຈ້າງຄົນເຮັດວຽກ**

**9800 98000 ຄົວເຮືອນເອກະຊົນທີ່ມີການຈ້າງຄົນເຮັດວຽກ**

ການບໍລິການທີ່ສະໜອງໂດຍຄົວເຮືອນສ່ວນຕົວທີ່ມີຄວາມສາມາດຈ້າງຄົນເຮັດວຽກໃຫ້ທຸກປະເພດໃນຄົວເຮືອນເຊັ່ນແມ່ບ້ານ, ປຸງແຕ່ງອາຫານ, ເອື້ອຍລ້ຽງ, ແລະ ຄູ.

ບໍ່ລວມ: ໜ່ວຍງານເອກະລາດ (ລວມທັງບຸກຄົນ) ທີ່ໃຫ້ບໍລິການໃຫ້ແກ່ຄົວເຮືອນທີ່ໄດ້ກຳນົດໂດຍອີງຕາມກົດຈະກຳຫຼັກ.

ພາກທີ 99 ການບໍລິການທີ່ສະໜອງໂດຍອົງການຈັດຕັ້ງ ແລະ ໜ່ວຍງານພິເສດລະຫວ່າງປະເທດ

990 ການບໍລິການທີ່ສະໜອງໂດຍອົງການຈັດຕັ້ງ ແລະ ໜ່ວຍງານພິເສດລະຫວ່າງປະເທດ

9900 99000 ການບໍລິການທີ່ສະໜອງໂດຍອົງການຈັດຕັ້ງ ແລະ ໜ່ວຍງານພິເສດລະຫວ່າງປະເທດ

ການບໍລິການທີ່ສະໜອງໂດຍອົງການສະຫະປະຊາຊາດ, ໜ່ວຍງານສະເພາະຂອງອົງການສະຫະປະຊາຊາດ, ອົງການຈັດຕັ້ງພາກພື້ນ ແລະ ອື່ນໆ, ອົງການຈັດຕັ້ງຂອງສະຫະລັດອາເມລິກາ, ສະພາສໍາລັບການຊ່ວຍເຫຼືອເຊິ່ງກັນແລະກັນທາງດ້ານເສດຖະກິດ, ປະຊາຄົມເອີຣົບ, ອົງການເພື່ອການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ, ອົງການຈັດຕັ້ງເພື່ອຄວາມສາມັກຄີຂອງອາຟຣິກາ, ສະຫະພັນຂອງບັນດາລັດອາຣັບ, ສະພາການຮ່ວມມືດ້ານພາສີ, ອົງການຂອງບັນດາປະເທດທີ່ຜະລິດແລະສົ່ງອອກນໍ້າມັນ ແລະ ອົງການຈັດຕັ້ງສາກົນອື່ນໆ ຫຼື ໜ່ວຍງານລະຫວ່າງປະເທດອື່ນໆ.